# ການອົບຮົມ
# “ຕາມຢ່າງພຣະເຢຊູ”

## ການສ້າງສາວົກເບື້ອງຕົ້ນ

…ສ້າງສາວົກໃຫ້ຢູ່ໃນກະແສການຕັ້ງຄຣິດສ໌ຈັກ…

**ດານຽນ ບີ ແລນຄາສເຕີ**

**ດັບເບີ້ນຢູ ໄອ ຈີ ເທຄ**

## ຄຳນຳ

“..ແລະສອນພວກເຂົາໃຫ້ປະຕິບັດຕາມທຸກສິ່ງທີ່ເຮົາໄດ້ສັ່ງພວກທ່ານໄວ້..”

ຄຳລົງທ້າຍພຣະມະຫາບັນຊາເຫລົ່ານີ້ຍັງຄົງມີຄວາມສຳຄັນແລະເປັນຄຳທ້າທາຍສຳລັບພວກເຮົາໃນທຸກວັນນີ້ຢ່າງດຽວກັນກັບເມື່ອ 2000 ປີທີ່ຜ່ານມາທີ່ພຣະຄຣິດຊົງສັ່ງກັບພວກເຂົາເປັນຄັ້ງທຳອິດ ການປະຕິບັດຕາມທຸກສິ່ງທີ່ພຣະຄຣິດຊົງສັ່ງໄວ້ມີຄວາມໝາຍຢ່າງໃດ? ອັກຄະທູດ ໂຢຮັນ ໄດ້ກ່າວໄວ້ວ່າຖ້າຫາກເຮົາຈຳເປັນຕ້ອງບັນທຶກທຸກສິ່ງທີ່ພຣະເຢຊູຊົງສັ່ງແລະຊົງກະທຳການ ຂ້າພະເຈົ້າຄາດວ່າໝົດທັງໂລກກໍບໍ່ມີບ່ອນພໍໄວ້ໜັງສືທີ່ຈະຂຽນນັ້ນ ( ໂຢຮັນ 21:25 )  ທີ່ດຽວທີ່ພຣະເຢຊູມີບາງສິ່ງໃນໃຈທີ່ສັ້ນກະທັດຮັດຫລາຍກວ່າໃນສ່ວນທຳອິດຂອງການອົບຮົມ "ຕາມຢ່າງພຣະເຢຊູ" ຫົວຂໍ້ການສ້າງສາວົກເບື້ອງຕົ້ນ   ດຣ.ແດນ ແລນຄາສເຕີ ໄດ້ວາດພາບກ່ຽວກັບພຣະກິດຕິຄຸນຂອງພຣະເຢຊູໄວ້ 8 ພາບສຳລັບການຮຽນແບບເຊິ່ງສາມາດປ່ຽນແປງຜູ້ຕິດຕາມພຣະຄຣິດຄົນໜຶ່ງໆ ໃຫ້ເຂົ້າສູ່ການເປັນເໝືອນດັ່ງສາວົກຂອງພຣະອົງ

ໃນການຝຶກອົບຮົມ "ຕາມຢ່າງພຣະເຢຊູ" ດຣ.ແດນ ບໍ່ໄດ້ມີເປົ້າໝາຍພຽງແຕ່ການຜະລິດໜັງສືອີກເລັ້ມກ່ຽວກັບການສ້າງສາວົກແບບງ່າຍໆແຕ່ ດຣ.ແດນ ຕັ້ງເປົ້າໝາຍໃນການສ້າງກະແສການທະວີຄູນໃນການສ້າງສາວົກເພື່ອໃຫ້ງານນີ້ບັນລຸເປົ້າໝາຍ ເຂົາໃຊ້ເວລາ 4 ປີໃນການຝຶກທັກສະ ທົດສອບ ປະເມີນຜົນ ແລະແກ້ໄຂປັບປຸງໂປຼແກຼມການສ້າງສາວົກຈົນເຂົາມອງເຫັນໄດ້ວ່າໂປຼແກຼມນີ້ບໍ່ພຽງແຕ່ປ່ຽນແປງຊີວິດຜູ້ທີ່ເຊື່ອໃໝ່ໃຫ້ເປັນເໝືອນສາວົກຂອງພຣະຄຣິດເທົ່ານັ້ນແຕ່ຍັງໄດ້ປ່ຽນສາວົກທ່ຖືກຝຶກອົບຮົມເຫລົ່ານີ້ໃຫ້ເຂົ້າສູ່ການເປັນຜູ້ສ້າງສາວົກທີ່ມີປະສິດທິພາບດ້ວຍ

ຫລັງຈາກການພັດທະນາລະບົບການສ້າງສາວົກ ດຣ.ແດນ ແລນຄາສເຕີ ໄດ້ເຮັດໃຫ້ບົດຮຽນເຫລົ່ານີ້ສັ້ນກະທັດຮັດແລະເຂົ້າໃຈງ່າຍຕໍ່ພຣະກາຍຂອງພຣະຄຣິດໃນປະຈຸບັນໂດຍມີຮູບແບບການເຜີຍແຜ່ທີ່ສາມາດປັບໃຫ້ເຂົ້າກັບວັດທະນະທຳໃດໆໃນໂລກກໍ່ໄດ້ ການອົບຮົມ "ຕາມຢ່າງພຣະເຢຊູ" ເປັນການອົບຮົມທີ່ເຕັມໄປດ້ວຍພະລັງທີ່ບໍ່ເຄີຍຢຸດຢັ້ງໃນການເປັນເໝືອນພຣະເຢຊູແລະໃນການທະວີຄູນແຜ່ນດິນຂອງພຣະຄຣິດໂດຍຜ່ານບັນດາສາວົກໃໝ່ໆທົ່ວໂລກນີ້

ການສ້າງສາວົກໃນຊົ່ວອາຍຸທີ່ວິຖີຂອງໂລກມີອິດທິພົນຫລາຍນັ້ນບໍ່ແມ່ນເລື່ອງງ່າຍດາຍ ແຕ່ມັນກໍບໍ່ເຖິງກັບເປັນໄປບໍ່ໄດ້ຫລືບໍ່ມີທາງໃຫ້ເລືອກ ເມື່ອທ່ານເຂົ້າສູ່

ການອົບຮົມ “ຕາມຢ່າງພຣະເຢຊູ” ຂອງ ດຣ.ແດນ ແລນຄາສເຕີ ແລ້ວທ່ານຈະໄດ້ພົບກັບເພື່ອນຜູ້ເປັນສາວົກແລະຜູ້ສ້າງສາວົກທີ່ສາມາດສະແດງໃຫ້ທ່ານເຫັນເຖິງການທົດສອບແລະແນວທາງທີ່ໃຊ້ໄດ້ຜົນກ່ອນໜ້ານີ້

ດາວິດ ກາຣຣິສສັນ

ຊຽງໃໝ່ ປະເທດໄທ

ມິຖຸນາ 2009

# ຄຳຂອບຄຸນ

ຂໍຂອບໃຈຄຣິດສຕ໌ຈັກທັງສາມແຫ່ງໃນອາເມຣິກາ ຄື ຄຣິດສຕ໌ຈັກຄອມມິວນິຕີໄບເບີ້ນ ເມືອງຣາມິລຕັນ ຣັດເທັກຊັດສ ( ຄຣິດສຕ໌ຈັກທີ່ກໍ່ຕັ້ງໃນຊົນນະບົດ ) ຄຣິດສຕ໌ຈັກຄອຟເວີຣ໌ແນນທ໌ ແບ໊ບພ໌ຕິສ ເມືອງເຫັມເພີ້ລ ຣັດເທັກຊັດສ ( ຄຣິດສຕ໌ຈັກທີ່ເນັ້ນໃນການສ້າງສາວົກ ) ແລະຄຣິດສຕ໌ຈັກ ໄຮແລນດ໌ ເຟລໂລ່ຊິບພ໌ ເມືອງເລວິສວິລລ໌ ຣັດເທັກຊັດສ ( ຄຣິດສຕ໌ຈັກທີ່ກໍ່ຕັ້ງໃນຊານເມືອງ ) ເຊິ່ງເປັນຄຣິດສຕ໌ຈັກທີ່ການອົບຮົມ

“ຕາມຢ່າງພຣະເຢຊູ” ໄດ້ເລີ້ມຕົ້ນມາເປັນເວລາ 14 ປີແລ້ວ ຕະຫລອດເວລາຫລາຍປີພວກທ່ານໄດ້ເຫັນ ເອຟ ເຈ ທີ ( FJT ) ພັດທະນາຈາກ 4 ພາບມາເຖິງ 7 ພາບແລະໃນທີ່ສຸດເຮົາມີ 8 ພາບທີ່ເປັນສັນຍາລັກເລັ່ງເຖິງພຣະເຢຊູ ເຮົາແບ່ງປັນສິ່ງຕ່າງໆຫລາກຫລາຍຮ່ວມກັນແລະຄຄວາມຮັກຂອງພວກທ່ານແລະຄຳອະທິຖານຂຂອງພວກທ່ານໄດ້ສົ່ງຜົນເປັນຄວາມສຳເລັດອັນໃຫຍ່ຫລວງຕໍ່ປະຊາຊາດທັງຫລາຍ

ຜູ້ປະສານງານລະດັບຊາດທີ່ມີຢູ່ໃນຫລາຍປະເທດທາງອາຊີຕາເວັນອອກສ່ຽງໃຕ້ ໄດ້ຊ່ວຍຂັດເກົາແລະຈັດຕຽມຄູ່ມືສຳລັບການອົບຮົມ “ຕາມຢ່າງພຣະເຢຊູ” ເຊີ່ງຈັດໃນລະດັບຊາດ ເພື່ອຄວາມປອດໄພຂອງປະເທດເຫລົ່ານີ້ ດັ່ງນັ້ນຂ້າພະເຈົ້າຈຶ່ງບໍ່ສາມາດເປີດເຜີຍຊື່ຂອງແຕ່ລະປະເທດໄດ້ ໂດຍສະເພາະກຸ່ມຂອງສາມປະເທດທີ່ໄດ້ຊ່ວຍໃນການທົດສອບພາກສະໜາມຂອງການອົບຮົມແລະການຝຶກຄົນຣຸ່ນຕ່າງໆທີ່ເປັນສາວົກໃຫ້ສາມາດຝຶກຜູ້ອື່ນຕໍ່ໄປໄດ້

ຂໍຂອບໃຈສຳລັບຜູ້ຮ່ວມການອົບຮົມທັງຫລາຍທີ່ສະໜັບສະໜຸນດ້ວຍການອະທິຖານ ການຕອບຮັບ ແລະການໜຸນໃຈຕະຫລອດໄລຍະເວລາ 4 ປີຂອງຂັ້ນຕອນການພັດທະນາໃນອາຊີຕາເວັນອອກສ່ຽງໃຕ້ ພວກທ່ານຊ່ວຍເຮັດໃຫ້ການອົບຮົມມີເປົ້າໝາຍຊັດເຈນແລະມີຄວາມໝາຍຢ່າງຍິ່ງ

ພວກເຮົາແຕ່ລະຄົນເປັນຜົນພວງຂອງການລົງທຶນທາງດ້ານສະຕິປັນຍາແລະປະສົບການຊີວິດ ຂ້າພະເຈົ້າປາຖະໜາທີ່ຈະຂອບໃຈ ຣອນເນ່ ແຄຜົສ,ເຄນ ເຄຣັກ,ດຣ.ແຈັກຄ໌ ເອັນເດີຣ໌,ດຣ.ຣອຍ ເຈ ຟິຊ,ເຄຣັກ ກາຣ໌ຣິສສັນ,ດຣ.ເດວິດ ກາຣ໌ຣິສສັນ,ຣິກຄ໌ ໄອວາມີ, ດຣ.ເອລວິ່ນ ແມັກຄ໌ຄານ,ນິກຄ໌ ອອລສັນ,ດຣ.ຣິກຄ໌ກີພາຣິສ,ໄດລັນ ໂຣໂມ,ທອມ ເວລລ໌ສ ແລະ ດຣ.ທອມ ວອລ໌ຟ ສຳລັບອິທິພົນຊີວິດທີ່ພວກເຂົາມີຕໍ່ຂ້າພະເຈົ້າ

ຂໍຂອບໃຈເປັນພິເສດສຳລັບ ດຣ.ຈອຣ໌ຈ ແພັດທເທີສັນ ແລະ ກາເຣັນ ເດີຣ໌ຣາຫ໌ ທີ່ໄດ້ໃຊ້ເວລາຫລາຍຄັ້ງສຳລັບປະຕິບັດການຮຽນຮູ້ໃນການສະແດງບົດບາດສົມມຸດໃນການອົບຮົມນີ້

ສຸດທ້າຍຂ້າພະເຈົ້າຂໍຂອບໃຈຄອບຄົວຂອງຂ້າພະເຈົ້າສຳລັບການສະໜັບສະໜຸນແລະໜຸນໃຈ ຂໍຂອບໃຈລູກຂອງຂ້າພະເຈົ້າຄື ເຈຟ,ແຊຄ,ຄາຣິສແລະເຊັນ ທີ່ເປັນແຫລ່ງແຫ່ງຄວາມເຊື່ອ ຄວາມຫວັງ ແລະຄວາມຮັກອັນບໍ່ມີສິ້ນສຸດ

ຂອບໃຈ ຣອລລີ ພັນລະຍາຂຂອງຂ້າພະເຈົ້າສຳລັບການທຳງານທີ່ບໍ່ມີບ່ອນຕິໃນການຮຽມຮຽງສະບັບຮ່າງແລະການເປັນສຽງສະທ້ອນສຳລັບແນວຄວາມຄິດຫລາກຫລາຍແລະການຂັດເກົາຕະຫລອດເວລາ 14 ປີທີ່ຜ່ານມາ

ຂໍພຣະເຈົ້າຊົງອວຍພຣະພອນທຸກທ່ານໃນຂະນະທີ່ເຮົາເສີມສ້າງຄວາມຮ້ອນຮົນ ສົ່ງເສີມຜູ້ນຳຝ່າຍວິນຍານ ແລະນຳການບຳບັດຮັກສາໄປຍັງປະຊາຊາດ

ດານຽນ ບີ ແລນຄາສເຕີ ພີເອຟ ດີ

ສິງຫາ 2009

ອາຊີຕາເວັນອອກສ່ຽງໃຕ້

# ບົດນຳ

ຍິນດີຕ້ອນຮັບສູ່ການອົບຮົມ "ຕາມຢ່າງພຣະເຢຊູ" ຂໍພຣະເຈົ້າອວຍພອນແລະເຮັດໃຫ້ທ່ານຈະເຣີນຮຸ່ງເຮືອງເມື່ອທ່ານທຳຕາມແບບຢ່າງພຣະບຸດຂອງພຣະອົງ ຂໍໃຫ້ພັນທະກິດ

ຮັບໃຊ້ຂອງທ່ານເກີດຜົນຢ່າງຫລວງຫລາຍເປັນຮ້ອຍເທົ່າເມື່ອທ່ານໄດ້ຍ່າງຜ່ານກຸ່ມຄົນທີ່ ຂ່າວປະເສີດຍັງໄປບໍ່ເຖີງຮ່ວມກັນກັບພຣະເຢຊູຢ່າງຢູ່ຂ້າງໆ

ການອົບຮົມ "ຕາມຢ່າງພຣະເຢຊູ" ຫລືເອີ້ນຊື່ຫຍໍ້ວ່າ ເອຟ ເຈ ທີ ( FJT ) ຄືລະບົບການອອົບຮົມໂດຍໃຊ້ການເຮັດສັນຍານມືເຊີ່ງຊ່ວຍໃຫ້ເສີມສ້າງຜູ້ເຊື່ອໃຫ້ເຮັດຕາມຂັ້ນຕອນ 4
ປະການທີ່ເປັນກົນລະຍຸດຂອງພຣະເຢຊູໃນການປະກາດກັບປະຊາຊາດ (
ສາມາດອ່ານໃນໜັງສືພຣະກິດຕິຄຸນ ໃນໜັງສືກິຈະການ ໃນຈົດໝາຍຝາກ ແລະໃນປະວັດສາດຄຣິດສຕ໌ຈັກ ) ເປົ້າໝາຍຂອງການອົບຮົມ ຄື ການປ່ຽນແປງ
ບໍ່ແມ່ນການ ຮັບຂໍ້ມູນ ດ້ວຍເຫດຜົນນີ້ເອງເຮັດໃຫ້ບົດຮຽນຈື່ງເປັນດັ່ງ "ເມັດພັນ" ແຫ່ງຄວາມຈິງຝ່າຍ
ວິນຍານທີ່ເຂົ້າໃຈງ່າຍແລະສາມາດນຳໄປສອນຜູ້ອື່ນຕໍ່ໄປໄດ້ຢ່າງງ່າຍດາຍ ພວກເຂົາທຳຕາມຫລັກການຝ່າຍວິນຍານ ຄື "ເຊື້ອຂະໜົມປັງເລັກນ້ອຍທີ່ເຮັດໃຫ້
ຂະໜົມປັງຟູ ທັງກ້ອນ"
ແລະເສີມກຳລັງຜູ້ເຊື່ອໃຫ້ກາຍເປັນຜູ້ທີ່ສອນຄົນອື່ນຕໍ່ໄປເພື່ອການເປັນຜູ້ຕິດຕາມພຣະຄຣິດສທີ່ມີຄວາມຮ້ອນຮົນ

ກົນລະຍຸດຂອງພຣະເຢຊູເພື່ອປະກາດຕໍ່ປະຊາຊາດນັ້ນກ່ຽວຂ້ອງກັບ 4 ຂັ້ນຕອນ ຄື ຂັ້ນຕຕອນການເຕີບໃຫຍ່ຢ່າງເຂັ້ມແຂງໃນພຣະເຈົ້າ ຂັ້ນຕອນການສ້າງສາວົກ ຂັ້ນຕອນ ການເລີ່ມຕົ້ນຄຣິດສຕ໌ຈັກ
ແລະຂັ້ນຕອນພັດທະນາຜູ້ນຳໃນແຕ່ລະຂັ້ນຕອນນັ້ນແຍກອອກ
ຈາກກັນແຕ່ຍັງຂະຫຍາຍຜົນໄປຍັງຂັ້ນຕອນອື່ນໆໃນວົງຈອນດ້ວຍ ຄູ່ມືຂອງ ເອຟ ເຈ ທີ

( FJT )
ຊ່ວຍເສີມສ້າງຜູ້ອົບຮົມໃຫ້ເປັນຜູ້ນຳການປ່ຽນແປງຕໍ່ກະແສການຕັ້ງຄຣິດສຕ໌ຈັກ ຖ້າມກາງຄົນຂອງພວກເຂົາໂດຍການທຳຕາມແບບຢ່າງພຣະເຢຊູ

ເອຟ ເຈ ທີ ( FJT ) ຄື ການອົບຮົມເພື່ອສ້າງສາວົກເບື້ອງຕົ້ນ ( ຄູ່ມືເລັ້ມນີ້ ) ປະກອບໄປດ້ວຍຂັ້ນຕອນ 2 ປະການທຳອິດ ຂັ້ນຕອນການເຕີບໃຫຍ່ຢ່າງເຂັ້ມແຂງໃນພຣະເຈົ້າແລະຂັ້ນຕອນສ້າງສາວົກ ຜູ້ເຂົ້າອົບຮົມຈະຖືກຝຶກໃຫ້ນຳສາວົກກຸ່ມຍ່ອຍ ຖືກຝຶກ ໃນການອະທິຖານ ການເຊື່ອຟັງຄຳສັ່ງຂອງພຣະເຢຊູ

ແລະການເດີນໃນລິດອຳນາດຂອງ ພຣະວິນຍານບໍລິສຸດ (
ເຕີບໃຫຍ່ຢ່າງເຂັ້ມແຂງໃນພຣະເຈົ້າ ) ຜູ້ເຂົ້າອົບຮົມຄົ້ນພົບວິທີ
ການຮ່ວມງານກັບພຣະເຈົ້າການແບ່ງປັນຂ່າວປະເສີດ ການປະເມີນຜົນລັບ
ແລະການ ແບ່ງປັນນິມິດຕໍ່ຜູ້ອື່ນເພື່ອການທະວີຄູນຖ້າມກາງຄົນຂອງພວກເຂົາ (
ສ້າງສາວົກ ) ຄົນ
ເຫລົ່ານັ້ນທີ່ສັດຊື່ໃນການຝຶກອົບຮົມຜູ້ອື່ນໃນການສ້າງສາວົກເບື້ອງຕົ້ນອາດເຂົ້າຮ່ວມການ
ອົບຮົມການສ້າງຜູ້ນຳເບື້ອງຕົ້ນແລະຮຽນຮູ້ວິທີເລີ່ມຕົ້ນຄຣິດສຕ໌ຈັກແລະພັດທະນາຜູ້ນຳ

( ຂັ້ນຕຕອນທີ 3 ແລະ 4 ໃນກົນລະຍຸດຂຂອງພຣະເຢຊູແລະຢູ່ໃນຄູ່ມືເລັ້ມທີ 2
ຂອງຊຸດຄູ່ມືນີ້ ) ການອົບຮົມທັງ 2
ລະບົບນີ້ອະຖິບາຍເຖິງພຣະຣາຊກິດແລະວິທີການຂອງ
ພຣະເຢຊູດ້ວຍການໃຫ້ອຸປະກອນໃນການຮຽນຮູ້ທີ່ຜູ້ເຂົ້າອົບຮົມສາມາດເຂົ້າໃຈງ່າຍ
ແລະສາມາດນຳໄປສອນຜູ້ອື່ນຕໍ່ໄດ້

ເຮົາໃຊ້ຂັ້ນຕອນທີ່ສາມາດນຳໄປສອນຕໍ່ໄດ້ໃນຂະນະທີ່ກຳລັງພັດທະນາ

ເອຟ ເຈ ທີ ( FJT ) ໃນບໍລິບົດຂອງຕ່າງປະເທດຕະຫລອດຊ້ວງ 4 ປີປະການທຳອິດ
ຜູ້ອົບຮົມອຸທິດຕົນເອງເພື່ອການອະທິຖານເພື່ອເຊີ່ງກັນແລະກັນແລະອະທິຖານເພື່ອຜູ້ເຂົ້າ ອົບຮົມກິຈະວັດປະຈຳວັນ ປະການທີ 2 ຜູ້ເຂົ້າອົບຮົມໃຊ້ເວລາ 3 – 5 ວັນ
ເພື່ອພັດທະນາ “ການອົບຮົມ”
ຂອງແຕ່ລະເດືອນໂດຍມີພື້ນຖານຢູ່ເທິງວິທີການແລະ ພຣະຣາຊກິດຂອງພຣະເຢຊູ
ປະການທີ 3 ວັນຫລັງຈາກການອົບຮົມໃຫ້ຜູ້ອົບຮົມປະເມີນ
ຜົນວ່າບົດຮຽນຊ່ວຍໃຫ້ມີຄວາມກ້າວໜ້າຂອງຜູ້ເຂົ້າອົບຮົມໃນການຮຽນແບບພຣະເຢຊູ
ຫລາຍເທົ່າໃດບັນຫາໃນການສະແດງໂຕຂອງຜູ້ຝຶກໃນຊົ່ວໂມງຮຽນກ່ງວກັບການເຂົ້າໃຈຜິດ ການສື່ສານຜິດພາດ ຫລື ການຍຶດຖືວັດທະນະທຳໂດຍບໍ່ຈຳເປັນ ປະການທີ 4 ຜູ້ອົບຮົມ
ພັດທະນາຫລັກສູດໃຫ້ທັນສະໃໝສຳລັບການອົບຮົມຄັ້ງຕໍ່ໄປໂດຍໃຊ້ຂໍ້ມູຈາກການສ

ະທ້ອນ ຄິດໃນຊ່ວງເວລາຂອງການປະເມີນຜົນ
ແລ້ວໃຫ້ຜູ້ອົບຮົມເຮັດຊ້ຳຂັ້ນຕອນທັງໝົດ

ຄຳແນະນຳຢ່າງໜຶ່ງ ຄື ຂໍໃຫ້ສອນໂດຍໃຊ້ເນື້ອຫາຕາມທີ່ມີໃນຄູ່ມືນີ້ ສອນໄປແຕ່ລະຂັ້ນຕອນ ຂໍໃຫ້ສອນກ່ອນ 5 ຮອບກ່ອນທີ່ທ່ານຈະປ່ຽນແປງສິ່ງໃດໆ ( ໝາຍເຖິງສິ່ງ
ອື່ນໆທີ່ບໍ່ແມ່ນການປັບໃຫ້ເຂົ້າກັບວັດທະນະທຳໃນທ້ອງຖິ່ນທີ່ທ່ານທຳງານຢູ່ )
ຂໍໃຫ້ການ ສອນ 5 ທຳອິດເປັນການເຮັດໃຫ້ ເອຟ ເຈ ທີ ( FJT )
ເຂົ້າໃຈງ່າຍຂຶ້ນເປັນເໝືອນການ ຝຶກອົບຮົມທີມທີ່ຈະທຳງານຄຽງຂ້າງທ່ານ
ແລະຊີ້ນຳທ່ານເມື່ອທ່ານຝຶກອົບຮົມຜູ້ອື່ນຕໍ່ໄປ

ເອຟ ເຈ ທີ ( FJT )
ມີຈຸດໂຄ້ງອີກຫລາຍຈຸດທີ່ທ່ານບໍ່ສາມາດສັງເກດເຫັນໄດ້ຈົນກວ່າ
ທ່ານຈະໄດ້ຝຶກອອົບຮົມຜູ້ອື່ນແຕ່ລະຂັ້ນຕອນຫລາຍໆຮອບ
ມີຜູ້ເຊື່ອແລະຜູ້ບໍ່ເຊື່ອຫລາຍ
ພັນຄົນທີ່ໄດຮັບການຝຶກອົບຮົມດ້ວຍເນື້ອຫາໃນຄູ່ມືນີ້ໃນອາຊີຕາເວັນອອກສ່ຽງໃຕ້ ຂໍໃຫ້
ທ່ານທຳຕາມຄຳແນະນຳນີ້ເພື່ອຫລີກລ້ຽງການເຮັດຜິດພາດໄປຈາກສິ່ງທີ່ຄົນອື່ນໄດ້ເຮັດແລ້ວ

ເມື່ອທ່ານເລີ່ມຕົ້ນ ເຮົາຕ້ອງການແບ່ງປັນກັບທ່ານວ່າການອົບຮົມ “ຕາມຢ່າງພຣະເຢຊູ”
ໄດ້ປ່ຽນແປງເຮົາຫລາຍຢ່າງແລະເຊັ່ນດຽວກັນມັນກໍສາມາດປ່ຽນແປງໃຜກໍຕາມທີ່ໄດ້ຮັບການຝຶກອົບຮົມນີ້ດ້ວຍ
ຂໍພຣະເຈົ້າກະທຳໃນສິ່ງດຽວກັນແລະຂໍໃຫ້ຊີວິດຂອງທ່ານຄົບບໍລິບູນຫລາຍຂຶ້ນ

# ກຳນົດການ

ຄູ່ມືນີ້ສາມາດປັບໃຫ້ເໝາະສົມກັບໂປຼແກຼມການສາມະນາ 3 ວັນ ຫລື ການອົບຮົມ 12 ທິດ ໃນແຕ່ລະຊົ່ວໂມງຮຽນຂອງທັງ 2 ກໍານົດການຕ່າງກໍໃຊ້ເວລາໜຶ່ງຊົ່ວໂມງເຄິ່ງແລະໃຊ້ຂັ້ນຕອນການອົບຮົມຜູ້ອົບຮົມ ໃນໜ້າທີ 9

**ການອົບຮົມເພື່ອສ້າງສາວົກເບື້ອງຕົ້ນ 3 ວັນ**

**ວັນທີ 1**

8:30 ຕ້ອນຮັບ

10:00 ພັກຜ່ອນ

10:15 ການທະວີຄູນ

12:00 ພັກກິນເຂົ້າທ່ຽງ

13:00 ການຮັກ

15:15 ພັກຜ່ອນ

15:30 ການແບ່ງປັນ

15:30 ການອະທິຖານ

17:00 ກິນເຂົ້າ

**ວັນທີ 2**

8:30 ນະມັດສະການ

9:00 ການເຊື່ອຟັງ

10:30 ພັກຜ່ອນ

10:45 ການດໍາເນີນຊີວິດ

12:00 ພັກກິນເຂົ້າທ່ຽງ

13:00 ນະມັດສະການແບບງ່າຍ

13:30 ການອອກໄປ

15:15 ພັກຜ່ອນ

17:00 ກິນເຂົ້າ

**ວັນທີ 3**

8:30 ນະມັດສະການແບບງ່າຍ

9:00 ການແບ່ງປັນ ( ຝຶກການເປັນພະຍານ )

10:30 ພັກຜ່ອນ

10:45 ການທໍາຕາມແບບຢ່າງ

12:00 ພັກກິນເຂົ້າທ່ຽງ

13:00 ການແບກກາງແຂນ

**ການອົບຮົມເພື່ອສ້າງສາວົກເບື້ອງຕົ້ນ ປະຈໍາ ອາທິດ**

ອາທິດທີ 1 ຕ້ອນຮັບ

ອາທິດທີ 2 ການທະວີຄູນ

ອາທິດທີ 3 ການຮັກ

ອາທິດທີ 4 ນະມັດສະການແບບງ່າຍ

ອາທິດທີ 5 ການອະທິຖານ

ອາທິດທີ 6 ການເຊື່ອຟັງ

ອາທິດທີ 7 ການດຳເນີນຊີວິດ

ອາທິດທີ 8 ນະມັດສະການແບບງ່າຍ

ອາທິດທີ 9 ການອອກໄປ

ອາທິດທີ 10 ການແບ່ງປັນ

ອາທິດທີ 11 ການທຳຕາມຢ່າງ

ອາທິດທີ 12 ການແບກກາງແຂນ

## ບົດຮຽນທີ່ສຳຄັນ

ເຮັດ

ເວົ້າ

ສັນຍານມື

ກິດຈະກຳ

# ການອົບຮົມ
# ເພື່ອສ້າງ
# ສາວົກເບື້ອງຕົ້ນ

# *ການສ້າງສາວົກ*
# *ໃຫ້ຢູ່ໃນກະແສການຕັ້ງຄຣິດສຕ໌ຈັກ*

## ການເອົາແບບຢ່າງພຣະເຢຊູ

**ຈຸດປະສົງ**

1. ຜູ້ຮຽນຕ້ອງເຂົ້າໃຈການເອົາແບບຢ່າງພຣະເຢຊູ ຮຽນແບບພຣະເຢຊູຫລາຍຂຶ້ນ

2. ສາມາດສອນບົດຮຽນທັງ 9 ບົດໄດ້

3. ຈົດຈຳພາບທັງ 8 ພາບທີ່ສະແດງໃຫ້ເຫັນຢ່າງຊັດເຈນເຖິງການເຮັດຕາມ ແບບພຣະເຢຊູໄດ້

4. ສາມາດນຳກຸ່ມນະມັດສະການນ້ອຍໄດ້ ໃຫ້ມີປະສົບການໃນການນະມັດສະການ

5. ແບ່ງປັນພຣະຄຳພີທີ່ເຕັມໄປດ້ວຍລິດອຳນາດ ແລະນຳສະເໜີຂ່າວດີເລື່ອງຂອງພຣະເຢຊູຄຣິດ

**ຂັ້ນຕອນໃນການສອນ**

1. ສັນລະເສີນພຣະເຈົ້າ ( 10 ນາທີ )

- ມອບໃຫ້ຜູ້ໜຶ່ງເປັນຜູ້ນຳ ເລືອກເພງ 2 ເພງ ຖ້າເປັນໄປໄດ້ໃຫ້ກ່ຽວກັບຫົວຂໍ້ທີ່ຮຽນ

2.ອະທິຖານ( 10 ນາທີ )

- ອະທິຖານເພື່ອຜູ້ທີ່ຍັງບໍ່ທັນໄດ້ຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ອະທິບາຍ:** ຖ້າຫາກຜູ້ຮຽນຍັງບໍ່ທັນມີກຸ່ມຂອງຕົນເອງ ກໍ່ໃຫ້ຜູ້ນັ້ນຂຽນລາຍຊື່ໝູ່ຫລືຄອບຄົວ ທີ່ຈະສາມາດຝຶກສອນໄດ້ແລ້ວຈຶ່ງອະຖິຖານ

3. ເຂົ້າສູ່ບົດຮຽນ

- ທົບທວນພາບທັງ 8 ພາບທີ່ເຮົາຮຽນພ້ອມທັງທ່າປະກອບ ຫລັງຈາກທົບທວນແລ້ວກໍ່ເຂົ້າສູ່ບົດຮຽນ ຍໍ້າໃຫ້ຜູ້ຮຽນຕັ້ງໃຈຟັງ ເພາະວ່າຈະຕ້ອງນໍາເອົາບົດຮຽນໄປສອນຕໍ່ໃນພາຍໜ້າ

**ການນໍາສະເໜີບົດຮຽນຄວນຈະຈັດລໍາດັບດັ່ງຕໍ່ໄປນີ້**

- ຖາມຄໍາຖາມ - ອ່ານຂໍ້ພຣະຄໍາພີ - ໜູນໃຈຜູ້ຮຽນ - ຕອບຄໍາຖາມ

ໃນຂັ້ນຕອນນີ້ເຮົາໃຫ້ພຣະທໍາຂອງພຣະເຈົ້າມີສິດອໍານາດສູງສຸດສໍາລັບຊີວິ ບໍ່ແມ່ນຜູ້ສອນ ຖ້າວ່າຜູ້ຮຽນຕອບບໍ່ຖືກຢ່າຜ້າວໃຫ້ຄໍາຕອບ ແຕ່ຂໍໃຫ້ຜູ້ຮຽນອ່ານພຣະຄໍາອອກສຽງແລະຕອບຄໍາຖາມອີກຄັ້ງ

ໃນແຕ່ລະບົດຮຽນຈະຈົບລົງໂດຍການທ່ອງຂໍ້ທ່ອງຈໍາ ຜູ້ຮຽນແລະຜູ້ສອນຄວນຈະຢືນຂຶ້ນແລະທ່ອງພຣະຄໍາພີພ້ອມກັນ 10 ຮອບ 6 ຮອບທໍາອິດໃຫ້ອ່ານພຣະຄໍາພີໄດ້ແຕ່ 4 ຮອບສຸດທ້າຍຈະຕ້ອງໃຊ້ຄວາມຈື່ຈໍາໃນການທ່ອງ

4. ການຝຶກພາກປະຕິບັດ

ໃຫ້ຜູ້ຮຽນຈັບຄູ່ແລະຝຶກສອນ

**ຂໍ້ຄວນຈໍາ**

1. ໃນການສອນທຸກຄັ້ງເຮົາຕ້ອງໃຫ້ກຸ່ມອະທິຖານເພື່ອການຮຽນ

2. ທົບທວນບົດຮຽນເລື້ອຍ ໆ

3. ພະຍາຍາມໃຫ້ທຸກຄົນມີສ່ວນຮ່ວມ

4. ຢ່າຂ້າມຂັ້ນຕອນ

**ຂໍ້ຄວາມຄິດເຫັນຈາກຜູ້ຮຽນ**

ໃຫ້ຜູ້ຮຽນຂຽນສິ່ງທີ່ດີໃນການອົບຮົມ ແລະສິ່ງທີ່ຄວນປັບປຸງແກ້ໄຂ ເພື່ອການອົບຮົມໃນຄັ້ງຕໍ່ໄປ

## ບົດຮຽນຂອງຜູ້ສອນ

## ບົດຮຽນທີ 1

# ກ່າວຕ້ອນຮັບ

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ
- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນໍາຮ້ອງເພງນະມັດສະການ 2 ເພງ

**ການອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ
- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ເຂົ້າສູ່ບົດຮຽນ**

ພຣະເຢຊູຄືຜູ້ໃດ

**ອະທິບາຍພາບ:** ນີ້ແມ່ນລັກສະນະພຣະເຢຊູ

ທະຫານ ( ຍົກມືຂຶ້ນ )

ຜູ້ສະແຫວງຫາ ( ທ່າທາງເໝືອນຊອກຫາບາງຢ່າງ )

ຜູ້ລ້ຽງ ( ເອົາມືຕ້ອນເຂົ້າມາ)

ຜູ້ຫວ່ານ ( ທ່າທາງແບບຫວ່ານເຂົ້າ )

ພຣະບຸດ ( ເອົາມືຈູ້ມກັນແລ້ວມາແປ໋ະໃສ່ປາກ )

ຜູ້ຊອບທຳ ( ນົບ )

ຜູ້ຮັບໃຊ້ ( ທ່າທາງແບບກຳລັງຕອກຕະປູ )

ຜູ້ອາລັກຂາ ( ທ່າທາງແບບປົກປ້ອງສິ່ງຂອງ )

**ວິທີການທີ່ເຮັດໃຫ້ເຮົາຮຽນຮູ້ໄດ້ດີທີ່ສຸດ**
ມີຢູ່ 3 ຢ່າງຄື

**1. ການຟັງ ( ເອົາມືປ້ອງຢູ່ຫູ )**

**2. ການເບິ່ງ ( ໃຊ້ມືຊີ້ໄປທາງໜ້າ )**

**3. ການລົງມືເຮັດ ( ໝຸນມືເຂົ້າກັນ )**

ສາມສິ່ງທີ່ເຮັດໃຫ້ຄົນເຮົາຮຽນຮູ້ໄດ້ດີທີ່ສຸດແມ່ນການຟັງ,ການເບິ່ງ,ແລະການລົງມືເ
ຮັດ ແຕ່ສິ່ງສຳຄັນທີ່ສຸດແມ່ນການເພິ່ງພຣະວິນຍານບໍລິສຸດ
ເພາະພຣະວິນຍານບໍລິສຸດເປັນຄູສອນເຮົາຢູ່ຕະຫລອດ
ແລະໃນການຮຽນຂອງເຮົານີ້ຕ້ອງເພິ່ງພຣະວິນຍານບໍລິສຸດ

## ບົດຮຽນຂອງຜູ້ສອນ

## ບົດຮຽນທີ 2

**ການທະວິຄູນ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນຳຮ້ອງເພງນະມັດສະການ 2 ເພງ

**ອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ທົບທວນບົດຮຽນ**

**1. ລັກສະນະພຣະເຢຊູ**

ທະຫານ ( ຍົກມືຂຶ້ນ )

ຜູ້ສະແຫວງຫາ ( ທ່າທາງເໝືອນຊອກຫາບາງຢ່າງ )

ຜູ້ລ້ຽງ ( ເອົາມືຕ້ອນເຂົ້າມາ)

ຜູ້ຫວ່ານ ( ທ່າທາງແບບຫວ່ານເຂົ້າ )

ພຣະບຸດ ( ເອົາມືຈູ້ມກັນແລ້ວມາແປະໃສ່ປາກ )

ຜູ້ຊອບທຳ ( ນົບ )

ຜູ້ຮັບໃຊ້ ( ທ່າທາງແບບກຳລັງຕອກຕະປູ )

ຜູ້ອາລັກຂາ ( ທ່າທາງແບບປົກປ້ອງສິ່ງຂອງ )

**ຕົວຢ່າງເລື່ອງໝາກປຸງເປົ້າ**

ຖ້າເຮົາໄດ້ຮັບພຣະພອນຈາກພຣະເຈົ້າແລ້ວບໍ່ແບ່ງປັນໃຫ້ແກ່ຄົນອື່ນກໍ່ປຽບເໝືອນໝາກປຸ່ງເປົ້າທີ່ເຮົາເປົ່າໃຫ້ມັນໃຫ່ຍຂື້ນຖ້າເຮົາບໍ່ປ່ອຍລົມອອກໃນທີ່ສຸດມັນກໍຈະແຕກ
ຊີວິດເຮົາກໍເໝືອນກັນຖ້າເຮົາບໍ່ແບ່ງປັນພຣະພອນໃຫ້ແກ່ຄົນອື່ນຊີວິດເຮົາກໍຈະເໝືອນກັບໝາກປຸງເປົ້າທີ່ເປົ່າໃຫ້ໃຫ່ຍຂື້ນເລື້ອຍໆຈົນແຕກ
ເມື່ອເຮົາໄດ້ຮັບພອນຈາກພຣະເຈົ້າແລ້ວ ເຮົາຕ້ອງສົ່ງຕໍ່ພຣະພອນນັ້ນໃຫ້ຜູ້ອື່ນຕໍ່

**ພະລັກສະນະຂອງພຣະເຢຊູ**

ຜູ້ອາລັກຂາ **ມັດທາຍ 6:20-21** ( ອ່ານພ້ອມກັນ )

ແຕ່ຈົ່ງສະສົມຊັບສົມບັດສຳລັບພວກທ່ານໄວ້ໃນສະຫວັນ
ບ່ອນທີ່ມອດແລະຂີ້ໝ້ຽງກັດກິນບໍ່ໄດ້ແລະໂຈນງັດແງະເຂົ້າໄປລັກເອົາບໍ່ໄດ້
ເພາະຊັບສົມບັດຂອງທ່ານຢູ່ທີ່ໃດຈິດໃຈຂອງທ່ານກໍ່ຢູ່ທີ່ນັ້ນ

**ສາມຢ່າງທີ່ຜູ້ອາລັກຂາຕ້ອງເຮັດ**

**ມັດທາຍ 15.14-28** ( ອ່ານພ້ອມກັນ )

- ຜູ້ອາລັກຂາຕ້ອງລົງທຶນຢ່າງຊານສະຫລາດ
- ຜູ້ອາລັກຂາຕ້ອງໃຊ້ເວລາຢ່າງຊານສະຫລາດ
- ຜູ້ອາລັກຂາຕ້ອງໃຊ້ຊີວິດຢ່າງສັດຊື່

**ສະຫຼູບ:** ພຣະເຢຊູຊົງເປັນຜູ້ອາລັກຂາແລະພຣະອົງຊົງສະຖິດທາມກາງພວກເຮົາ
ແລະເມື່ອເຮົາເຮັດຕາມແບບຢ່າງຂອງພຣະອົງເຮົາກໍຈະເປັນຜູ້ອາລັກຂາເໝືອນກັນ
ກັບພຣະອົງ

**ຄຳສັ່ງທຳອິດຂອງພຣະເຈົ້າ**

**ປະຖົມມະການ 1:28** ( ອ່ານພ້ອມກັນ )

ພຣະເຈົ້າຊົງບອກມະນຸດໃຫ້ທະວີຄູນລູກຫລານຝ່າຍຮ່າງກາຍໃຫ້ຫລາຍໃນແຜ່ນດິນ
ໂລກ

**ຄຳສັ່ງທີສອງຂອງພຣະເຈົ້າ**

**ມາລະໂກ 16:15** ( ອ່ານພ້ອມກັນ )

ພຣະອົງຊົງບອກໃຫ້ມະນຸດອອກໄປປະກາດຂ່າວປະເສີດ
ພຣະເຢຊູຊົງບອກສາວົກຂອງພຣະອົງວ່າ ຈົ່ງທະວີຄູນລູກຫລານຝ່າຍວິນຍານ

**ເຮົາຈະເກີດຜົນແລະທະວີຄູນໄດ້ແນວໃດ**

**2 ຕີໂມທຽວ 2:2** ( ອ່ານພ້ອມກັນ )

ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ຫນ້າພຍານຫລາຍຄົນ
ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 3**

**ຄວາມຮັກ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນໍາຮ້ອງເພງນະມັດສະການ 2 ເພງ

**ອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ທົບທວນ**

**1. ພຣະລັກສະນະຂອງພຣະເຢຊູ**

ທະຫານ ຜູ້ສະແຫວງຫາ ຜູ້ລ້ຽງ ຜູ້ຫວ່ານ ພຣະບຸດ ຜູ້ຊອບທໍາ ຜູ້ຮັບໃຊ້ ຜູ້ອາລັກຂາ

**2. ທົບທວນເລື່ອງການທະວີຄູນ**

ສາມສິ່ງທີ່ຜູ້ອາລັກຂາຕ້ອງເຮັດມີຫຍັງແນ່?

- ຄໍາສັ່ງທໍາອິດທີ່ພຣະເຈົ້າໃຫ້ກັບມະນຸດມີຫຍັງແນ່?

- ຄຳສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ກັບມະນຸດມີຫຍັງແນ່?

- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?

- ທະເລສາບສອງແຫ່ງໃນປະເທດອິດສະລະເອັນມີຊື່ວ່າແນວໃດ?

- ເຫດໃດທະເລສາບສອງແຫ່ງນີ້ຈຶ່ງມີຄວາມແຕກຕ່າງກັນ?

- ເຈົ້າຢາກເປັນທະເລສາບໃດ?

**ພຣະເຢຊູຊົງມີພຣະລັກສະນະແນວໃດ?**

**ມາລະໂກ 6:34** ( ອ່ານພ້ອມກັນ )

ພຣະເຢຊູຊົງເປັນຜູ້ລ້ຽງທີ່ດີແລະພຣະອົງຊົງຮັກມະນຸດຢ່າງຫລວງຫລາຍ

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່

**ເພງສັນລະເສີນ 23:1-6** ( ອ່ານພ້ອມກັນ )

**1. ຜູ້ລ້ຽງທີ່ດີຕ້ອງນຳແກະໄປໃນທາງຊອບທຳ**

**2. ຜູ້ລ້ຽງທີ່ດີຕ້ອງປົກປ້ອງແກະຂອງຕົນ**

**3. ຜູ້ລ້ຽງທີ່ດີຕ້ອງເບິ່ງແຍງຮັກສາ**

**ສະຫລຸບ**

ເຈົ້າຮູ້ບໍ່ວ່າເປັນຫຍັງທະເລຕາຍຈຶ່ງບໍ່ມີຊີວິດແຕ່ທະເລສາບຄາລີເລກັບມີຊີວິດ ? ຍ້ອນວ່າທະເລສາບຄາລີເລມີແມ່ນ້ຳໄຫລອອກແລະໄຫລເຂົ້າຢູ່ສະເໝີຈຶ່ງເຮັດໃຫ້ມັນເປັນທະເລສາບທີ່ມີຊີວິດ

- ນີ້ເປັນພາບທີ່ສະແດງເຖິງຊີວິດຝ່າຍວິນຍານຂອງເຮົາ ເມື່ອເຮົາໄດ້ຮັບພອນຈາກພຣະເຈົ້າເຮົາຄວນໃຫ້ພະພອນນັ້ນໄຫລໄປສູ່ຜູ້ອື່ນເຊັ່ນດຽວກັນ

- ເປັນທະເລສາບໃດງ່າຍກ່ວາກັນ ທະເລສາບຄາລີເລຫຼືທະເລຕາຍ?

- ເຈົ້າຢາກເປັນທະເລສາບໃດ?

**ຂໍ້ທ່ອງຈຳ: ໂຢຮັນ 15:3**

**ພຣະບິດາຂອງເຮົາຈະໄດ້ຮັບສະງ່າລາສີຢ່າງນີ້ແຫລະເມື່ອພວກທ່ານເກີດຜົນຫລາຍ ແລະໃນທຳນອງນີ້ພວກທ່ານຈຶ່ງກາຍເປັນສາວົກຂອງເຮົາ**

- ເຮົາຈະທ່ອງກັນ 10 ຮອບ 6 ຮອບທຳອິດເຮົາຈະອ່ານກ່ອນແລະ 4 ຮອບສຸດທ້າຍຈະຕ້ອງທ່ອງປາກເປົ່າ

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 4**

**ການອະທິຖານ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນຳຮ້ອງເພງນະມັດສະການ 2 ເພງ

**ອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**1. ບັນຍັດທີ່ພຣະເຈົ້າຊົງມີໃຫ້ແກ່ມະນຸດມີຫຍັງແດ່?**

**ມາລະໂກ 12:28-31** ( ອ່ານພ້ອມກັນ )

- ມີຢູ່ 2 ຢ່າງ:

ຮັກພຣະເຈົ້າ ( ຍົກມືຂຶ້ນ )

ຮັກເພື່ອນບ້ານ ( ໂອບກອດ )

**2. ຄວາມຮັກມາຈາກໃສ?**

**1ໂຢຮັນ 4:7-8** ( ອ່ານພ້ອມກັນ )

- ຄວາມຮັກມາຈາກພຣະເຈົ້າ

ຖ້າເຮົາໄດ້ຮັບຈາກພຣະເຈົ້າແລ້ວເຮົາຄວນໃຫ້ຄວາມຮັກຂອງພຣະອົງກັບຜູ້ອື່ນນຳ

**3. ການນະມັດສະການແບບງ່າຍໆ**

ມີຢູ່ 4 ຢ່າງຄື

- ການສັນລະເສີນ

- ອະຖິຖານ

- ອ່ານພຣະຄໍາ

- ປະຕິບັດ

**4. ເປັນຫຍັງເຮົາຈຶ່ງນະມັດສະການພຣະເຈົ້າ?**

**ມາລະໂກ 12:30** ( ອ່ານພ້ອມກັນ )

ເພາະວ່າເຮົາຮັກພຣະເຈົ້າເຮົາຈຶ່ງນະມັດນະມັດສະການສັນລະເສີນພຣະອົງ

**5. ການນະມັດສະການພຣະເຈົ້າຕ້ອງໃຊ້ຄົນຈໍານວນເທົ່າໃດ?**

**ມັດທາຍ 18:20**

**ໂຢຮັນ 13:34-35**

## ບົດຮຽນຂອງຜູ້ສອນ

## ບົດຮຽນທີ 5

**ການເຊື່ອຟັງ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ
- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນໍາຮ້ອງເພງນະມັດສະການ 2 ເພງ

**ອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ທົບທວນ**

**1. ພຣະລັກສະນະຂອງພຣະເຢຊູ**

ທະຫານ ຜູ້ສະແຫວງຫາ ຜູ້ລ້ຽງ ຜູ້ຫວ່ານ ພຣະບຸດ ຜູ້ຊອບທຳ ຜູ້ຮັບໃຊ້ ຜູ້ອາລັກຂາ

**2. ທົບທວນເລື່ອງການທະວີຄູນ**

ສາມສິ່ງທີ່ຜູ້ອາລັກຂາຕ້ອງເຮັດມີຫຍັງແນ່?

- ຄຳສັ່ງທຳອິດທີ່ພຣະເຈົ້າໃຫ້ກັບມະນຸດມີຫຍັງແນ່?
- ຄຳສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ກັບມະນຸດມີຫຍັງແນ່?
- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?
- ທະເລສາບສອງແຫ່ງໃນປະເທດອິດສະລະເອັນມີຊື່ວ່າແນວໃດ?
- ເຫດໃດທະເລສາບສອງແຫ່ງນີ້ຈຶ່ງມີຄວາມແຕກຕ່າງກັນ?
- ເຈົ້າຢາກເປັນທະເລສາບໃດ?

**3. ຄວາມຮັກ**

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່?
- ຄຳສັ່ງທີ່ສຳຄັນທີ່ສຸດເພື່ອສອນຄົນອື່ນມີຫຍັງແນ່?
- ຄວາມຮັກມາຈາກໃສ?
- ການນະມັດສະການແບບງ່າຍແມ່ນຫຍັງ?
- ເປັນຫຍັງຈຶ່ງນະມັດສະການແບບງ່າຍ?
- ການນະມັດສະການແບບງ່າຍຈຳເປັນຕ້ອງໃຊ້ຄົນຈຳນວນເທົ່າໃດ?

**4. ການອະທິຖານ**

- ສາມສິ່ງທີ່ຜູ້ຊອບທຳຄວນເຮັດມີຫຍັງແນ່?

- ເຮົາຄວນອະທິຖານແບບໃດ?

- ພຣະເຈົ້າຕອບຄຳອະຖິຖານຂອງເຮົາຢ່າງໃດ?

- ເບີໂທລະສັບຂອງພຣະເຈົ້າມີຫຍັງແນ່?

**ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**

**ມາລະໂກ 10:45**

ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາ ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ

- ການອົບຮົມຕາມຢ່າງພຣະເຢຊູ

**ພຣະເຢຊູຊົງເປັນຜູ້ຮັບໃຊ້ ຄວາມຮ້ອນຮົນຂອງພຣະເຢຊູຄືເພື່ອຮັບໃຊ້ພຣະບິດາ ໂດຍມອບຊີວິດຂອງພຣະອົງໃຫ້ກັບມະນຸດ**

**ສາມສິ່ງທີ່ຜູ້ຮັບໃຊ້ຄວນເຮັດມີຫຍັງແນ່?**

**ຟີລິບປອຍ 2:5-8**

ເຈົ້າທັງຫລາຍຈົ່ງມີນໍ້າໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ ພຣະອົງຊົງສະພາບຂອງພຣະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນເປັນສິ່ງທີ່ຕ້ອງຍຶດໜ່ວງໄວ້ ແຕ່ໄດ້ກັບຊົງຍອມສລະແລະຊົງຮັບສະພາບຂ້ອຍຂ້າຊົງຖືກຳເນີດເປັນມະນຸດ ແລະເມື່ອຊົງປະກົດພຣະອົງໃນສະພາບມະນຸດແລ້ວ

ພຣະອົງກໍຊົງຖ່ອມພຣະອົງລົງຍອມເຊື່ອຟັງຈົນເຖິງຄວາມມໍລະນາ ຄືເຖິງຄວາມມໍລະນາທີ່ໄມ້ກາງແຂນ

**1. ຜູ້ຮັບໃຊ້ຊ່ວຍເຫຼືອຜູ້ອື່ນ**

( ພຣະເຢຊູຕາຍເທິງໄມ້ກາງແຂນ
ເພື່ອຊ່ວຍເຮົາໃຫ້ກັບມາຍັງຄອບຄົວຂອງພຣະເຈົ້າ )

**2. ຜູ້ຮັບໃຊ້ມີຫົວໃຈຖ່ອມລົງ**

**3. ຜູ້ຮັບໃຊ້ເຊື່ອຟັງເຈົ້ານາຍຂອງພວກເຂົາ**

( ພຣະເຢຊູເຊື່ອຟັງພຣະບິດາ ເຮົາຕ້ອງເຊື່ອຟັງພຣະຜູ້ເປັນເຈົ້ານາຍຂອງເຮົາ )

**ພຣະເຢຊູຊົງຊ່ອຍເຮົາໂດຍການຕາຍເທິງໄມ້ກາງແຂນເພື່ອຄວາມບາບຂອງເຮົາ ພຣະອົງຊົງຖ່ອມພຣະອົງເອງແລະສແຫວງຫາທີ່ຈະເຊື່ອຟັງພຣະບິດາສະເໝີ ພຣະເຢຊູຊົງເປັນຜູ້ຮັບໃຊ້ແລະມີຊີວິດຢູ່ພາຍໃນເຮົາ ເມື່ອເຮົາທຳຕາມຢ່າງພຣະອົງ ເຮົາຈະເປັນຜູ້ຮັບໃຊ້ດ້ວຍ ເຮົາຈະຊ່ວຍຄົນອື່ນ ມີຫົວໃຈທີ່ຖ່ອມລົງ ແລະເຊື່ອຟັງພຣະຜູ້ເປັນເຈົ້ານາຍຂອງເຮົາ ຄື ພຣະເຢຊູ**

**ໃຜມີລິດອຳນາດສູງສຸດໃນໂລກ?**

**ມັດທາຍ 28:18**

ພຣະເຢຊູຈຶ່ງສະເດັດມາໃກ້ແລ້ວຊົງກ່າວກັບເຂົາວ່າ
ອຳນາດທັງຫມົດໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ

- ພຣະເຢຊູຊົງເປັນຜູ້ມີລິດອຳນາດສູງສຸດໃນສວັນແລະແຜ່ນດິນໂລກ ພຣະອົງຊົງມີລິດອຳນາດເໜືອກວ່າພໍ່ແມ່ ຄູອາຈານ ແລະເຈົ້າຫນ້າທີ່ລັດຖະບານ ທີ່ແທ້ຈິງ ພຣະອົງຊົງມີສິດທິແລະອຳນາດຍິ່ງກວ່າທຸກຄົນໃນໂລກ

ເພາະວ່າພຣະອົງຊົງມີສິດທິອຳນາດສູງສຸດ ເມື່ອພຣະອົງຊົງບັນຊາເຮົາ ເຮົາຈຶ່ງຄວນເຊື່ອຟັງພຣະອົງກ່ອນສິ່ງອື່ນໃດ

**ຄຳສັ່ງສີ່ຢ່າງທີ່ພຣະເຢຊູຊົງໃຫ້ແກ່ຜູ້ເຊື່ອທຸກຄົນຄືຫຍັງ?**

**ມັດທາຍ 28:19-20**

ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ
ຈົ່ງສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ

- **ຈົ່ງໄປ** ( ໃຊ້ນີ້ວຊີ້ແລະນີ້ວກາງເຮັດທ່າທາງຄືຄົນກຳລັງຍ່າງ )

- **ສ້າງສາວົກ** ( ໃຊ້ສັນຍານມືທັງສີ່ຈາກການນະມັດສະການແບບງ່າຍ ຄືການສັນລະເສີນ ການອະທິຖານ ການອົບຮົມພາກຄວາມຮູ້ ອົບຮົມພາກປະຕິບັດ )

- **ໃຫ້ພວກເຂົາຮັບບັບຕິສະມາ** ( ເອົາມືຂ້າງໜຶ່ງຈັບທີ່ແຂນຊອກຂອງແຂນອີກຂ້າງໜຶ່ງ ແລ້ວຍົກຂຶ້ນລົງກັບບາງຄົນທີ່ກຳລັງຮັບບັບຕິສະມາ )

- **ສອນພວກເຂົາໃຫ້ຟັງຄຳສັ່ງຂອງພຣະອົງ** ( ຫງາຍຝາມືຂຶ້ນເໝືອນທ່ານກຳລັງອ່ານໜັງສື ແລ້ວຫຍັບອອກຫຍັບເຂົ້າໄປທາງຊ້າຍແລະຂວາ ເໝືອນກັບວ່າທ່ານກຳລັງສອນຄົນຢູ່ )

**ເຮົາຄວນເຊື່ອຟັງພຣະເຢຊູຢ່າງໃດ?**

ຂ້ານ້ອຍຢາກແບ່ງປັນຈັກສາມເລື່ອງທີ່ເປັນພາບອະທິບາຍເຖິງລັກສະນະຂອງການເຊື່ອຟັງທີ່ພຣະເຈົ້າຊົງປາຖະໜາຈາກເຮົາ ຂໍໃຫ້ຕັ້ງໃຈຟັງເພື່ອທ່ານຈະສາມາດນຳໄປສອນຕໍ່ໄດ້

- **ການອົບຮົມຕາມຢ່າງພຣະເຢຊູ**

( ທົບທວນຊໍ້າໄດ້ເມື່ອທ່ານສອນບົດຮຽນໃຫ້ກັບຄູ່ຂອງທ່ານໃນອີກ 2-3 ນາທີຂ້າງໜ້າ )

**ທຸກເວລາ**

ລູກຊາຍຄົນໜຶ່ງບອກກັບພໍ່ຂອງເຂົາວ່າເຂົາຈະເຊື່ອຟັງພໍ່ທຸກໆເດືອນຍົກເວັ້ນແຕ່ເດືອນດຽວ ໂດຍສະເພາະລະຫວ່າງເດືອນນັ້ນ ເຂົາຈະເຮັດຫຍັງກໍໄດ້ຕາມທີ່ເຂົາມັກ (ດື່ມເຫຼົ້າ, ບໍ່ໄປໂຮງຮຽນ ແລະອື່ນໆ ) ທ່ານຄິດວ່າພໍ່ເຂົາຈະວ່າຢ່າງໃດ?

ເດັກຊາຍຄົນດຽວກັນບອກພໍ່ເຂົາວ່າ " ລູກຈະເຊື່ອຟັງພໍ່ທຸກໆອາທິດຍົກເວັ້ນແຕ່ອາທິດໜຶ່ງລູກຈະເຮັດຫຍັງກໍໄດ້ຕາມທີ່ລູກຢາກເຮັດ " ( ຕິດຢາເສບຕິດ, ໜີອອກຈາກບ້ານ ແລະອື່ນໆ ) ທ່ານຄິດວ່າພໍ່ຂອງເຂົາຈະວ່າຢ່າງໃດ?

ແລ້ວລູກຊາຍກໍເວົ້າວ່າ " ລູກຈະເຊື່ອຟັງພໍ່ທຸກໆວັນຍົກເວັ້ນແຕ່ວັນໜຶ່ງ ໃນວັນນັ້ນລູກຈະເຮັດຫຍັງກໍໄດ້ຕາມທີ່ລູກຢາກເຮັດ "( ແຕ່ງງານ, ຂ້າຄົນບາງຄົນ ແລະອື່ນໆ )

ທ່ານຄິດວ່າພໍ່ຂອງເຂົາຈະວ່າຢ່າງໃດ?

ເຮົາຄາດຫວັງໃຫ້ລູກຂອງເຮົາເຊື່ອຟັງທຸກເວລາ ໃນທຳນອງດຽວກັນ ເມື່ອພຣະເຢຊູໃຫ້ຄຳສັ່ງໄວ້ແກ່ເຮົາ ພຣະອົງຊົງຄາດຫວັງໃຫ້ເຮົາເຊື່ອຟັງພຣະອົງທຸກເວລາ

- **ທຸກເວລາ** ( ຫຍັບມືຂວາຈາກຊ້າຍໄປຂວາ )

**ຢ່າງທັນທີ**

ມີເດັກນ້ອຍຜູ້ຍິງຄົນໜຶ່ງທີ່ຮັກແມ່ຂອງນາງຫລາຍ ແມ່ຂອງນາງເຈັບໄຂ້ແລະໃກ້ຈະຕາຍ ຜູ້ເປັນແມ່ຂໍລູກສາວວ່າ " ແມ່ຂໍກີນນ້ຳແນ່ລູກ " ລູກສາວບອກວ່າ "ໂດຍແມ່ ... " ( ແລ້ວກະຢຸດໄປແລະບອກວ່າ ) ອາທິດໜ້າເດີແມ່! ແລ້ວທ່ານຄິດວ່າຜູ້ເປັນແມ່ຈະວ່າຢ່າງໃດ?

ເຮົາຄາດຫວັງໃຫ້ລູກຂອງເຮົາເຊື່ອຟັງຢ່າງທັນທີ
ບໍ່ແມ່ນຕາມຄວາມສະດວກຂອງພວກເຂົາ ໃນທຳນອງດຽວກັນ
ເມື່ອພຣະເຢຊູຊົງໃຫ້ຄຳສັ່ງແກ່ເຮົາ
ພຣະອົງຄາດຫວັງໃຫ້ເຮົາເຊື່ອຟັງພຣະອົງຢ່າງທັນທີ
ບໍ່ແມ່ນບາງເວລາໃນວັນຂ້າງໜ້າ

- **ຢ່າງທັນທີ** ( ຍົກມືຂຶ້ນແລ້ວເຮັດເໝືອນນ້ຳທີ່ກຳລັງໄຫລວົງ )

**ຈາກຫົວໃຈຮັກ**

ມີຊາຍໜຸ່ມຄົນໜຶ່ງທີ່ຕ້ອງການແຕ່ງງານ
ເຂົາບອກວ່າເຂົາຈະສ້າງຫຸ່ນຍົນໂຕໜຶ່ງທີ່ເຊື່ອຟັງຄຳສັ່ງເຂົາທຸກຢ່າງ
ເມື່ອເຂົາກັບມາແຕ່ວຽກຫຸ່ນຍົນໂຕນັ້ນຈະເວົ້າວ່າ “ ຂ້ອຍຮັກເຈົ້າທີ່ສຸດເລີຍ
ເຈົ້າເປັນຄົນທີ່ດຸໝັ່ນໃນການເຮັດວຽກ ” ຖ້າເຂົາຂໍໃຫ້ເມຍຫຸ່ນຍົນເຮັດຫຍັງກໍຕາມ
ເມຍຫຸ່ນໂຕນັ້ນກໍຈະເວົ້າວ່າ “ ໂດຍທີ່ຮັກ ເຈົ້າເປັນຄົນທີ່ເກັ່ງທີ່ສຸດໃນໂລກ ”
ທ່ານຄິດວ່າໝູ່ຂອງລາວຈະຄິດຢ່າງໃດກັບເມຍແບບນີ້? (
ຂໍໃຫ້ທ່ານເຮັດທ່າທາງແບບຫຸ່ນຍົນເມື່ອທ່ານເວົ້າແບບຫຸ່ນຍົນເວົ້າ )

ເຮົາຕ້ອງຄວນຮັກທີ່ມາຈາກຫົວໃຈທີ່ແທ້ຈິງ ບໍ່ແມ່ນຈາກໂປແກຣມຫຸ່ນຍົນທີ່ຕັ້ງໄວ້
ເຮົາຕ້ອງການຄວາມຮັກທີ່ແທ້ຈິງ ໃນທຳນອງດຽວກັນ
ພຣະເຈົ້າຕ້ອງການໃຫ້ເຮົາເຊື່ອຟັງຈາກຫົວໃຈທີ່ມີຄວາມຮັກຂອງເຮົາ

- **ຈາກຫົວໃຈທີ່ຮັກ** ( ເອົາມືໄຄ່ວກັນທີ່ໜ້າເອິກແລ້ວຍົກມືສັນລະເສີນພຣະເຈົ້າ )

**ທົບທວນການເຮັດສັນຍານມືສາມແບບຫລາຍໆຮອບ “ ພຣະເຢຊູຕ້ອງການໃຫ້ເຮົາເຊື່ອຟັງພຣະອົງທຸກເວລາ ເຊື່ອຟັງຢ່າງທັນທີ ເຊື່ອຟັງຈາກຫົວໃຈຮັກ ” ພຣະເຢຊູໄດ້ໃຫ້ຄຳສັ່ງແກ່ຜູ້ເຊື່ອທຸກຄົນສີ່ຢ່າງ ເຮົາຄວນຈະເຊື່ອຟັງພຣະອົງໄດ້ຢ່າງໃດ?**

- **ພຣະອົງຊົງໃຫ້ເຮົາໄປ**

( ໃຊ້ນິ້ວຊີ້ແລະນິ້ວກາງເຮັດທ່າທາງຄືຄົນກຳລັງຍ່າງ )

- **ເຮົາຄວນຈະເຊື່ອຟັງຢ່າງໃດ?**

( ທຸກເວລາ, ຢ່າງທັນທີແລະຈາກຫົວໃຈຮັກ )

**- ພຣະອົງສັ່ງໃຫ້ເຮົາສ້າງສາວົກ**

( ໃຊ້ສັນຍານມືທັງສີ່ຈາກການນະມັດສະການແບບງ່າຍ ຄືການສັນລະເສີນ ການອະທິຖານ ການອົບຮົມພາກຄວາມຮູ້ ອົບຮົມພາກປະຕິບັດ )

- **ເຮົາຄວນເຊື່ອຟັງພຣະອົງຢ່າງໃດ**

( ທຸກເວລາ, ຢ່າງທັນທີແລະຈາກຫົວໃຈຮັກ )

**- ພຣະອົງສັ່ງເຮົາໃຫ້ຮັບບັບຕິສະມາ ( ໃຫ້ຜູ້ເຊື່ອໃໝ່ທຸກຄົນຮັບບັບຕິສະມາ )**

( ເອົາມືຂ້າງໜຶ່ງຈັບທີ່ແຂນຊອກຂອງແຂນອີກຂ້າງໜຶ່ງ ແລ້ວຍົກຂຶ້ນລົງກັບບາງຄົນທີ່ກຳລັງຮັບບັບຕິສະມາ )

- **ເຮົາຄວນເຊື່ອຟັງພຣະອົງຢ່າງໃດ**

( ທຸກເວລາ, ຢ່າງທັນທີແລະຈາກຫົວໃຈຮັກ )

**- ພຣະອົງສັ່ງໃຫ້ເຮົາສອນພວກເຂົາໃຫ້ເຊື່ອຟັງຄຳສັ່ງຂອງພຣະອົງ**

( ຫງາຍຝາມືຂຶ້ນເໝືອນທ່ານກຳລັງອ່ານໜັງສື ແລ້ວຫຍັບອອກຫຍັບເຂົ້າໄປທາງຊ້າຍແລະຂວາ ເໝືອນກັບວ່າທ່ານກຳລັງສອນຄົນຢູ່ )

- **ເຮົາຄວນເຊື່ອຟັງພຣະອົງຢ່າງໃດ**

( ທຸກເວລາ, ຢ່າງທັນທີແລະຈາກຫົວໃຈຮັກ )

**ພຣະເຢຊູຊົງສັນຍາສິ່ງໃດໄວ້ກັບມະນຸດ?**

ມັດທາຍ 28:20

ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆວັນຈົນຫມົດກັບ

**ຂໍ້ພຣະຄຳພີທ່ອງຈຳ**

**ໂຢຮັນ 15:10**

**ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ**

**ເໝືອນດັ່ງເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ**
**ເຮົາຈິ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ**

ໃຫ້ທຸກຄົນຢືນຂຶ້ນແລະທ່ອງຂໍ້ພຣະຄໍາພີນໍາກັນ 10 ຮອບ ໂດຍ 6 ຮອບທໍາອິດໃຫ້ຜູ້ເຂົ້າອົບຮົມສາມາດອ່ານຈາກພຣະຄໍາພີຫຼືໃນປື້ມບັນທຶກຂອງຜູ້ເຂົ້າອົບຮົມໄດ້ ແລະໃນ 4 ຄັ້ງສຸດທ້າຍທຸກຄົນຕ້ອງທ່ອງຈາກຄວາມຈື່ ຜູ້ເຂົ້າອົບຮົມທ່ອງຊື່ແລະຂໍ້ພຣະຄໍາພີກ່ອນທີ່ຈະທ່ອງເນື້ອຫາໃນແຕ່ລະຄັ້ງແລະໃຜທ່ອງແລ້ວກໍໃຫ້ນັ່ງລົງ ( ສິ່ງນີ້ຈະຊ່ວຍໃຫ້ຜູ້ອົບຮົມຮູ້ວ່າໃຜທີ່ຜ່ານບົດຮຽນໃນຊົ່ວໂມງ " **ການອົບຮົມພາກປະຕິບັດ** "

## ການອົບຮົມພາກປະຕິບັດ

ໃນຊົ່ວໂມງຮຽນຂໍໃຫ້ຜູ້ເຂົ້າອົບຮົມນັ່ງຫັນໜ້າເຂົ້າຫາກັນກັບຄູ່ອະທິຖານ ໂດຍໃຫ້ກັນສລັບກັນສອນບົດຮຽນ

**- ໃຫ້ຄົນທີ່ສູງກວ່າຂອງແຕ່ລະຄູ່ເປັນຜູ້ນໍາ**

ເນັ້ນຍໍ້າວ່າທ່ານຕ້ອງການໃຫ້ພວກເຂົາສອນທຸກສິ່ງໃນຊົ່ວໂມງ " ການອົບຮົມພາກຄວາມຮູ້ " ດ້ວຍວິທີການທີ່ທ່ານນໍາ ກວດສອບໃຫ້ແນ່ໃຈວ່າພວກເຂົາໄດ້ຖາມຄໍາ ຖາມ ອ່ານຂໍ້ພຣະຄໍາພີ ຕອບຄໍາຖາມ ເຮັດສັນຍານມື ຢືນຂຶ້ນແລະທ່ອງພຣະຄໍາພີ 10 ຮອບ ພ້ອມກັນເໝືອນຢ່າງທີ່ທ່ານເຮັດນັ້ນ

**- ຫຼັງຈາກການສອນໃນແຕ່ລະບົດຮຽນ ຂໍໃຫ້ຜູ້ເຂົ້າອົບຮົມຄິດເຖິງຄົນບາງຄົນທີ່ພວກເຂົາຈະແບ່ງປັນບົດຮຽນນີ້ຫຼັງຈາກການອົບຮົມແລ້ວ ຂໍໃຫ້ພວກເຂົາຂຽນລາຍຊື່ບຸກຄົນເຫຼົ່ານັ້ນທີ່ດ້ານໜ້າຂອງເຈ້ຍບົດຮຽນ**

## ຈົບບົດຮຽນ

**ສ້າງເທິງຮາກຖານແຫ່ງຄວາມຈິງ**

ຂໍອາສາສະມັກ 3 ຄົນເພື່ອສະບົດບາດສົມມຸດ ໂດຍໃຫ້ 2 ຄົນເປັນຄົນເຮັດທ່າ ແລະອີກ 1 ຄົນເປັນຄົນບັນລະຍາຍ ຈັດໃຫ້ 2 ຄົນທີ່ເຮັດທ່າຢືນຢູ່ຂ້າງໜ້າທ່ານແລະໃຫ້ຜູ້ບັນລະຍາຍຢືນຢູ່ທາງຂ້າງ 2 ຄົນທີ່ເຮັດທ່າຄວນເປັນຜູ້ຊາຍ

ຂໍໃຫ້ຜູ້ບັນລະຍາຍອ່ານ **ມັດທາຍ 7:24-25 ( ຄົນສະຫຼາດສ້າງເຮືອນເທິງດານຫີນ )**

**ມັດທາຍ 7:24-25**

**ເຫດສັນນັ້ນທຸກຄົນທີ່ຟັງຄໍາເຫຼົ່ານີ້ຂອງເຮົາແລະປະຕິບັດຕາມ ຄົນນັ້ນກໍປຽບເໝືອນຄົນສະຫຼາດທີ່ກໍ່ສ້າງຕຶກຂອງຕົນເທິງດານຫີນ. ຝົນກໍຕົກ, ນໍ້າກໍນອງ, ລົມກໍພັດປະທະຕຶກນັ້ນ ແຕ່ຕຶກນັ້ນກໍບໍ່ພັງເພລົງ ເພາະຮາກມັນຕັ້ງຢູ່ເທິງຫີນ**

ຫຼັງຈາກຜູ້ບັນລະຍາຍອ່ານຂໍ້ຄວາມພຣະຄໍາພີແລ້ວ ໃຫ້ອະທິບາຍເຖິງສິ່ງທີ່ເກີດຂຶ້ນກັບຄົນສະຫຼາດ ຂໍໃຫ້ເຮັດສຽງລົມພະຍຸແລະຖອກນໍ້າເທິງຫີນຂອງອາສາສະມັກຄົນທໍາອິດ ( ເຊື່ອງຂວດນໍ້າໄວ້ກ່ອນທີ່ຈະມີການສະແດງ )

ຂໍໃຫ້ຜູ້ບັນລະຍາຍອ່ານ **ມັດທາຍ 7:26-27**

**ມັດທາຍ 7:26-27 ( ຄົນໂງ່ສ້າງເຮືອນຢູ່ເທິງດິນຊາຍ )**

**ແຕ່ທຸກຄົນທີ່ໄດ້ຍິນຖ້ອຍຄໍາເຫຼົ່ານີ້ຂອງເຮົາແລະບໍ່ປະຕິບັດ ຄົນນັ້ນກໍປຽບເໝືອນຄົນໂງ່ທີ່ກໍ່ສ້າງຕຶກຂອງຕົນເທິງຫາດຊາຍ. ຝົນກໍຕົກ, ນໍ້າກໍນອງ, ລົມກໍພັດປະທະຕຶກນັ້ນຕຶກນັ້ນກໍເພພັງລົງ ແລະການເພພັງຂອງມັນກໍເປັນການໃຫ່ຍຫລວງ**

ຫຼັງຈາກຜູ້ບັນລະຍາຍອ່ານຈົບແລ້ວ ໃຫ້ອະທິບາຍເຖິງສິ່ງທີ່ເກີດຂຶ້ນກັບຄົນໂງ່ ຂໍໃຫ້ເຮັດສຽງລົມພະຍຸແລະຖ້ອກນໍ້າໃສ່ຫົວຂອງຂອງອາສາສະມັກຄົນທີ 2 ໃຫ້ເຂົາລົ້ມລົງໃນຕອນຈົບການສະແດງເມື່ອທ່ານເວົ້າວ່າ “ ແລະເຮືອນນັ້ນກໍເພພັງລົງ ”

- ເມື່ອເຮົາຟັງຄໍາສັ່ງຂອງພຣະເຢຊູ ເຮົາກໍເປັນເໝືອນຄົນສະຫຼາດ ເມື່ອເຮົາບໍ່ຟັງເຮົາກໍເປັນເໝືອນຄົນໂງ່

ເຮົາຕ້ອງກວດສອບໃຫ້ແນ່ໃຈວ່າຄົນທີ່ເຮົາກຳລັງຝຶກອົບຮົມນັ້ນມີຊີວິດທີ່ເຊື່ອຟັງຄຳສັ່ງຂອງພຣະເຢຊູ
ພຣະວະຈະນະຂອງພຣະອົງເປັນຮາກຖານທີ່ໝັ້ນຄົງຕໍ່ຄວາມຍາກລຳບາກໃນຊີວິດ

**ແຜນທີ່ກິດຈະການບົດທີ 29-ສ່ວນທີ1**

ຫຼັງຈາກການສະແດງເລື້ອງຮາກທີ່ແທ້ຈິງແລ້ວ ແຈກເຈັ້ຍໂພດສເຕີ 1 ໃບ ເຈັ້ຍເປົ່າ, ບິກ, ສໍ, ສໍສີ, ສີທຽນ, ປ້າຍສັນຍາລັກແລະອື່ນໆ ໃຫ້ກັບຜູ້ເຂົ້າອົບຮົມແຕ່ລະຄົນ

-
ອະທິບາຍວ່າທຸກຄົນຈະຕ້ອງເຮັດແຜນທີ່ຂອງບໍລິເວນສະຖານທີ່ທີ່ພຣະເຈົ້າຊົງເອີ້ນໃຫ້ເຂົາຫຼືເພິ່ນໄປ
ມີເວລາຫຼາຍຄັ້ງໃນລະຫວ່າງການອົບຮົມທີ່ພວກເຂົາຈະໄດ້ເຮັດແຜນທີ່ນີ້ ພວກເຂົາສາມາດເພີ້ມເຕີມໄດ້ເຊັ່ນກັນ
ແຜນທີ່ນີ້ເປັນລັກສະນະແທນການເຊື່ອຟັງຂອງພວກເຂົາຕໍ່ຄຳສັ່ງຂອງພຣະເຢຊູທີ່ບອກວ່າ “ ຈົ່ງໄປ ”

- ຂໍໃຫ້ຜູ້ອົບຮົມແຕ້ມແຜນທີ່ຂອງບໍລິເວນສະຖານທີ່ທີ່ພຣະເຈົ້າເອີ້ນເຂົາໄປ

ແຜນທີ່ຂອງພວກເຂົາຄວນປະກອບໄປດ້ວຍຖະໜົນ, ແມ່ນ້ຳ, ພູ, ສະຖານທີ່ທີ່ເປັນຈຸດສັງເກດແລະອື່ນໆ

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 6**

**ການດຳເນີນຊີວິດ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນຳຮ້ອງເພງນະມັດສະການ 2 ເພງ

**ອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ທົບທວນ**

**1. ພຣະລັກສະນະຂອງພຣະເຢຊູ**

ທະຫານ ຜູ້ສະແຫວງຫາ ຜູ້ລ້ຽງ ຜູ້ຫວ່ານ ພຣະບຸດ ຜູ້ຊອບທຳ ຜູ້ຮັບໃຊ້ ຜູ້ອາລັກຂາ

**2. ທົບທວນເລື່ອງການທະວີຄູນ**

ສາມສິ່ງທີ່ຜູ້ອາລັກຂາຕ້ອງເຮັດມີຫຍັງແນ່?

- ຄຳສັ່ງທຳອິດທີ່ພຣະເຈົ້າໃຫ້ກັບມະນຸດມີຫຍັງແນ່?
- ຄຳສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ກັບມະນຸດມີຫຍັງແນ່?
- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?
- ທະເລສາບສອງແຫ່ງໃນປະເທດອິດສະລະເອັນມີຊື່ວ່າແນວໃດ?
- ເຫດໃດທະເລສາບສອງແຫ່ງນີ້ຈຶ່ງມີຄວາມແຕກຕ່າງກັນ?
- ເຈົ້າຢາກເປັນທະເລສາບໃດ?

**3. ຄວາມຮັກ**

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່?
- ຄຳສັ່ງທີ່ສຳຄັນທີ່ສຸດເພື່ອສອນຄົນອື່ນມີຫຍັງແນ່?
- ຄວາມຮັກມາຈາກໃສ?
- ການນະມັດສະການແບບງ່າຍແມ່ນຫຍັງ?
- ເປັນຫຍັງຈຶ່ງນະມັດສະການແບບງ່າຍ?
- ການນະມັດສະການແບບງ່າຍຈຳເປັນຕ້ອງໃຊ້ຄົນຈຳນວນເທົ່າໃດ?

**4. ການອະທິຖານ**

- ສາມສິ່ງທີ່ຜູ້ຊອບທຳຄວນເຮັດມີຫຍັງແນ່?

- ເຮົາຄວນອະທິຖານແບບໃດ?

- ພຣະເຈົ້າຕອບຄຳອະຖິຖານຂອງເຮົາຢ່າງໃດ?

- ເປີໂທລະສັບຂອງພຣະເຈົ້າມີຫຍັງແນ່?

**5. ການເຊື່ອຟັງ**

- ສາມສິ່ງທີ່ຜູ້ຊອບທຳຄວນເຮັດມີຫຍັງແນ່?

- ໃຜແມ່ນຜູ້ທີ່ມີສິດທິອຳນາດສູງສຸດ?

- ຄຳສັ່ງສີ່ຢ່າງທີ່ພຣະເຢຊູຊົງໃຫ້ແກ່ຜູ້ທີ່ເຊື່ອທຸກຄົນມີຫຍັງແນ່?

- ເຮົາຄວນເຊື່ອຟັງພຣະເຢຊູຢ່າງໃດ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ກັບເຮົາ?

**ພຣະເຢຊູຊົງມີພຣະລັກສະນະຢ່າງໃດ?**

**ມັດທາຍ 3:16-17**

ຄັນພຣະອົງຊົງຮັບບັບຕິສະມາແລ້ວ ກໍສະເດັດຂຶ້ນມາຈາກນໍ້າທັນທີ ແລ້ວເບິ່ງແມ, ທ້ອງຟ້າກໍໄຂອອກ ( ແກ່ພຣະອົງ ) ແລະພຣະອົງຊົງເຫັນພຣະວິນຍານຂອງພຣະເຈົ້າເໝືອນດັ່ງນົກເຂົາສະເດັດລົງມາຢູ່ເທິງພຣະອົງ. ແລະເບິ່ງແມ, ມີພຣະສຸຣະສຽງຈາກຟ້າສວັນຊົງກ່າວວ່າ “ ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ ”

- ພຣະເຢຊູຊົງເປັນພຣະບຸດ ຄຳວ່າ ( ບຸດມະນຸດ ) ເປັນຄຳອະທິບາຍເຖິງພຣະອົງເອງທີ່ພຣະເຢຊູຊົງໃຊ້ ພຣະອົງຊົງເປັນຜູ້ທຳອິດທີ່ເອີ້ນພຣະເຈົ້າແຫ່ງນິລັນດອນວ່າ “ ພຣະບິດາ ” ເຫດເພາະຈາກການເປັນຄືນມາຈາກຄວາມຕາຍຂອງພຣະອົງ ເວລານີ້ເຮົາຈຶ່ງສາມາດເປັນສາມະຊິກໃນຄອບຄົວຂອງພຣະເຈົ້າໄດ້ເຊັ່ນກັນ

- **ບຸດຊາຍ/ບຸດສາວ** ( ເອົາມືມາແປະທີ່ປາກ
ທຳທ່າເໝືອນກັບວ່າທ່ານກຳລັງກິນເຂົ້າຢູ່ ) ບຸດທັງຫລາຍກໍກິນຫລາຍ

**ສາມສິ່ງທີ່ພຣະບຸດຊົງກະທຳ?**

**ໂຢຮັນ 17:4, 18-19**

ຂ້ານ້ອຍໄດ້ຖວາຍກຽດຕິຍົດແດ່ພຣະເຈົ້າໃນໂລກ
ຂ້ານ້ອຍໄດ້ເຮັດກິດຈະການທີ່ພຣະເຈົ້າຊົງໃຫ້ຂ້ານ້ອຍເຮັດນັ້ນສຳເຣັດແລ້ວ.
ພຣະອົງຊົງໃຊ້ຂ້ານ້ອຍມາໃນໂລກສັນໃດ ຂ້ານ້ອຍກໍເຂົ້າໄປໃນໂລກສັນນັ້ນ.
ຂ້ານ້ອຍຊໍາຣະຕົວເພາະເຫັນແກ່ເຂົາ
ເພື່ອໃຫ້ເຂົາຮັບການຊົງຊຳຣະແຕ່ງຕັ້ງໄວ້ດ້ວຍຄວາມຈິງເໝືອນກັນ

**1. ບຸດທັງຫລາຍໃຫ້ກຽດບິດາຂອງພວກເຂົາ**

( ພຣະເຢຊູຖວາຍພຣະສີຣິແດ່ພຣະບິດາໃນຂະນະທີ່ພຣະອົງຊົງຢູ່ໃນໂລກ )

**2. ບຸດທັງຫລາຍຕ້ອງການຄວາມເປັນນໍ້າໜຶ່ງໃຈດຽວກັນໃນຄອບຄົວ**

( ພຣະເຢຊູຕ້ອງການໃຫ້ຜູ້ທີ່ທຳຕາມຢ່າງພຣະອົງເປັນໜຶ່ງດຽວກັນ
ເໝືອນຢ່າງທີ່ພຣະອົງແລະພຣະບິດາຊົງເປັນໜຶ່ງດຽວກັນ )

**3. ບຸດທັງຫລາຍຕ້ອງການໃຫ້ຄອບຄົວປະສົບຄວາມສຳເຣັດ**

( ເໝືອນດັ່ງທີ່ພຣະເຈົ້າສົ່ງພຣະເຢຊູມາໃນໂລກເພື່ອໃຫ້ປະສົບຄວາມສຳເຣັດ
ພຣະເຢຊູຊົງສົ່ງເຮົາໄປເພື່ອປະສົບຄວາມສຳເຣັດດ້ວຍ )

**ພຣະເຢຊູຊົງເປັນພຣະບຸດແລະພຣະອົງຊົງຢູ່ພາຍໃນເຮົາ
ເມື່ອເຮົາທຳຕາມຢ່າງພຣະອົງ ເຮົາເປັນບັນດາບຸດຊາຍແລະບຸດສາວ
ເຮົາຈະໃຫ້ກຽດແດ່ພຣະບິດາໃນສວັນຂອງເຮົາ
ປາຖະໜາທີ່ຈະເປັນນໍ້າໜຶ່ງໃຈດຽວກັນໃນຄອບຄົວຂອງພຣະເຈົ້າ
ແລະທຳງານເພື່ອຄວາມສຳເຣັດຂອງອານາຈັກຂອງພຣະເຈົ້າ**

**- ເປັນຫຍັງພຣະຣາຊະກິດຂອງພຣະເຢຊູຈຶ່ງປະສົບຄວາມສຳເຣັດ?**

**ລູກາ 4:14**

ແລ້ວພຣະເຢຊູໄດ້ສະເດັດກັບຄືນແຂວງຄາລີເລດ້ວຍລິດແຫ່ງພຣະວິນຍານ
ແລະກິຕິສັບຂອງພຣະອົງໄດ້ຊ່າລືໄປທົ່ວອ້ອມເຂດນັ້ນ

**ພຣະວິນຍານບໍລິສຸດຊົງປະທານລິດອຳນາດແກ່ພຣະເຢຊູເພື່ອກະທຳໄດ້ສຳເຣັດ
ພຣະເຢຊູຊົງຮັບໃຊ້ດ້ວຍລິດອຳນາດຂອງພຣະວິນຍານ
ບໍ່ແມ່ນດ້ວຍກຳລັງຂອງພຣະອົງເອງ ເມື່ອເຮົາທຳຕາມຢ່າງພຣະເຢຊູ
ເຮົາຮຽນແບບພຣະເຢຊູວິທີການຮັບໃຊ້ຂອງພຣະອົງ
ພຣະເຢຊູຊົງເພິ່ງພາພຣະວິນຍານບໍລິສຸດຢູ່ສະເໝີໄປ
ຖ້າຫາກພຣະເຢຊູຍັງຕ້ອງເພິ່ງພາພຣະວິນຍານບໍລິສຸດແລ້ວເຮົາຈະຕ້ອງເພິ່ງພາພຣ
ະວິນຍານຈັກເທົ່າໃດ**

**-
ພຣະເຢຊູຊົງສັນຍາສິ່ງໃດຕໍ່ຜູ້ເຊື່ອກ່ຽວກັບພຣະວິນຍານບໍລິສຸດກ່ອນທີ່ຈະສະເດັດສູ່
ກາງແຂນ?**

**ໂຢຮັນ 14:16-18**

ຝ່າຍເຮົາຈະທູນຂໍພຣະບິດາ
ແລະພຣະອົງຈະຊົງປະທານຜູ້ຊ່ວຍອີກຜູ້ໜຶ່ງໃຫ້ແກ່ພວກທ່ານ
ເພື່ອຈະຢູ່ກັບພວກທ່ານຕລອດໄປເປັນນິດ ຄືພຣະວິນຍານແຫ່ງຄວາມຈິງ
ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນແລະຮູ້ຈັກພຣະອົງ
ແຕ່ທ່ານທັງຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບພວກທ່ານ
ແລະຈະປະທັບຢູ່ໃນພວກທ່ານ

**1. ພຣະອົງຈະຊົງປະທານພຣະວິນຍານບໍລິສຸດໃຫ້ແກ່ເຮົາ**

( ທີ່ປຶກສາ - ພຣະວິນຍານແຫ່ງຄວາມຈິງ )

**2. ພຣະວິນຍານບໍລິສຸດຈະຢູ່ກັບເຮົາຕະຫລອດໄປເປັນນິດ**

**3. ພຣະວິນຍານບໍລິສຸດຈະຢູ່ໃນເຮົາ**

**4. ພຣະເຢຊູຈະບໍ່ປະຖິ້ມເຮົາໃຫ້ເປັນລູກກຳພ້າ**

(
ເຮົາເປັນສາມະຊິກໃນຄອບຄົວຂອງພຣະອົງເພາະພຣະວິນຍານບໍລິສຸດຊົງຢູ່ພາຍໃນເຮົາ )

**-**
**ພຣະເຢຊູຊົງສັນຍາສິ່ງໃດຕໍ່ຜູ້ເຊື່ອກ່ຽວກັບພຣະວິນຍານບໍລິສຸດຫລັງຈາກທີ່ຊົງເປັນຄືນມາຈາກຄວາມຕາຍ?**

**ກິຈະການ 1:8**

ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ
ເມື່ອພຣະວິນຍານບໍລິສຸດຈະສະເດັດມາເຖີງພວກທ່ານ
ແລະພວກທ່ານຈະເປັນພຍານຝ່າຍເຮົາໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍກັບແຂວງຊາມາເຣັຽ, ແລະຈົນເຖີງສຸດປາຍແຜ່ນດິນໂລກ

ພຣະວິນຍານບໍລິສຸດຈະປະທານລິດອຳນາດໃຫ້ແກ່ເຮົາເມື່ອພຣະອົງໄປກັບເຮົາ

**- ຄຳສັ່ງສີ່ຢ່າງທີ່ໃຫ້ເຮົາເຊື່ອຟັງກ່ຽວກັບພຣະວິນຍານບໍລິສຸດ?**

**ຄາລາເຕັຽ 5:16**

ແຕ່ເຮົາຂໍບອກວ່າ ຈົ່ງຍອມໃຫ້ພຣະວິນຍານບໍລິສຸດເປັນຜູ້ຊົງນຳພາ
ແລະເຈົ້າທັງຫລາຍຈະບໍ່ໄດ້ເຮັດຕາມຕັນຫາຂອງມະນຸດ

*ດຳເນີນຊີວິດໂດຍພຣະວິນຍານ*

ເລືອກອາສາສະມັກຄົນໜຶ່ງ ການຈັບຄູ່ຄວນເປັນຊາຍກັບຊາຍ ຫຼື ຍິງກັບຍິງ

( ຂໍໃຫ້ໃຊ້ເພດດຽວກັນຈັບຄູ່ກັນສະເໝີ
ເວັ້ນແຕ່ວັດທະນະທັມນັ້ນຜູ້ຍິງແລະຜູ້ຊາຍສາມາດສະແດງບົດບາດສົມມຸດນີ້ຮ່ວມກັນໄດ້ )

ເຮົາກຳລັງຈະສະແດງໃຫ້ທ່ານເຫັນຄວາມຈິງກ່ຽວກັບການດຳເນີນຊີວິດໄປກັບພຣະວິນຍານບໍລິສຸດຂອງພຣະເຈົ້າ ໃນການສະແດງບົດບາດສົມມຸດນີ້
ເຮົາແລະຄູ່ຂອງເຮົາຄືພຣະວິນຍານບໍລິສຸດ ພຣະຄຳພີບອກວ່າ
**ຈົ່ງດຳເນີນໂດຍພຣະວິນຍານ**

 - ການສາທິດ " ການດຳເນີນຊີວິດໂດຍພຣະວິນຍານ " ຮ່ວມກັບຈັບຄູ່ຂອງທ່ານ ທ່ານແລະຄູ່ຂອງທ່ານຍ່າງໄປນຳກັນ ( ຈັບມືກັນ ໂຕຕິດກັນ ) ແລະເວົ້າກັນໄປ ເມື່ອພຣະວິນຍານບໍລິສຸດຊົງຕ້ອງການໃຫ້ໄປບາງທີ່ກໍ່ໄປກັບພຣະອົງ ( ຜູ້ທີ່ສະແດງເປັນພຣະວິນຍານ )
ບາງຄັ້ງທ່ານພະຍາຍາມຈະຍ່າງອອກໄປຈາກບ່ອນທີ່ພຣະວິນຍານຊົງກຳລັງໄປ ( ໃຫ້ຈັບມືແລະໂຕຕິດກັນກັບຄູ່ຂອງທ່ານໄວ້ສະເໝີ ເພາະພຣະວິນຍານບໍລິສຸດບໍ່ເຄີຍປະຖິ້ມເຮົາ
ພາບທີ່ອອກມາຄືມີຄວາມລຳບາກຫຼາຍເພາະພຣະອົງຈະໄປທາງໜຶ່ງສ່ວນທ່ານກໍ່ຈະໄປອີກທາງໜຶ່ງ

 " ເຮົາຄວນຍ່າງໄປໃນທາງທີ່ພຣະວິນຍານຊົງປາຖະໜາ ບໍ່ແມ່ນຕົວເຮົາປາຖະໜາບາງຄັ້ງເຮົາຕ້ອງການໄປຕາມທາງຂອງເຮົາເອງ ຊຶ່ງສາມາດເຮັດໃຫ້ເກີດມີບັນຫາຝ່າຍວິນຍານແລະຄວາມຂັດແຍ່ງຢ່າງຮູນແຮງໃນຫົວໃຈຂອງເຮົາ "

**- ດຳເນີນໂດຍພຣະວິນຍານ** ( ໃຊ້ນິ້ວມືຂອງທັງສອງຂ້າງເຮັດທ່າເໝືອນຄົນສອງຄົນກຳລັງຍ່າງ )

**ເອເຟໂຊ 4:30**

ເພາະໂດຍພຣະວິນຍານນັ້ນທ່ານທັງຫລາຍໄດ້ຖືກຊົງປະທັບຕາໝາຍໄວ້ ເພື່ອວັນທີ່ຊົງໄຖ່ໃຫ້ພົ້ນ

***1. ຢ່າເຮັດໃຫ້ພຣະວິນຍານເສັຽພະທັຍ***

 ພຣະຄຳພີບອກວ່າ ຢ່າເຮັດໃຫ້ພຣະວິນຍານບໍລິສຸດເສັຽພະທັຍ ພຣະວິນຍານບໍລິສຸດຊົງມີຄວາມຮູ້ສຶກ ແລະເຮົາສາມາດເຮັດໃຫ້ພຣະອົງເສົ້າໄດ້

- ຍ່າງໄປຮອບໆພ້ອມກັນກັບພຣະວິນຍານບໍລິສຸດ ( ຄູ່ຂອງທ່ານ ) ແລະເລີ້ມຕົ້ນເວົ້ານິນທາຄົນບາງຄົນໃນກຸ່ມ ເມື່ອທ່ານເຮັດສິ່ງນີ້ ພຣະວິນຍານບໍລິສຸດກໍເລີ້ມເສັຽພະທັຍ
ທ່ານຫາເລື້ອງຜິດຖຽງກັນກັບຜູ້ເຂົ້າອົບຮົມຄົນອື່ນ ແລະພຣະວິນຍານບໍລິສຸດຕອງເສັຽພະທັຍອີກ

- ຈົ່ງໃສ່ໃຈໃນວິທີການດຳເນີນຊີວິດຂອງທ່ານ ເພາະພຣະວິນຍານບໍລິສຸດຊົງຢູ່ໃນທ່ານແລະສາມາດເສັຽພະທັຍໄດ້ ເຮົາສາມາດເຮັດໃຫ້ພຣະວິນຍານບໍລິສຸດຮູ້ສຶກໂສກເສົ້າໂດຍສິ່ງທີ່ເຮົາກະທຳຫຼືເວົ້າໄດ້

**- ຢ່າເຮັດໃຫ້ພຣະວິນຍານເສັຽພະທັຍ** ( ເອົາມືລູບຕາ ເໝືອນວ່າທ່ານກຳລັງຮ້ອງໃຫ້ແລ້ວແກ່ງຫົວໄປມາສັນຍານວ່າ ບໍ່ )

**ເອເຟໂຊ 5:18**

ແລະຢ່າເມົາເຫຼົ້າແວງ ຊຶ່ງພາໃຫ້ເສັຽຄົນແຕ່ຈົ່ງເຕັມໄປດ້ວຍພຣະວິນຍານກໍດີກວ່າ

***2. ຈົ່ງເຕັມໄປດ້ວຍພຣະວິນຍານ***

ພຣະຄຳພີເວົ້າວ່າ ຈົ່ງເຕັມໄປດ້ວຍພຣະວິນຍານ ໝາຍຄວາມວ່າເຮົາຕ້ອງການພຣະວິນຍານໃນທຸກສ່ວນຂອງຊີວິດເຮົາແລະທຸກສ່ວນຂອງວັນ ເມື່ອເຮົາຮັບພຣະຄຣິດ ເຮົາກໍ່ຮັບທັງໝົດຂອງພຣະວິນຍານບໍລິສຸດເທົ່າທີ່ເຮົາສາມາດຮັບໄດ້ໃນໂລກນີ້ ມັນເປັນໄປບໍ່ໄດ້ທີ່ຈະຮັບພຣະວິນຍານບໍລິສຸດຫລາຍກວ່ານີ້ອີກແລ້ວ ແຕ່ຢ່າງໃດກໍຕາມມັນເປັນໄປໄດ້ທີ່ພຣະວິນຍານບໍລິສຸດຈະໄດ້ " ເຮົາ " ຫລາຍຂຶ້ນ! ໃນແຕ່ລະວັນເຮົາໃຫ້ພຣະອົງເຕັມລົ້ນທຸດສ່ວນໃນຊີວິດຂອງເຮົາ

**- ຈົ່ງເຕັມໄປດ້ວຍພຣະວິນຍານ** ( ໃຊ້ມືທັງສອງຂ້າງເຮັດທ່າໄຫລຂຶ້ນໄປຈາກຂາຈົນເຖິງຫົວຂອງທ່ານ )

**1 ເທຊະໂລນິກ**

ຢ່າຫັກຫ້າມພຣະວິນຍານ

***3.ຢ່າຫັກຫ້າມພຣະວິນຍານ***

ພຣະຄຳພີບອກວ່າ ຢ່າຫັກຫ້າມພຣະວິນຍານ ໝາຍຄວາມວ່າເຮົາບໍ່ຄວນພະຍາຍາມຍຸດການທຳງານຂອງພຣະອົງໃນຊີວິດຂອງເຮົາ

- ຍ່າງໄປເລື້ອຍໆກັບພຣະວິນຍານບໍລິສຸດ ( ຄູ່ຂອງທ່ານ ) ແລະບອກກຸ່ມວ່າ ພຣະວິນຍານບໍລິສຸດຊົງຕ້ອງການໃຫ້ທ່ານເປັນພະຍານກັບຜູ້ເຂົ້າອົບຮົມຄົນໜຶ່ງຂໍໃຫ້ທ່ານປະຕິເສດທີ່ຈະເປັນພະຍານ ຫາຂໍ່ແກ້ໂຕ ແລະຍ່າງໄປຕາມທາງຂອງທ່ານພຣະວິນຍານບໍລິສຸດຂໍໃຫ້ທ່ານອະທິຖານເພື່ອຄົນປ່ວຍ ແຕ່ທ່ານປະຕິເສດ ຫາຂໍ່ແກ້ໂຕ ແລະຍ່າງໄປອີກທາງ

ເຮົາມັກຈະປິດບັງງານຂອງພຣະເຈົ້າໂດຍການແກ້ໂຕແລະເຮັດໃນສິ່ງທີ່ເຮົາຕ້ອງການແທນທີ່ຈະເຮັດຕາມການຊົງນໍາຂອງພຣະວິນຍານບໍລິສຸດ ເຮົາສາມາດດັບໄຟແຫ່ງພຣະວິນຍານບໍລິສຸດໄດ້ໂດຍສິ່ງທີ່ເຮົາກະທໍາຫຼືການປາກເວົ້າ ມັນເປັນການພະຍາຍາມດັບໄຟແຫ່ງພຣະວິນຍານບໍລິສຸດຂອງເຮົາ

**- ຢ່າດັບໄຟແຫ່ງພຣະວິນຍານ** ( ຕັ້ງນິ້ວຊີ້ຂຶ້ນເປັນເໝືອນທຽນໄຂເລັ້ມໜຶ່ງເຮັດທ່າທາງເໝືອນວ່າທ່ານກໍາລັງພະຍາຍາມເປົ່າໃຫ້ມັນດັບ ແກ່ງຫົວຂອງທ່ານໄປມາເປັນສັນຍານວ່າ ບໍ່ )

## ຂໍ່ພຣະຄໍາພີທ່ອງຈໍາ

**ໂຢຮັນ 7:38**

ຜູ້ທີ່ວາງໃຈໃນເຮົາແມ່ນໍ້າອັນມີຊີວິດຈະໄຫລອອກຈາກພາຍໃນຜູ້ນັ້ນ ຕາມທີ່ພຣະຄໍາພີກ່າວໄວ້ແລ້ວ

ໃຫ້ທຸກຄົນຍືນຂຶ້ນແລະທ່ອງຂໍ້ພຣະຄໍາພີນໍາກັນ 10 ຮອບ ໂດຍ 6 ຮອບທໍາອິດໃຫ້ຜູ້ເຂົ້າອົບຮົມສາມາດອ່ານຈາກພຣະຄໍາພີຫຼືໃນປື້ມບັນທຶກຂອງຜູ້ເຂົ້າອົບຮົມໄດ້ ແລະໃນ 4 ຄັ້ງສຸດທ້າຍທຸກຄົນຕ້ອງທ່ອງຈາກຄວາມຈື່ ຜູ້ເຂົ້າອົບຮົມທ່ອງຊື່ແລະຂໍ້ພຣະຄໍາພີກ່ອນທີ່ຈະທ່ອງເນື້ອຫາໃນແຕ່ລະຄັ້ງແລະໃຜທ່ອງແລ້ວກໍໃຫ້ນັ່ງລົງ ( ສິ່ງນີ້ຈະຊ່ອຍໃຫ້ຜູ້ອົບຮົມຮູ້ວ່າໃຜທີ່ຜ່ານບົດຮຽນໃນຊົ່ວໂມງ " **ການອົບຮົມພາກປະຕິບັດ** "

## ການອົບຮົມພາກປະຕິບັດ

ໃນຊົ່ວໂມງຮຽນຂໍໃຫ້ຜູ້ເຂົ້າອົບຮົມນັ່ງຫັນໜ້າເຂົ້າຫາກັນກັບຄູ່ອະທິຖານ ໂດຍໃຫ້ກັນສລັບກັນສອນບົດຮຽນ

**- ໃຫ້ຄົນທີ່ນັ່ງຢູ່ໄກຈາກກຸ່ມຫລາຍທີ່ສຸດຂອງແຕ່ລະຄູ່ເປັນຜູ້ນໍາ**

ເນັ້ນຢໍ້າວ່າທ່ານຕ້ອງການໃຫ້ພວກເຂົາສອນທຸກສິ່ງໃນຊົ່ວໂມງ “ ການອົບຮົມພາກຄວາມຮູ້ ” ດ້ວຍວິທີການທີ່ທ່ານນໍາ ກວດສອບໃຫ້ແນ່ໃຈວ່າພວກເຂົາໄດ້ຖາມຄໍາ ຖາມ ອ່ານຂໍ້ພຣະຄໍາພີ ຕອບຄໍາຖາມ ເຮັດສັນຍານມື ຢືນຂຶ້ນແລະທ່ອງພຣະຄໍາພີ 10 ຮອບ ພ້ອມກັນເຫມືອນຢ່າງທີ່ທ່ານເຮັດນັ້ນ

**- ຫຼັງຈາກການສອນໃນແຕ່ລະບົດຮຽນ ຂໍໃຫ້ຜູ້ເຂົ້າອົບຮົມຄິດເຖິງຄົນບາງຄົນທີ່ພວກເຂົາຈະແບ່ງປັນບົດຮຽນນີ້ຫຼັງຈາກການອົບຮົວແລ້ວ ຂໍໃຫ້ພວກເຂົາຂຽນລາຍຊື່ບຸກຄົນເຫຼົ່ານັ້ນທີ່ດ້ານຫນ້າຂອງເຈ້ຍບົດຮຽນ**

## ຈົບບົດຮຽນ

( ນີ້ເປັນເວລາທີ່ມີຄວາມຫມາຍຂອງການຮັບໃຊ້ ຖ້າຫາກທ່ານມີເວລາຈໍາກັດ ຂໍໃຫ້ທ່ານເລື່ອນເວລາຊ່ວງນີ້ໄປທໍາຕອນເລີ້ມບົດຮຽນຄັ້ງຫນ້າຫຼືບໍ່ກໍເວລາອື່ນໆ ທ່ານອາດໃຊ້ຊ່ວງເວລານີ້ຖ້າກຸ່ມຂອງທ່ານຕ້ອງການມີເວລາເຂົ້າເຝົ້າພຣະເຈົ້າຕອນແລງໃນການສໍາມະນາ )

## ພຣະເຢຊູຊົງຢູ່ທີ່ນີ້

**ເຮັບເຣີ 13:8**

ພຣະເຢຊູຄຣິດຊົງເປັນຢູ່ສະເຫມີກັນທັງໃນເວລາວານນີ້, ໃນເວລາວັນນີ້, ແລະສືບໆໄປເປັນນິດ

**ມັດທາຍ 15:30-31**

ແລະມີປະຊາຊົນຈຳນວນຫລາຍມາຫາພຣະອົງເຂົາພາຄົນຂາເສັ້ງ, ຄົນຕາບອດ, ຄົນແຂນຂາພິການ, ຄົນປາກກືກ, ແລະຄົນເຈັບອື່ນໆຫລາຍຄົນ ມາວາງໄວ້ແທບພຣະບາດຂອງພຣະເຢຊູ ແລ້ວພຣະອົງຊົງໂຜດໃຫ້ເຂົາດີ ຈົນຝູງຄົນເຫລົ່ານັ້ນງຶດອັສຈັນໃຈ ເມື່ອເຫັນຄົນປາກກືກປາກໄດ້, ຄົນແຂນຂາພິການດີປົກກະຕິ, ຄົນຂາເສັ້ງຍ່າງໄປໄດ້, ແລະຄົນຕາບອດເຫັນໄດ້ ແລ້ວເຂົາຈຶ່ງສັນລະເສີນພຣະເຈົ້າຂອງຊາດອິສຣາເອັນ

**ໂຢຮັນ 10:10**

ຂະໂມຍມາກໍພຽງແຕ່ຈະລັກ, ຈະຂ້າ, ແລະທຳລາຍເທົ່ານັ້ນ ຝ່າຍເຮົາໄດ້ມາເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍລິບູນ

- ໃນ ເຮັບເຣີ 13:8 ພຣະຄຳພີໄດ້ກ່າວວ່າ " ພຣະເຢຊູຄຣິດຊົງເປັນຢູ່ສະເມີກັນທັງໃນເວລາວານນີ້, ໃນເວລາວັນນີ້, ແລະສືບໆໄປເປັນນິດ "

- ໃນ ມັດທາຍ 15:30 ພຣະຄຳພີໄດ້ບອກວ່າ ພຣະເຢຊູຊົງຮັກສາຄົນຫລວງຫລາຍທີ່ມີບັນຫາແຕກຕ່າງກັນຫລາຍຢ່າງ

- ໃນ ໂຢຮັນ 10:10 ພຣະຄຳພີໄດ້ບອກວ່າ ຊາຕານມາເພື່ອຂ້າ ຂະໂມຍ ແລະທຳລາຍ ແຕ່ພຣະເຢຊູມາເພື່ອໃຫ້ຊີວິດທີ່ຄົບບໍລິບູນແກ່ເຮົາ

- ທີ່ແທ້ຈິງແລ້ວ ເຮົາຮູ້ວ່າພຣະເຢຊູຢູ່ທີ່ນີ້ກັບເຮົາເວລານີ້ ຖ້າຫາກມີດ້ານໜຶ່ງໃນຊີວິດຂອງທ່ານທີ່ຈຳເປັນຕ້ອງໄດ້ຮັບການຮັກສາ ພຣະອົງຊົງຕ້ອງການຮັກສາທ່ານ ໃນຕອນນີ້ເໝືອນກັບທີ່ຊົງທຳໃນ ມັດທາຍ 15 ຊາຕານຕ້ອງການຂ້າທ່ານແລະລັກຈາກທ່ານ ພຣະເຢຊູຕ້ອງການໃຫ້ຊີວິດທີ່ຄົບບໍລິບູນແກ່ທ່ານ

- ທ່ານອາດສາມາດເຊື່ອມຕໍ່ຝ່າຍວິນຍານກັບຄົນບາງຄົນໃນ ມັດທາຍ 15:30 ກໍໄດ້

**ການດຳເນີນຊີວິດຢ່າງເຂັ້ມແຂງກັບພຣະເຢຊູ ຫຼືຊາຕານເຮັດໃຫ້ທ່ານເປັນເປັ້ງ?( ຢ່າງຂະເຢັກໄປເລື້ອຍໆ )**

- ພຣະເຢຊູຊົງຢູ່ທີ່ນີ້
ຂໍພຣະອົງແລ້ວພຣະອົງຈະຮັກສາທ່ານເພື່ອທ່ານຈະດໍາເນີນກັບພຣະເຈົ້າໄດ້ອີກຄັ້ງ

**ທ່ານສາມາດມອງເຫັນການທໍາງານຂອງພຣະເຈົ້າໄດ້ຫຼືບໍ່ ຊາຕານໄດ້ບັງຕາຂອງທ່ານໄວ້ດ້ວຍຄວາມທໍ້ໃຈແລ້ວ ( ເອົາມືປິດຕາຂອງທ່ານໄວ້ )**

- ພຣະເຢຊູຊົງຢູ່ທີ່ນີ້
ຂໍພຣະອົງແລ້ວພຣະອົງຈະຮັກສາທ່ານເພື່ອທ່ານຈະມອງເຫັນການທໍາງານຂອງພຣະເຈົ້າອີກຄັ້ງ

**ທ່ານກໍາລັງແບ່ງປັນຂ່າວປະເສີດໃຫ້ກັບຄົນທີ່ຢູ່ອ້ອມຮອບທ່ານຢູ່ ຫຼື ທ່ານປິດປາກງຽບ? ( ເອົາມືປິດປາກຂອງທ່ານໄວ້ )**

- ພຣະເຢຊູຊົງຢູ່ທີ່ນີ້
ຂໍພຣະອົງແລ້ວພຣະອົງຈະຮັກສາທ່ານເພື່ອທ່ານຈະສາມາດເວົ້າກ່ຽວກັບພຣະອົງດ້ວຍຄວາມກ້າຫານອີກຄັ້ງ

**ທ່ານກໍາລັງຊ່ວຍເຫລືອຄົນອື່ນ ຫຼື ຊາຕານໄດ້ທໍາຮ້າຍທ່ານບໍ່ສາມາດໃຫ້ໃຜໄດ້ອີກແລ້ວ? ( ແບກແຂນຂອງທ່ານຄືກັບວ່າທ່ານແຂນຫັກແລະໃສ່ເຝືອກຢູ່ )**

- ພຣະເຢຊູຊົງຢູ່ທີ່ນີ້
ຂໍພຣະອົງແລ້ວພຣະອົງຈະຮັກສາທ່ານເພື່ອທ່ານຈະສາມາດວາງອາດີດເອົາໄວ້ເບື້ອງຫລັງແລະດໍາເນີນຊີວິດກັບພຣະອົງໄດ້ອີກຄັ້ງ

ທ່ານມີບັນຫາຫຍັງໃນຊີວິດທີ່ຂວາງກັ້ນທ່ານຈາກການທໍາຕາມຢ່າງພຣະເຢຊູດ້ວຍສຸດຫົວໃຈຫຼືບໍ່?

ບໍ່ວ່າຄວາມເຈັບປວດຂອງທ່ານຈະແມ່ນຫຍັງ ພຣະເຢຊູຊົງຢູ່ທີ່ນີ້ເວລານີ້ແລະຊົງສາມາດຮັກສາທ່ານ ຂໍໃຫ້ທ່ານຮ້ອງຫາພຣະເຢຊູ ຍອມໃຫ້ພຣະອົງຮັກສາທ່ານ ແລະຖວາຍພຣະສີລິອັນຍິ່ງໃຫ່ຍແດ່ພຣະເຈົ້າ!

- ຂໍໃຫ້ຈັບຄູ່ເດີນອະທິຖານເພື່ອກັນແລະກັນ
ທູນຂໍໃຫ້ພຣະເຢຊູຊົງຮັກສາພວກເຈົ້າຈາກສິ່ງໃດໆ
ທີ່ຂວາງກັ້ນເຂົາຈາກການທຳຕາມຢ່າງພຣະອົງດ້ວຍສຸດຫົວໃຈ

**ການອົບຮົມພາກຄວາມຮູ້ເພີ້ມເຕີມ**

ແຫຼ່ງຂໍ້ມູນຕໍ່ໄປນີ້ມີໄວ້ສຳລັບກຳລະນີທີ່ມີການອະທິບາຍເລີກເຊີ່ງກ່ຽວກັບຫົວຂໍ້ທີ່ນຳສະເໜີ ສຳລັບການບຸກເບີກພັນທະກິດໃໝ່ໆ
ແຫຼ່ງຂໍ້ມູນເຫຼົ່ານີ້ນັບວ່າເປັນໜັງສືທີ່ດີທີ່ສຸດສົມຄວນແປຮອງຈາກພຣະຄຳພີ

**ຂັ້ນທີ 1 ເຕີບໃຫ່ຍຢ່າງເຂັ້ມແຂງໃນພຣະເຈົ້າ**

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 7**

**ການອອກໄປ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ຫນຶ່ງໃນກຸ່ມອະທິຖານຂໍພອນ

- ຂໍໃຫ້ຜູ້ໃດຜູ້ຫນຶ່ງໃນກຸ່ມນຳຮ້ອງເພງນະມັດສະການ 2 ເພງ

**ການອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ການອົບຮົມພາກຄວາມຮູ້**

*ທົບທວນ*

**1. ພາບທັງ 8 ພາບທີ່ຊ່ວຍໃຫ້ເຮົາເຮັດຕາມແບບຢ່າງພຣະເຢຊູ**

ທະຫານ, ຜູ້ສແຫວງຫາ, ຜູ້ລ້ຽງ, ຜູ້ຫວ່ານ, ພຣະບຸດ, ຜູ້ຮັບໃຊ້, ຜູ້ອາລັກຂາ

**2. ການທະວີຄູນ**

- ສາມສິ່ງທີ່ຜູ້ອາລັກຂາຄວນເຮັດມີຫຍັງແນ່?

- ຄໍາສັ່ງທໍາອິດທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ຄໍາສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?

- ທະເລສາບສອງແຫ່ງໃນອິດສະຣາເອນມີຊື່ວ່າແນວໃດ?

- ເປັນຫຍັງທະເລສາບສອງແຫ່ງຈຶ່ງມີຄວາມແຕກຕ່າງກັນຫລາຍ?

- ທ່ານຢາກເປັນເໝືອນທະເລສາບແຫ່ງໃດ?

**3. ຄວາມຮັກ**

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່?

- ຄໍາສັ່ງທີ່ສໍາຄັນທີ່ສຸດເພື່ອສອນຄົນອື່ນຄືຫຍັງ?

- ຄວາມຮັກມາຈາກໃສ?

- ການນະມັດສະການແບບງ່າຍຄືຫຍັງ?

- ເປັນຫຍັງເຮົາຈຶ່ງຕ້ອງມີການນະມັດສະການແບບງ່າຍ?

- ການນະມັດສະການແບບງ່າຍຈຳເປັນຕ້ອງໃຊ້ຄົນຈຳນວນເທົ່າໃດ?

**4. ການອະທິຖານ**

- ສາມສິ່ງທີ່ຜູ້ຊອບທຳຄວນເຮັດມີຫຍັງແນ່?

- ເຮົາຄວນອະທິຖານຢ່າງໃດ?

- ພຣະເຈົ້າຕອບຄຳອະທິຖານຂອງເຮົາຢ່າງໃດແນ່?

- ເບີໂທລະສັບຂອງພຣະເຈົ້າແມ່ນຫຍັງ?

**5. ການເຊື່ອຟັງ**

- ສາມສິ່ງທີ່ຜູ້ຮັບໃຊ້ຄວນເຮັດມີຫຍັງແນ່?

- ໃຜເປັນຜູ້ມີສິດອຳນາດສູງສຸດ?

- ຄຳສັ່ງສີ່ຢ່າງທີ່ພຣະເຢຊູຊົງໃຫ້ແກ່ຜູ້ທີ່ເຊື່ອທຸກຄົນມີຫຍັງແນ່?

- ເຮົາຄວນເຊື່ອຟັງພຣະເຢຊູຢ່າງໃດ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ກັບເຮົາ?

**6. ການດຳເນີນຊີວິດ**

- ສາມສິ່ງທີ່ພຣະບຸດຄວນເຮັດມີຫຍັງແນ່?

- ແມ່ນຫຍັງຄືແຫ່ລງແຫ່ງລິດອຳນາດໃນການທຳພຣະຣາຊກິດຂອງພຣະເຢຊູ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດກ່ອນຖືກຄຶງທີ່ກາງແຂນ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດຫລັງຈາກເປັນຄືນມາຈາກຄວາມຕາຍ?

- ຄຳສັ່ງສີ່ຢ່າງທີ່ໃຫ້ເຮົາເຊື່ອຟັງກ່ຽວກັບພຣະວິນຍານບໍລິສຸດຄືຫຍັງ?

**ພຣະເຢຊູຊົງມີພຣະລັກສະນະແບບໃດ?**

**ລູກາ 19:10**

ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາແລະໂຜດເອົາຜູ້ທີ່ຫລົງເສັ້ງໄປແລວນັ້ນໃຫ້ລອດພົ້ນ

**ພຣະເຢຊູຊົງເປັນຜູ້ສແຫວງຫາ ພຣະອົງສະແຫວງຫາຄົນອື່ນທີ່ຫລົງຫາຍ ພຣະອົງຊົງສະແຫວງຫານຳພຣະໄທແລະແຜ່ນດິນຂອງພຣະເຈົ້າກ່ອນໃນຊີວິດຂອງພຣະອົງ**

- ຜູ້ສະແຫວງຫາ ( ແນມໄປທາງຫລັງແລະທາງຫນ້າພ້ອມກັບເອົາມືປ້ອງເໜືອດວງຕາ)

**ສາມສິ່ງທີ່ຜູ້ສະແຫວງຫາຄວນເຮັດມີຫຍັງແນ່?**

**ມາຣະໂກ 1:37-38**

ເມື່ອພົບແລ້ວເຂົາຈິ່ງທູນວ່າ " ຄົນທັງຫລາຍກໍຊອກຫາທ່ານຢູ່ " ພຣະອົງຊົງຕອບເຂົາວ່າ " ໃຫ້ເຮົາທັງຫລາຍໄປໃນເຂດບ້ານເມືອງໃກ້ຄຽງ ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ ເພາະເຫດນີ້ແຫລະ, ເຮົາຈິ່ງໄດ້ອອກມາ "

1. ຜູ້ສະແຫວງຫາມັກຈະຊອກສະຖານທີ່ໃໝ່ໆ

2. ຜູ້ສະແຫວງຫາມັກຈະຊອກຫາຄົນທີ່ຫລົງຫາຍ

3. ຜູ້ສະແຫວງຫາມັກຈະຊອກຫາໂອກາດໃໝ່ໆ

**ພຣະເຢຊູເປັນຜູ້ສະແຫວງຫາຄົນຫນຶ່ງແລະຊົງມີຊີວິດໃນເຮົາ ເມື່ອເຮົາທຳຕາມຢ່າງພຣະອົງ ເຮົາເປັນຜູ້ສະແຫວງຫາດ້ວຍເຊັ່ນກັນ**

**- ພຣະເຢຊູມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?**

**ໂຢຮັນ 5:19-20**

ພຣະເຢຊູຊົງກ່າວກັບເຂົາວ່າ, " ເຮົາບອກທ່ານທັງຫລາບຕາມຄວາມຈິງວ່າພຣະບຸດຈະກະທຳສິ່ງໃດຕາມໃຈບໍ່ໄດ້ ນອກຈາກທີ່ໄດ້ເຫັນພຣະບິດາຊົງກະທຳ ເພາະສິ່ງທີ່ພຣະບິດາຊົງກະທຳ ສິ່ງນັ້ນແຫລະ, ພຣະບຸດຈິ່ງຊົງກະທຳເໝືອນກັນ. ເພາະວ່າພຣະບິດາຊົງຮັກພຣະບຸດ ແລະຊົງສະແດງໃຫ້ພຣະບຸດເຫັນທຸກສິ່ງທີ່ພຣະອົງເອງຊົງ

ກະທຳແລ້ວພຣະອົງຈະຊົງສະແດງໃຫ້ພຣະບຸດເຫັນການໃຫ່ຍກວ່ານັ້ນອີກ ຊຶ່ງທ່ານທັງຫລາຍອັສຈັນໃຈ. ”

**ພຣະເຢຊູກ່າວວ່າ “ ເຮົາບໍ່ອາດເຮັດສີ່ງໃດໂດຍລຳພັງຕົວເຮົາເອງ ”**

( ເອົາມືຂ້າງໜຶ່ງວາງເທິງຫົວໃຈແລະແກ່ງຫົວເປັນສັນຍາລັກວ່າບໍ່ )

**ເຮົາມອງເບິ່ງວ່າພຣະເຈົ້າຊົງກຳລັງທຳງານທີ່ໃດ**

( ເອົາມືຂ້າງໜື່ງປ້ອງໄວ້ເໜືອຕາ ແລ້ວແນມໄປທາງຊ້າຍແລະຂວາ )

**ພຣະອົງຊົງກຳລັງທຳງານທີ່ໃດ ເຮົາຮ່ວມງານກັບພຣະອົງທີ່ນັ້ນ**

( ຍື່ນມືຂຶ້ນໄປທາງໜ້າແລະງຶກຫົວຕອບຮັບ )

**ແລະເຮົາຮູ້ວ່າພຣະອົງຊົງຮັກເຮົາແລະຈະສຳແດງໃຫ້ແກ່ເຮົາ**

( ຍົກມືຂຶ້ນໃນການສັນລະເສີນແລ້ວຈຶ່ງເອົາໄຂ່ວກັນທີ່ຫົວໃຈ )

**- ເຮົາຈະມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?**

**1 ໂຢຮັນ 2:5-6**

ແຕ່ຜູ້ໃດທີ່ຖືຮັກສາພຣະທັມຂອງພຣະອົງ ຜູ້ນັ້ນແຫລະ, ເປັນຜູ້ທີ່ຮັກພຣະເຈົ້າຢ່າງຄົບຖ້ວນ ດ້ວຍອາການຢ່າງນີ້ແຫລະ, ເຮົາທັງຫລາຍຈຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ. ຜູ້ໃດເວົ້າວ່າຕົນຢູ່ໃນພຣະອົງຜູ້ນັ້ນກໍຄວນດຳເນີນຊີວິດຕາມທາງທີ່ພຣະຄຣິດຊົງດຳເນີນນັ້ນເໝືອນກັນ

***ເຮົາຕັດສິນໃຈວ່າຈະຮັບໃຊ້ທີ່ໃດໂດຍໃຊ້ເກນຢ່າງດຽວກັນກັບພຣະເຢຊູ***

**ເຮົາບໍ່ຕ້ອງເຮັດສີ່ງໃດໂດຍລຳພັງຂອງຕົວເຮົາເອງ**

( ເອົາມືຂ້າງໜຶ່ງວາງເທິງຫົວໃຈແລະແກ່ງຫົວໄປມາເປັນສັນຍາລັກວ່າ ບໍ່ )

**ເຮົາແນມເບິ່ງວ່າພຣະເຢຊູຊົງທຳງານທີ່ໃດ**

( ເອົາມືຂ້າງໜຶ່ງປ້ອງໄວ້ເໜືອຕາ ແລ້ວແນມໄປທາງຊ້າຍແລະຂວາ )

**ພຣະອົງຊົງກຳລັງທຳງານທີ່ໃດ ເຮົາຮ່ວມງານກັບພຣະອົງທີ່ນັ້ນ**

( ຍື່ນມືຂຶ້ນໄປທາງໜ້າແລະງຶກຫົວຕອບຮັບ )

**ແລະເຮົາຮູ້ວ່າພຣະອົງຊົງຮັກເຮົາແລະຈະສໍາແດງໃຫ້ແກ່ເຮົາ**

( ຍົກມືຂຶ້ນໃນການສັນລະເສີນແລ້ວຈຶ່ງເອົາໄຂ່ວກັນທີ່ຫົວໃຈ )

**ພຣະເຢຊູຊົງທໍາງານທີ່ໃດ?**

**ລູກາ 4:18-19**

ພຣະວິນຍານແຫ່ງອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຂ້າພະເຈົ້າ ເພາະວ່າພຣະອົງໄດ້ຫົດສົງຕັ້ງຂ້າພະເຈົ້າໄວ້ ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ. ພຣະອົງຊົງໃຊ້ຂ້າພະເຈົ້າປະກາດອິສຣະພາບແກ່ບັນດາຊະເລີຍ ໃຫ້ປະກາດແກ່ຄົນຕາບອດວ່າໄດ້ເຫັນຮຸ່ງອີກ ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິສຣະ. ແລະໃຫ້ປະກາດປີທີ່ອົງພຣະຜູ້ເປັນເຈົ້າຈະຊົງເມດຕານັ້ນ.

1. ກັບຄົນຍາກຈົນ

2. ກັບຄົນທີ່ຖືກຈອ່ງຈໍາ

3. ກັບຄົນປ່ວຍ

4. ກັບຄົນທີ່ຖືກົດຂີ່

- ພຣະເຢຊູຊົງທໍາພັນທະກິດຮັບໃຊ້ແລະຮັບໃຊ້ຄົນເຫລົ່ານີ້ ແຕ່ຢ່າງໃດກໍຕາມເປັນສີ່ງສໍາຄັນທີ່ຈະຣະລືກໄວ້ວ່າ ພຣະອົງບໍ່ໄດ້ຮັບໃຊ້ຄົນຍາກຈົນທຸກຄົນ ຫລືຄົນທີ່ຖືກກົດຂີ່ທຸກຄົນ ໃນຄວາມພະຍາຍາມຂອງເຮົາເອງ ເຮົາຕ້ອງການຊ່ວຍເຫລືອທຸກຄົນ ພຣະເຢຊູຊົງເບິ່ງທີ່ທີ່ພຣະບິດາຊົງກໍາລັງທໍາງານແລະຮ່ວມງານກັບພຣະອົງເຮົາຈໍາເປັນຕ້ອງເຮັດຢ່າງດຽວກັນກັບພຣະເຢຊູ ຖ້າຫາກເຮົາພະຍາມທໍາພັນທະກິດຮັບໃຊ້ຕໍ່ຄົນທີ່ຖືກກົດຂີ່ຂົ່ມເຫງນັ້ນເປັນສັນຍານບອກໃຫ້ຮູ້ວ່າເຮົາກໍາລັງພະຍາຍາມທໍາສີ່ງນັ້ນດ້ວຍຕົວຂອງເຮົາເອງ

- ເຮົາຈະຮູ້ໄດ້ຢ່າງໃດວ່າພຣະເຈົ້າກໍາລັງທໍາງານຢູ່? ຖ້າຫາກມີຄົນບາງຄົນທີ່ສົນໃຈໃນການຮຽນຮູ້ກ່ຽວກັບພຣະເຢຊູຫລາຍຂຶ້ນ ນັ້ນກໍເຮັດໃຫ້ທ່ານຮູ້ວ່າພຣະເຈົ້າກໍາລັງທໍາງານຢູ່ ໃນ ໂຢຮັນ 6:44 ບອກວ່າ ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດນໍາຄົນມາຫາ

ພຣະອົງເອງໄດ້ ເຮົາຖາມຄຳຖາມ ເຮົາຫວ່ານເມັດພັນຝ່າຍວິນຍານແລະຄອຍເບິ່ງວ່າມີການຕອບສະໜອງ ຖ້າພວກເຂົາຕອບສະໜອງເຮົາກໍ່ຮູ້ໄດ້ວ່າພຣະເຈົ້າກຳລັງທຳງານຢູ່

**ອີກທີ່ໜຶ່ງທີ່ພຣະເຢຊູຊົງທຳງານຢູ່ຄືທີ່ໃດ?**

- ທ່ານຮູ້ບໍ່ວ່າພຣະເຢຊູຊົງຮັກຄອບຄົວຂອງທ່ານ? ພຣະເຈົ້າຊົງມີນ້ຳພຣະທັຍທີ່ຈະໃຫ້ພວກເຂົາທຸກຄົນໄດ້ຮັບຄວາມມຣອດແລະໃຊ້ຊີວິດເປັນນິດຮ່ວມກັບພຣະອົງ ມີຫລາຍຕົວຢ່າງໃນພຣະຄຳພີເມື່ອພຣະເຈົ້າຊົງຊ່ວຍກູ້ທັງຄອບຄົວ

- ວິນຍານຊົ່ວ ຊາຍທີ່ຖືກວິນຍານຊົ່ວເຂົ້າສິງ ມາຣະໂກ 5 ( ຊາຍທີ່ຖືກວິນຍານຊົ່ວເຂົ້າສິງໄດ້ຮັບການປົດປ່ອຍ ເຂົາຢາກຈະໄປກັບພຣະເຢຊູ ແຕ່ພຣະເຢຊູຂໍໃຫ້ເຂົາກັບໄປຫາຄອບຄົວແລະໃຫ້ຄອບຄົວຂອງເຂົາຟັງເຖິງສິ່ງທີ່ເກີດຂື້ນ ຫລາຍຄົນທີ່ຢູ່ຮອບໆໝູ່ບ້ານພາກັນອັສຈັນໃຈໃນສິ່ງທີ່ພຣະເຢຊູໄດ້ກະທຳ ເມື່ອພຣະເຈົ້າຊົງຊ່ວຍກູ້ໜຶ່ງຄົນພຣະອົງຊົງຕ້ອງການຊ່ວຍກູ້ຄົນອື່ນໆຮອບຂ້າງເຂົາໃຫ້ຮອດດ້ວຍ

- ຄອນເນຣິອັສ ກິດຈະການ 10 ( ພຣະເຈົ້າບອກໃຫ້ເປໂຕເພື່ອເວົ້າກັບຄອນເນຣິອັສ ເມື່ອເປໂຕເວົ້າແລ້ວ ຄອນເນຣິອັສແລະທຸກຄົນທີ່ໄດ້ຍິນຂໍ້ຄວາມແຕກຕ່າງກໍເຕັມລົ້ນດ້ວຍພຣະວິນຍາຍບໍລິສຸດ ຄອນເນຣິອັສເຊື່ອ ແລະທຸກຄົນທີ່ຢູ່ຮອບຂ້າງເຂົາກໍເຊື່ອດ້ວຍເຊັ່ນກັນ )

- ນາຍຄຸກທີ່ເມືອງຟີລິປອຍ ກິດຈະການ 16 ( ໂປໂລແລະສີລາຍັງຄົງຢູ່ໃນຄຸກເຖິງວ່າແຜ່ນດິນໄຫວເຮັດໃຫ້ປະຕູຄຸກເປີດອອກກໍ່ຕາມ ນາຍຄຸກອັສຈັນໃຈໃນເລື່ອງນີ້ແລະເຊື່ອໃນພຣະເຢຊູ ທັງຄອບຄົວຂອງເຂົາໄດ້ຮັບຄວາມຮອດອ້ວຍເຊັ່ນກັນ

**ຢ່າເລີກເຊື່ອວ່າຄົນໃນຄອບຄົວຂອງທ່ານຈະໄດຮັບຄວາມຮອດພົ້ນແລະໃຊ້ຊີວິດເປັນນິດຮ່ວມກັນແລະຢ່າຢຸດອະທິຖານເພື່ອພວກເຂົາ**

***ຂໍ້ພຣະຄຳທ່ອງຈຳ***

**ໂຢຮັນ 12:26**

**ຖ້າຜູ້ໃດປະຕິບັດເຮົາ ໃຫ້ຜູ້ນັ້ນຕິດຕາມເຮົາມາ ແລະເຮົາຢູ່ທີ່ໃດ ຜູ້ປະຕິບບັດເຮົາຈະຢູ່ທີ່ນັ້ນເໝືອນກັນ ຖ້າຜູ້ໃດປະຕິບັດເຮົາ ພຣະບິດາຈະຊົງປະທານກຽດຕິຍົດແກ່ຜູ້ນັ້ນ**

- ໃຫ້ທຸກຄົນຍືນຂຶ້ນແລະທ່ອງຂໍ້ພຣະຄຳພີ 10 ຮອບພ້ອມກັນ ໂດຍ 6 ຄັ້ງທຳອິດໃຫ້ຜູ້ເຂົ້າອົບຮົມເບິ່ງຈາກພຣະຄຳພີ ຫລືປຶ້ມບັນທຶກຂອງຜູ້ເຂົ້າອົບຮົມໄດ້ແລະໃນ 4 ຄັ້ງສຸດທ້າຍໃຫ້ທຸກຄົນທ່ອງຈາກຄວາມຈື່ຈຳ ຜູ້ເຂົ້າອົບຮຣົມມຄວນທ່ອງຊື່ແລະຂໍ້ຂອງພຣະຄຳພີກ່ອນທີ່ຈະທ່ອງເນື້ອຫາໃນແຕ່ລະຄັ້ງ ແລະໃຜທ່ອງແລ້ວກ່ອນກໍໃຫ້ນັ່ງລົງໄດ້ ( ສິ່ງນີ້ຈະຊ່ອຍໃຫ້ຜູ້ເຂົ້າອົບຮົມໃຜແນ່ທີ່ຜ່ານບົດຮຽນໃນຊົ່ວໂມງ **ການອົບຮົມພາກປະຕິບັດ**

## ການອົບຮົມມພາກປະຕິບັດ

- ໃນຊົ່ວໂມງຮຽນຂໍໃຫ້ຜູ້ເຂົ້າອົບຮົມນັ່ງຫັນໜ້າເຂົ້າຫາກັນກັບຄູ່ອະທິຖານ ໂດຍໃຫ້ສລັບກັນສອນບົດຮຽນ

- ໃຫ້ຄົນທີ່ມີພີ່ນ້ອງຫລາຍກ່ວາຂອງແຕ່ລະຄູ່ເປັນຜູ້ນຳ

- ເຮັດຕາມຂັ້ນຕອນອົບຮົມຜູ້ອົບຮົມໃນໜ້າ 9 ເນັ້ນຍ້ຳວ່າທ່ານຕ້ອງການໃຫ້ພວກເຂົາສອນທຸກສິ່ງໃນຊົ່ວໂມງ **ການອົບຮົມພາກຄວາມຮູ້** ດ້ວຍວິທີການທີ່ທ່ານເຮັດ ກວດສອບໃຫ້ແນ່ໃຈວ່າພວກເຂົາໄດ້ຖາມຄຳຖາມ ອ່ານຂໍ້ພຣະຄຳພີ ຕອບຄຳຖາມ ເຮັດສັນຍານມື ຍືນຂຶ້ນແລະທ່ອງຂໍ້ພຣະຄຳພີ 10 ຮອບພ້ອມກັນເໝືອນຢ່າງທີ່ທ່ານເຮັດນັ້ນ

**- ຫລັງຈາກການສອນໃນແຕ່ລະບົດຮຽນ ຂໍໃຫ້ຜູ້ເຂົ້າອົບຮົມຄິດເຖິງຄົນບາງຄົນທີ່ພວກເຂົາຈະແບ່ງປັນບົດຮຽນນັ້ນຫລັງຈາກການອົບຮົມແລ້ວ ຂໍໃຫ້ພວກເຂົາຂຽນລາຍຊື່ບຸກຄົນເຫລົ່ານັ້ນໃນເຈ້ຍບົດຮຽນ**

## ຈົບບົດຮຽນ

**ແຜນທີ່ ກິດຈະການ ບົດທີ 29 - ສ່ວນທີ 2**

- ໃນແຜນທີ່ ກິດຈະການ ບົດທີ 29 ຂໍໃຫ້ແຕ້ມແລະຕິດປ້າຍສະຖານທີ່ທີ່ພຣະເຢຊູຊົງກຳລັງທຳງານຢູ່

- ກຳນົດຢ່າງນ້ອຍ 5 ສະຖານທີ່ໃນແຜນທີ່ທີ່ທ່ານຮູ້ວ່າພຣະເຢຊູຊົງກຳລັງທຳງານ ແລະແຕ້ມຮູບໄມ້ກາງແຂນໃນແຕ່ລະທີ່ນັ້ນ ຕິດປ້າຍບອກວ່າພຣະເຈົ້າຊົງທຳງານຢ່າງໃດໃນພື້ນທີ່ນັ້ນໆ

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 8**

**ການແບ່ງປັນ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ
- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນຳຮ້ອງເພງນະມັດສະການ 2 ເພງ

**ການອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ
- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ການອົບຮົມພາກຄວາມຮູ້**

*ທົບທວນ*

**1. ພາບທັງ 8 ພາບທີ່ຊ່ວຍໃຫ້ເຮົາເຮັດຕາມແບບຢ່າງພຣະເຢຊູ**

ທະຫານ, ຜູ້ສະແຫວງຫາ, ຜູ້ລ້ຽງ, ຜູ້ຫວ່ານ, ພຣະບຸດ, ຜູ້ຮັບໃຊ້, ຜູ້ອາລັກຂາ

**2. ການທະວີຄູນ**

- ສາມສິ່ງທີ່ຜູ້ອາລັກຂາຄວນເຮັດມີຫຍັງແນ່?

- ຄຳສັ່ງທຳອິດທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ຄຳສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?

- ທະເລສາບສອງແຫ່ງໃນອິດສະຣະເອນມີຊື່ວ່າແນວໃດ?

- ເປັນຫຍັງທະເລສາບສອງແຫ່ງຈຶ່ງມີຄວາມແຕກຕ່າງກັນຫລາຍ?

- ທ່ານຢາກເປັນເໝືອນທະເລສາບແຫ່ງໃດ?

**3. ຄວາມຮັກ**

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່?

- ຄຳສັ່ງທີ່ສຳຄັນທີ່ສຸດເພື່ອສອນຄົນອື່ນຄືຫຍັງ?

- ຄວາມຮັກມາຈາກໃສ?

- ການນະມັດສະການແບບງ່າຍຄືຫຍັງ?

- ເປັນຫຍັງເຮົາຈຶ່ງຕ້ອງມີການນະມັດສະການແບບງ່າຍ?

- ການນະມັດສະການແບບງ່າຍຈຳເປັນຕ້ອງໃຊ້ຄົນຈຳນວນເທົ່າໃດ?

**4. ການອະທິຖານ**

- ສາມສິ່ງທີ່ຜຜູ້ຊອບທຳຄວນເຮັດມີຫຍັງແນ່?

- ເຮົາຄວນອະທິຖານຢ່າງໃດ?

- ພຣະເຈົ້າຕອບຄຳອະຖິຖານຂອງເຮົາຢ່າງໃດແນ່?

- ເປົ້າໝາຍຂອງພຣະເຈົ້າແມ່ນຫຍັງ?

## 5. ການເຊື່ອຟັງ

- ສາມສິ່ງທີ່ຜູ້ຮັບໃຊ້ຄວນເຮັດມີຫຍັງແນ່?

- ໃຜເປັນຜູ້ມີສິດອຳນາດສູງສຸດ?

- ຄຳສັ່ງສີ່ຢ່າງທີ່ພຣະເຍຊູຊົງໃຫ້ແກ່ຜູ້ທີ່ເຊື່ອທຸກຄົນມີຫຍັງແນ່?

- ເຮົາຄວນເຊື່ອຟັງພຣະເຍຊູຢ່າງໃດ?

- ພຣະເຍຊູຊົງສັນຍາສິ່ງໃດໄວ້ກັບເຮົາ?

## 6. ການດຳເນີນຊີວິດ

- ສາມສິ່ງທີ່ພຣະບຸດຄວນເຮັດມີຫຍັງແນ່?

- ແມ່ນຫຍັງຄືແຫຼ່ງແຫ່ງລິດອຳນາດໃນການທຳພຣະຣາຊກິດຂອງພຣະເຍຊູ?

- ພຣະເຍຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດກ່ອນຖືກຄຶງທີ່ກາງແຂນ?

- ພຣະເຍຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດຫລັງຈາກເປັນຄືນມາຈາກຄວາມຕາຍ?

- ຄຳສັ່ງສີ່ຢ່າງທີ່ໃຫ້ເຮົາເຊື່ອຟັງກ່ຽວກັບພຣະວິນຍານບໍລິສຸດຄືຫຍັງ?

## 7. ການອອກໄປ

- ສາມສິ່ງທີ່ຜູ້ສະແຫວງຫາຄວນເຮັດມີຫຍັງແນ່?

- ພຣະເຍຊູມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ທີ່ໃດ?

- ເຮົາມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ທີ່ໃດ?

- ພຣະເຍຊູກຳລັງທຳງານທີ່ໃດ?

- ອີກທີ່ໜຶ່ງທີ່ພຣະເຍຊູຊົງທຳງານຢູ່ຄືທີ່ໃດ?

**ພຣະເຢຊູຊົງມີພຣະລັກສະນະແບບໃດ?**

**ມັດທາຍ 26:53**

ທ່ານຄຶດວ່າເຮົາຈະຂໍຄວາມຊ່ວຍເຫລືອຈາກພຣະບິດາຂອງເຮົາບໍ່ໄດ້ ແລະໃນທັນທີ ພຣະອົງຈະໃຊ້ເທວະດາມາຫາເຮົາກວ່າສິບສອງກອງ

**ພຣະເຢຊູຊົງເປັນທະຫານ ພຣະອົງສາມາດເອີ້ນກອງທັບທູດສະຫວັນສິບສອງກອງເຂົ້າສູ່ກອງທັບຂອງພຣະອົງເພາະພຣະອົງຊົງເປັນຜູ້ບັນຊາການທະຫານສູງສຸດໃນກອງທັບຂອງພຣະເຈົ້າ ພຣະອົງຊົງຕໍ່ສູ້ກັບຊາຕານໃນສົງຄາມຝ່າຍວິນຍານແລະເຮັດໃຫ້ຄວາມຊົ່ວຊາປາໄຊທີ່ກາງແຂນ**

- ທະຫານ ( ເຮັດມືຍົກດາບຂຶ້ນ )

**ສາມສິ່ງທີ່ທະຫານຄວນເຮັດມີຫຍັງແນ່?**

**ມາຣະໂກ 1:12-15**

ໃນທັນໃດນັ້ນພຣະວິນຍານໄດ້ຊົງບັງຄັບພຣະອົງໃຫ້ສະເດັດເຂົ້າໄປໃນປ່າກັນດານ. ທີ່ນັ້ນຊາຕານໄດ້ທົດລອງພຣະອົງເຖິງສີ່ສິບວັນ ພຣະອົງຊົງຢູ່ຖ້າມກາງສັດປ່າ ແລະມີພວກເທວະດາມາບົວລະບັດພຣະອົງ ຄັນໂຢຮັນຖືກຈັບແລ້ວ ພຣະເຢຊູໄດ້ສະເດັດໄປຍັງແຂວງຄາລີເລ ຊົງປະກາດຂ່າວປະເສີດເຣື່ອງພຣະເຈົ້າ  ແລະຊົງບອກວ່າ ເວລາກຳນົດມາເຖິງແລ້ວຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ແລະເຊື່ອໃນຂ່າວປະເສີດ

1. ທະຫານຕໍ່ສູ້ກັບສັດຕູ

   ( ພຣະເຢຊູທຳສົງຄາມຕໍ່ສູ້ແລະພຣະອົງຊົງຊະນະ )

2. ທະຫານຍ່ອມທົນທຸກລຳບາກ

3. ທະຫານຊ່ວຍຄົນໃຫ້ລຸດພົ້ນຈາກການກົດຂີ່ຂົ່ມເຫັງ

   ( ອານາຈັກຂອງພຣະເຢຊູກຳລັງມາເພື່ອປົດປ່ອຍຄົນໃຫ້ເປັນອິສຣະ )

**ພຣະເຢຊູຊົງເປັນທະຫານຄົນໜຶ່ງ ພຣະອົງບັນຊາການກອງທັບຂອງພຣະເຈົ້າແລະຊົງຕໍ່ສູ້ກັບຊາຕານໃນສົງຄາມຝ່າຍວິນຍານ ທີ່ກາງແຂນນັ້ນພຣະເຢຊູຊົງມີໄຊຊະນະເພື່ອເຮົາ ເມື່ອພຣະເຢຊູຊົງມີຊີວິດຢູ່ພາຍໃນເຮົາ ເຮົາຈະເປັນທະຫານທີ່ມີໄຊຊະນະດ້ວຍ ເຮົາຈະທຳສົງຄາມຝ່າຍວິນຍານ ຍອມທົນທຸກລຳບາກເພື່ອເຮັດໃຫ້ຜູ້ບັນຊາການຂອງເຮົາພໍໃຈ ແລະຊ່ອຍຜູ້ຄົນໃຫ້ລຸດພົ້ນຈາກການຖືກກົດຂີ່ຂົ່ມເຫັງ**

**ເຮົາປາບຊາຕານໃຫ້ພ່າຍແພ້ໄດ້ຢ່າງໃດ?**

**ພຣະນິມິດ 12:11**

ເຂົາເຫລົ່ານັ້ນໄດ້ໄຊຊະນະພຍານາກດ້ວຍໂລຫິດຂອງພຣະເມສານ້ອຍ ແລະເພາະຄຳພຍານຂອງເຂົາເອງເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່ເສັງດາຍຊີວິດຂອງຕົນ

***ໂດຍພຣະໂລຫິດຂອງພຣະເມສານ້ອຍ***

**ເຮົາເອົາຊະນະຊາຕານໄດ້ເພາະພຣະໂລຫິດຂອງພຣະເຢຊູທີ່ໄຫລເທິງໄມ້ກາງແຂນເຮົາເປັນຍິ່ງກວ່າຜູ້ພິຊິດໂດຍທາງພຣະອົງທີ່ຊົງກະທຳ**

ພຣະໂລຫິດຂອງພຣະເມສານ້ອຍ ( ໃຊ້ນິ້ວມືຊີ້ສະຫລັບໄປທີ່ຝາມືຂອງທ່ານທັງສອງຂ້າງ - ເປັນສັນຍາລັກຂອງການຖືກຄຶງທີ່ໄມ້ກາງແຂນ )

**ເມື່ອທ່ານຕ້ອງປະເຊີນໜ້າກັບສົງຄາມຝ່າຍວິນຍານ ຂໍໃຫ້ຈື່ໄວ້ວ່າພຣະເຢຍຊູຊົງປາບຊາຕານແລ້ວທີ່ໄມ້ກາງແຂນ!! ຊາຕານສັ່ນດ້ວຍຄວາມຢ້ານກົວ ຄວນຄາງແລະຮ້ອງສະອຶກສະອື້ນທຸກຄັ້ງເມື່ອມັນເຫັນພຣະເຢຊູ ມັນເຣີ່ມຮ້ອງຂໍຊີວິດຈາກພຣະເຢຊູແລະຂໍໃຫ້ພຣະອົງໄປຈາກພວກມັນ**

ຂ່າວດີຄື ພຣະເຢຊູຊົງມີຊີວິດຢູ່ໃນເຮົາ ດັ່ງນັ້ນບໍ່ວ່າເມື່ອໃດກໍຕາມທີ່ຊາຕານເຫັນພຣະເຢຊູທີ່ຢູ່ໃນເຮົາ ຊາຕານກໍເຣີ່ມສັ່ນດ້ວຍຄວາມຢ້ານກົວແລະຄວນຄາງ ມັນຮ້ອງສະອຶກສະອື້ນເໝືອນເດັກນ້ອຍ!! ຊາຕານຖືກປາບໃຫ້ພ່າຍແພ້ແລ້ວເພາະສິ່ງທີ່ພຣະເຢຊູກະທຳແລ້ວເທິງກາງແຂນ!! ຢ່າລືມເດັດຂາດວ່າ ບໍ່ສຳຄັນວ່າສິ່ງຕ່າງໆຈະຍາກລຳບາກພຽງໃດເຮົາຈະຊະນະແນ່ນອນ!! ເຮົາຈະຊະນະແນ່ນອນ!!

***ຄຳພຍານຂອງເຮົາ***

**ເຮົາເອົາຊະນະຊາຕານໂດຍອາວຸດອັນຊົງລິດທານຸພາບແຫ່ງຄຳພະຍານຂອງເຮົາ ບໍ່ມີໃຜສາມາດໂຕ້ຖຽງຄຳພະຍານຂອງເຮົາເຖິງສິ່ງທີ່ພຣະເຢຊູໄດ້ຊົງກະທຳໃນຊີວິດຂອງເຮົາໄດ້ ເຮົາສາມາດໃຊ້ອາວຸດນີ້ທຸກເວລາແລະທຸກສະຖານທີ່**

ຄຳພະຍານ (ເອົາມືທັງສອງຂ້າງປ້ອງທີ່ປາກເຮັດຄືກັບວ່າທ່ານກຳລັງເວົ້າກັບຄົນບາງຄົນຢູ່ )

***ບໍ່ເສັຽດາຍຊີວິດ***

**ຊີວິດອັນຕະຫລອດໄປເປັນນິດຂອງເຮົາກັບພຣະເຈົ້ານັ້ນແທ້ຈິງ ການໄດ້ຢູ່ກັບພຣະອົງກໍເປັນເຣື່ອງທີ່ດີກວ່າ ການມີຊີວິດຢູ່ໃນໂລກນີ້ເພື່ອເຜີຍແຜ່ຂ່າວປະເສີດເຮົາຈະຍອມແພ້ບໍ່ໄດ້**

ບໍ່ເສັຽດາຍຊີວິດ ( ເອົາມືທັງສອງຂ້າງມາໃກ້ກັນເໝືອນກັບວ່າທ່ານຖືກຈັບໃສ່ ໂຊ້ຢູ່ )

**- ຄຳພະຍານທີ່ເຕັມໄປດ້ວຍລິດອຳນາດແມ່ນຫຍັງ?**

***ຊີວິດຂອງເຮົາກ່ອນພົບພຣະເຢຊູ***

ກ່ອນ ( ຊີ້ນີ້ວມືໄປທາງໜ້າແລະທາງຫລັງຂ້າງຊ້າຍ )

ອະທິບາຍເຖິງຊີວິດຂອງທ່ານກ່ອນທີ່ຈະມາເປັນຄຣິດສຕຽນຖ້າຫາກທ່ານເຕີບໂຕມາໃນຄອບຄົວຄຣິດສຕຽນກໍສາມາດເລົ່າໄດ້ເພາະຄົນທີ່ຍັງບໍ່ເຊື່ອກໍສົນໃຈທີ່ຈະຟັງເຣື່ອງລາວທີ່ເກີດຂຶ້ນໃນຄອບຄົວຄຣິດສຕຽນດ້ວຍ

**- ເຮົາພົບພຣະເຢຊູໄດ້ຢ່າງໃດ ( ນຳສະເໜີພຣະກິດຕິຄຸນແບບງ່າຍ )**

ຢ່າງໃດ ( ຊີ້ນີ້ວຊີ້ໄປທາງໜ້າ )

ອະທິບາຍວ່າທ່ານມາເຊື່ອແລະຕິດຕາມພຣະເຢຊູໄດ້ຢ່າງໃດ ໂດຍລວມເອົາເນື້ອຫາຂອງພຣະກິດຕິຄຸນສັ້ນໆແຊກເຂົ້າໄປດັ່ງນີ້

1. ພຣະເຈົ້າສ້າງໂລກທີ່ສົມບູນແບບ

( ເຮັດມືທັງສອງຂ້າງເປັນຮູບວົງມົນໃຫຍ່ໆ )

2. ມະນຸດບໍ່ເຊື່ອຟັງພຣະເຈົ້າແລະນຳຄວາມບາບແລະຄວາມລຳບາກເຂົ້າມາໃນໂລກ

( ກຳໝັດຂຶ້ນເໝືອນກັບວ່າທ່ານຕ້ອງການຕໍ່ສູ້ ແລ້ວຄູ່ຄຳຣາມ )

3. ພຣະເຢຊູຊົງຕາຍທີ່ໄມ້ກາງແຂນເພື່ອຄວາມບາບຂອງເຮົາ ພຣະອົງຊົງຖືກຝັງ ແລະພຣະເຈົ້າຊົງຊຸບຊີວິດພຣະອົງໃຫ້ເປັນຄືນມາຈາກຕາຍໃນວັນຖ້ວນສາມ

( ຍົກມືຊີ້ຕໍ່ສະຫວັນແລະຍ້າຍລົງມາ ເອົານິ້ວຊີ້ຂອງແຕ່ລະມື ຊີ້ໄປທີ່ກາງຝາມືຂອງອີກຂ້າງໜຶ່ງ " ພຣະເຢຊູຊົງຕາຍທີ່ໄມ້ກາງແຂນເພື່ອຄວາມບາບຂອງເຮົາ " ຈັບຂໍ່ສອກເບື້ອງຂວາດ້ວຍມືຊ້າຍແລະຍ້າຍແຂນຂວາໄປທາງຫລັງຄືຖືກຝັງ " ພຣະຊົງຖືກຝັງ " ຍົກແຂນກັບມາພ້ອມກັບຍົກນິ້ວສາມນິ້ວຂຶ້ນ " ພຣະເຈົ້າຊົງຊຸບຊີວິດພຣະອົງຄືນມາຈາກຕາຍໃນວັນຖ້ວນສາມ "

4. ຄົນເຫລົ່ານັ້ນທີ່ຂໍການຍົກໂທດຄວາມບາບຂອງພວກເຂົາແລະເຊື່ອວາງໃຈໃນພຣະເຢຊູໃນຖານະພຣະຜູ້ໂຜດໃຫ້ພົ້ນຜູ້ຊົງເປັນຄືນມມາຈາກຕາຍແລ້ວ ພວກເຂົາກໍໄດ້ຮັບການຕ້ອນຮັບໃຫກັບເຂົ້າສູ່ຄອບຄົວຂອງພຣະເຈົ້າ

( ວາງມືທີ່ຫົວໃຈຂອງທ່ານ ແລ້ວເຮັດຄືກັບກັບຂໍ້ 3 " ພຣະເຢຊູຕາຍເພື່ອຄວາມບາບຂອງເຮົາ ເປັນຕົ້ນ " ແລ້ວເອົາມືກັບມາວາງທີ່ຫົວໃຈອີກ ງຶກຫົວຕອບຮັບວ່າແມ່ນ ແລ້ວຍົກມືຂຶ້ນໄປເທິງຟ້າ )

*ຊີວິດຫລັງຈາກພົບພຣະເຢຊູ*

ຫລັງ ( ຊີ້ນິ້ວໄປທາງໜ້າດ້ານຂວາມື )

ອະທິບາຍເຖິງສິ່ງທີ່ເກີດຂຶ້ນໃນການຕິດຕາມພຣະເຢຊູຫລັງຈາກການກັບໃຈໃໝ່ຂອງທ່ານແລະສີ່ງທີ່ມີຄວາມໝາຍຕໍ່ທ່ານໃນການມີຄວາມສຳພັນກັບພຣະອົງ

*ຖາມຄຳຖາມແບບງ່າຍ*

ຖາມ ( ຊີ້ນິ້ວໄປທາງວິຫານຂອງທ່ານ - ເຮັດເໝືອນວ່າທ່ານກຳລັງຄິດກ່ຽວກັບຄຳຖາມ )

ໃນຊ່ວງຈົບຄຳພຍານຂອງທ່ານ ຂໍໃຫ້ຖາມຄົນງນັ້ນວ່າ ' ທ່ານຢາກຮູ້ເຣື່ອງການຕິດຕາມພຣະເຢຊູຫລາຍຂຶ້ນບໍ່ ' ການສັງເກດວ່າ ' ພຣະເຈົ້າກຳລັງທຳງານຢູ່ຫລືບໍ່ '

ຖ້າເຂົາຕອບວ່າ ‘ ແມ່ນຢາກຮູ້ ’ ທ່ານກໍຮູ້ໄດ້ທັນທີວ່າພຣະເຈົ້າກໍາລັງທໍາງານຢູ່ໃນສະຖານະການນັ້ນ ພຣະເຈົ້າຊົງເປັນຜູ້ດຽວທີ່ນໍາຄົນເຂົ້າມາໃກ້ພຣະອົງ (ໂຢຮັນ6:44)

ໃນກໍລະນີນີ້ຂໍໃຫ້ທ່ານແບ່ງປັນກັບພວກເຂົາເຖິງເຣື່ອງການຕິດຕາມພຣະເຢຊູ ຖ້າຫາກພວກເຂົາຕອບວ່າ ‘ ບໍ່ ’ ນັ້ນສະແດງວ່າພຣະເຈົ້າບໍ່ໄດ້ກໍາລັງທໍາງານໃນສະຖານະການນັ້ນໃນຂະນະນີ້  ຂໍອະນຸຍາດອະທິຖານອວຍພອນພວກເຂົາ ແລະເດີນໜ້າໃນທາງຂອງທ່ານຕໍ່ໄປ

**ແມ່ນຫຍັງຄືແນວທາງທີ່ສໍາຄັນຕໍ່ການປະຕິບັດຕາມ?**

***ຈໍາກັດຄໍາພຍານເບື້ອງຕົ້ນໃຫ້ຢູ່ໃນເວລາ 3-4  ນາທີ***

ມີຄົນທີ່ຫລົງຫາຍຫລວງຫລາຍໃນໂລກນີ້ແລະການຈໍາກັດຄໍາພຍານເບື້ອງຕົ້ນຂອງທ່ານຈະເຮັດໃຫ້ເຫັນໄດ້ວ່າໃຜທີ່ຕອບສະໜອງແລະໃຜທີ່ບໍ່ຕອບສະໜອງ ກ່ອນອື່ນໃດຂໍໃຫ້ທ່ານທໍາຕາມການຊົງນໍາຂອງພຣະວິນຍານບໍລິສຸດ ຜູ້ເຊື່ອໃໝ່ຈະສະບາຍໃຈກັບການແບ່ງປັນ 3-4 ນາທີ  ຫລາຍກວ່າ 3-4 ຊົ່ວໂມງ

***ຢ່າບອກອາຍຸຂອງທ່ານຕອນທີ່ມາຮັບເຊື່ອ***

ອາຍຸຂອງທ່ານຕອນທີ່ທ່ານມາເປັນຜູ້ຕິດຕາມພຣະຄຣິດນັ້ນບໍ່ສໍາຄັນ ແຕ່ມັນສາມາດເຮັດໃຫ້ເກີດການສື່ສານຜິດພາດຕໍ່ຜູ້ບໍ່ເຊື່ອໄດ້ເມື່ອທ່ານແບ່ງປັນ ຄໍາພຍານຂອງທ່ານຢູ່  ຖ້າຫາກພວກເຂົາອາຍຸນ້ອຍກວ່າທ່ານຕອນທີ່ທ່ານມາຮັບເຊື່ອພວກເຂົາກໍອາດຈະຄິດໄດ້ວ່າ ພວກເຂົາສາມາດລໍຖ້າໄປອີກແລ້ວຄ່ອຍຮັບເຊື່ອ ແຕ່ຖ້າຫາກພວກເຂົາອາຍຸຫລາຍກວ່າທ່ານຕອນທີ່ຮັບເຊື່ອ ພວກເຂົາກໍອາດຈະຄິດວ່າພວກເຂົາພາດໂອກາດໄປແລ້ວ ພຣະຄໍາພີບອກວ່າ ວັນນີ້ ເປັນວັນແຫ່ງຄວາມພົ້ນການບອກອາຍຸຂອງທ່ານເມື່ອຕອນຮັບເຊື່ອມີແຕ່ຈະເຮັດໃຫ້ເກີດຄວາມສັບສົນເທົ່ານັ້ນ

***ຢ່າໃຊ້ຄໍາສັບຄຣິດສຕຽນ***

ຫລັງຈາກທີ່ຄົນໄດ້ມາເປັນຄຣິດສຕຽນແລ້ວ ແມ່ນວ່າໃນເວລາບໍ່ດົນພວກເຂົາກໍເລີ້ມເອົາຄໍາສັບຄຣິດສຕຽນທີ່ຄຣິດສຕຽນຄົນອື່ນໆເວົ້າມາໃຊ້ ຄໍາອະລິເຊັ່ນ “ ໄດ້ຮັບການຊໍາລະໂດຍພຣະໂລຫິດຂອງພຣະເມສານ້ອຍ ” ຫລື  “ ທ່ານໄດ້ເວົ້າກັບສິດຍາພິບານ ” ຄໍາສັບເຫລົ່ານີ້ເປັນເໝືອນພາສາຕ່າງປະເທດສໍາລັບຄົນທີ່ບໍ່ເຊື່ອ ເມື່ອເຮົາ

ແບ່ງປັນຄຳພະຍານຂອງເຮົາຂໍໃຫ້ເຮົາໃຊ້ຄຳສັບຄຣິດສຕຽນໃຫ້ນ້ອຍທີ່ສຸດເທົ່າທີ່ຈະເປັນໄປໄດ້ເພື່ອຄົນເຫລົ່ານັ້ນທີ່ເຮົາແບ່ງປັນຈະສາມາດເຂົ້າໃຈພຣະກິດຕິຄຸນໄດ້ຢ່າງສັດເຈນຫລາຍທີ່ສຸດ

*ປູກເມັດພັນແຫ່ງພຣະກິດຕິຄຸນ*

ຈື່ໄວ້ວ່າ ປູກເມັດພັນແຫ່ງພຣະກິດຕິຄຸນ!! ຖ້າທ່ານບໍ່ປູກທ່ານກໍຈະບໍ່ໄດ້ເກັບກ່ຽວ ຖ້າທ່ານປູກພຽງເລັກນ້ອຍທ່ານກໍຈະເກັບກ່ຽວໄດ້ພຽງເລັກນ້ອຍ ຖ້າທ່ານປູກຫລາຍກໍຈະເກັບກ່ຽວໄດ້ຫລາຍ ພຣະເຈົ້າຈະອວຍພອນໃຫ້ທ່ານໄດ້ເກັບກ່ຽວຢ່າງຍິ່ງໃຫຍ່ ທ່ານຢາກໄດ້ການເກັບກ່ຽວແບບໃດ?

**ຂໍ້ພຣະຄຳພີທ່ອງຈຳ**

**1 ໂກຣິນໂທ 15:3-4**

**ເຣື່ອງທີ່ເຮົາໄດ້ຮັບໄວ້ແລ້ວນັ້ນ ເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍເປັນເຣື່ອງສຳຄັນທີ່ສຸດຄືວ່າ ພຣະຄຣິດຊົງວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງຫລາຍຕາມທີ່ຂຽນໄວ້ໃນພຣະຄຳພີ ແລະຊົງຖືກວາງໄວ້ ແລ້ວວັນຖ້ວນສາມໄດ້ຖືກຊົງບັນດານໃຫ້ເປັນຄືນຂຶ້ນມາ ຕາມທີ່ຂຽນໄວ້ໃນພຣະຄຳພີ**

- ໃຫ້ທຸກຄົນຍືນຂຶ້ນແລະທ່ອງຂໍ້ພຣະຄຳພີ 10 ຮອບພ້ອມກັນ ໂດຍ 6 ຄັ້ງທຳອິດໃຫ້ຜູ້ເຂົ້າອົບຮົມເບິ່ງຈາກພຣະຄຳພີ ຫລືປື້ມບັນທຶກຂອງຜູ້ເຂົ້າອົບຮົມໄດ້ແລະໃນ 4 ຄັ້ງສຸດທ້າຍໃຫ້ທຸກຄົນທ່ອງຈາກຄວາມຈື່ຈຳ ຜູ້ເຂົ້າອົບຮົມຄວນທ່ອງຊື່ແລະຂໍ້ຂອງພຣະຄຳພີກ່ອນທີ່ຈະທ່ອງເນື້ອຫາໃນແຕ່ລະຄັ້ງ ແລະໃຜທ່ອງແລ້ວກ່ອນກໍໃຫ້ນັ່ງລົງໄດ້ ( ສິ່ງນີ້ຈະຊ່ອຍໃຫ້ຜູ້ເຂົ້າອົບຮົມໃຜແນ່ທີ່ຜ່ານບົດຮຽນໃນຊົ່ວໂມງ **ການອົບຮົມພາກປະຕິບັດ**

## ການອົບຮົມພາກປະຕິບັດ

- ແຈ້ງກັບຜູ້ເຂົ້າອົບຮົມວ່າ ທ່ານຕ້ອງການໃຫ້ພວກເຂົາຂຽນຄຳພະຍານລົງໃນປື້ມບັນທຶກຂອງພວກເຂົາໂດຍໃຊ້ໂຄງຮ່າງຕາມທີ່ທ່ານສອນພວກເຂົານັ້ນພວກເຂົາມີເວລາພຽງ 10 ນາທີໃນການຂຽນຄຳພະຍານ ແລ້ວທ່ານຕ້ອງເອີ້ນບາງຄົນໃນກຸ່ມໃຫ້ມາແບ່ງປັນ

- ເມື່ອຄົບ 10 ນາທີແລ້ວ ຂໍໃຫ້ຜູ້ເຂົ້າອົບຮົມວາງປາກກາແລະສໍລົງ ບອກພວກເຂົາວ່າທ່ານຈະເອີ້ນບາງຄົນອອກມາແບ່ງປັນກັບຄົນອື່ນໆໃນກຸ່ມ ຍຸດຈັກ 2 ວິນາທີ ແລ້ວປະກາດແຈ້ງວ່າທ່ານຈະເປັນຄົນແບ່ງປັນຄຳພະຍານໃຫ້ກັບກຸ່ມທ່ານຈະເຫັນພວກເຂົາທຳທ່າໂລ່ງໃຈໄດ້ທັນທີ!!

- ແບ່ງປັນຄຳພະຍານຂອງທ່ານໂດຍໃຊ້ໂຄງຮ່າງທີ່ກ່າວມາຂັ້ນຕົ້ນໃນບົດນີ້ ເມື່ອແບ່ງປັນຄຳພະຍານຈົບແລ້ວ ຂໍໃຫ້ທ່ານທົບທວນຕາມໂຄງຮ່າງໄປແຕ່ລະຂັ້ນຕອນ ຖາມຜູ້ເຂົ້າອົບຮົມວ່າທ່ານໄດ້ແບ່ງປັນຄຳພະຍານຢ່າງຖືກຕ້ອງຫລືບໍ່

- ລະຫວ່າງການອົບຮົມພາກປະຕິບັດບົດຮຽນນີ້ ທ່ານຈະຕ້ອງຄອຍເບິ່ງເວລາທີ່ຜູ້ເຂົ້າອົບຮົມໃຊ້  ໃຫ້ຜູ້ເຂົ້າອົບຮົມຈັບຄູ່ແລະບອກພວກເຂົາວ່າເຂົາຈະຕ້ອງແບ່ງປັນຄຳພະຍານໃຫ້ແກ່ກັນແລະກັນໂດຍໃຊ້ເວລາຄົນລະ 3 ນາທີ

- ຂໍໃຫ້ຄົນທີ່ສຽງດັງທີ່ສຸດໃນແຕ່ລະກຸ່ມເປັນຜູ້ນຳ ( ຄົນທີ່ເລີ້ມຕົ້ນກ່ອນ )

- ຂໍໃຫ້ຈັບເວລາຄູ່ທຳອິດແລະເວົ້າວ່າ " ຍຸດ " ເມື່ອຄົບ 3 ນາທີ  ຖາມຜູ້ເຂົ້າອົບຮົມວ່າຄູ່ຂອງພວກເຂົາໄດ້ທຳຕາມໂຄງຮ່າງແລະໃຊ້ແນວທາງ 4 ຢ່າງໃນການແບ່ງປັນຄຳພະຍານທີ່ເຕັມໄປດ້ວຍລິດອຳນາດູຫລືບໍ່  ແລ້ວຈຶ່ງຂໍໃຫ້ຄູ່ທີ 2 ແບ່ງປັນ 3 ນາທີ ຂໍໃຫ້ຜູ້ເຂົ້າອົບຮົມຕອບສະໜອງອີກຄັ້ງ ເມື່ອທັງຄູ່ໄດ້ແບ່ງປັນແລ້ວ ຂໍໃຫ້ຜູ້ເຂົ້າອົບຮົມປ່ຽນຄູ່ແລະກຳນົດວ່າໃຜມີສຽງດັງທີ່ສຸດແລະຝຶກແບ່ງປັນຄຳພະຍານອີກຄັ້ງ ພະຍາຍາມໃຫ້ທຸກຄົນຈັບຄູ່ໃຫ້ໄດ້ຢ່າງນ້ອຍ 4 ຄັ້ງ

- ຫລັງຈາກສອນບົດຮຽນໃຫ້ແກ່ກັນແລະກັນແລ້ວ ຂໍໃຫ້ຜູ້ເຂົ້າອົບຮົມຄິດເຖິງຄົນບາງຄົນທີ່ພວກເຂົາຈະແບ່ງປັນບົດຮຽນນີ້ຫລັງຈາກຈົບການອົບຮົມ ຂໍໃຫ້ພວກເຂົາຂຽນຊື່ຄົນນັ້ນໄວ້ໃນເຈ້ຍບົດຮຽນໜ້າທຳອິດ

**ເກືອແລະນ້ຳຕານ**

- ໃຊ້ພາບປະກອບການອະທິບາຍນີ້ໃນຊ່ວງເວລາຂອງກາຍຕອບສະໜອງເພື່ອຍ້ຳເຖິງຄວາມສຳຄັນຂອງການແບ່ງປັນຈາກໃຈ

- ໝາກໄມ້ສົດແລະສຸກຍ່ອມມີລົດຊາດດີສະເໝີ! " ມັນຫວານແຊບຊື່ນໃຈ " ເມື່ອເຮົາຄິດເຖິງໝາກນັດ ສີກເຫລືອງອ່ອນມັນເຮັດໃຫ້ເຮົາກືນນ້ຳລາຍ ຢ່າງໃດກໍ່ຕາມ

ເຮົາຮູ້ວິທີທີ່ເຮັດໃຫ້ໝາກໄມ້ມີລົດຊາດດີຂື້ນອີກ ໂດຍການເຕີມນໍ້າຕານເຂົ້າໄປແລະເກືອ ພິກຝຸ່ນນໍາ!!! ມັນແຊບອີ່ຫລີສຸດຍອດ

- ໃນທໍານອງດຽວກັນ ບໍ່ວ່າເມື່ອໃດກໍຕາມທີ່ທ່ານສອນບົດຮຽນໜື່ງຫລືແບ່ງປັນພຣະກິດຕິຄຸນ ພຣະວາຈະນະຂອງພຣະເຈົ້າດີສະເໝີ ກໍເໝືອນກັບໝາກໄມ້ເຮົາຄວນກິນແລະຮູ້ວ່າພຣະເຈົ້າຊົງດີ ເມື່ອທ່ານແບ່ງປັນຈາກໃຈຂອງທ່ານພ້ອມກັບຄວາມຮູ້ສືກທີ່ແທ້ຈິງມັນເໝືອນກັບທ່ານໄດ້ເຕີມນໍ້າຕານເຂົ້າໄປ ແລະເກືອເຂົ້າໄປພິກຝຸ່ນນໍາລົງໄປໃນໝາກໄມ້ ມັນຈະເຮັດໃຫ້ລົດຊາດແຊບຫລາຍເປັນພິເສດ ດັ່ງນັ້ນໃນຄັ້ງໜ້າເມື່ອທ່ານແບ່ງປັນກັບຄູ່ຂອງທ່ານ ເຮົາຕ້ອງການໃຫ້ທ່ານເພີ່ມເກືອ,ນໍ້າຕານ,ພິກຝຸ່ນເຂົ້າໄປໃນສິ່ງທີ່ທ່ານເວົ້າຫລືແບ່ງປັນນັ້ນ

## ຈົບບົດຮຽນ

### ໃຜທີ່ຂຽນລາຍຊື່ຄົນທີ່ຫລົງຫາຍສີ່ສິບຄົນໄດ້ໄວທີ່ສຸດ?

- ເຮົາກໍາລັງທໍາການທົດສອບ ດັ່ງນັ້ນເຮົາຈື່ງຕ້ອງຕຽມໂຕກັນກ່ອນ ເຮົາຈະໃຫ້ລາງວັນແກ່ຄົນທີ່ຊະນະ ທີ1 ທີ 2 ແລະ ທີ່3

- ຂໍໃຫ້ແຕ່ລະຄົນເອົາປື້ມບັນທຶກອອກມາຄົນລະຫົວຂຽນໝາຍເລກ 1-40 ເອົາໄວ້ ແລະເມື່ອທ່ານໃຫ້ສັນຍານໂດຍເວົ້າວ່າ “ ເລີ້ມໄດ້ “ ກໍໃຫ້ທຸກຄົນຂຽນລາຍຊື່ຂອງຄົນທີ່ບໍ່ເຊື່ອ 40 ຄົນທີ່ພວກເຂົາຮູ້ຈັກລົງໄປໃນປື້ມ ຖ້າຫາກພວກເຂົາຈື່ຊື່ບໍ່ໄດ້ ພວກເຂົາສາມາດຂຽນຢ່າງອື່ນທີ່ເປັນສັນຍາລັກເຖິງຄົນນັ້ນໆເຊັ່ນ “ ຮ້ານເສີມສວຍ ” ຫລື “ ໄປສະນີ ” ຢ່າໃຫ້ເຂົາຂຽນກ່ອນທີ່ທ່ານຈະໃຫ້ສັນຍານ ( ບາງຄົນອາດຖືກທົດລອງໃຫ້ເລີ້ມຕົ້ນຂຽນໃນຂະນະທີ່ທ່ານກໍາລັງບອກກະຕິກາ ສະນັ້ນແລ້ວຂໍໃຫ້ຜູ້ເຂົ້າອົບຮົມທຸກຄົນຍົກປົກຫລືສໍຂື້ນໄວ້ເໜືອຫົວໃນຂະນະທີ່ທ່ານກໍາລັງແນະນໍາຢູ່ນັ້ນ ) ຕໍ່ຈາກນັ້ນໃຫ້ເລີ້ມຕົ້ນການທົດສອບແລະເມື່ອໃຜແລ້ວກ່ອນກໍໃຫ້ລຸກຂື້ນຢືນພ້ອມກັນກັບລາຍຊື່ຂອງພວກເຂົາ ໃຫ້ລາງວັນແກ່ຄົນທີ່ຂຽນແລ້ວເປັນຄົນທໍາອິດ ທີສອງແລະທີສາມ

- ມີສອງເຫດຜົນຫລັກໆ ທີ່ຜູ້ເຊື່ອອ້າງວ່າພວກເຂົາບໍ່ສາມາດແບ່ງປັນຄວາມເຊື່ອຂອງພວກເຂົາ ຄື ພວກເຂົາບໍ່ຮູ້ວ່າຈະແບ່ງປັນຢ່າງໃດ ແລະພວກເຂົາບໍ່ຮູ້ວ່າຈະແບ່ງປັນກັບໃຜ ໃນບົດຮຽນນີ້ ເຮົາໄດ້ກຳຈັດບັນຫາທັງສອງຢ່າງນີ້ແລ້ວ ຕອນທີ່ທ່ານຮູ້ແລ້ວວ່າຈະແບ່ງປັນພຣະກິດຕິຄຸນຢ່າງໃດແລະມີລາຍຊື່ຄົນທີ່ທ່ານຈະແບ່ງປັນນຳນັ້ນໄວ້ແລ້ວ

- ຂໍໃຫ້ຜູ້ເຂົ້າອົບຮົມຕິດດາວໄວ້ຂ້າງລາຍຊື່ຫ້າຄົນທີ່ພວກເຂົາຈະແບ່ງປັນຄຳພຍານນັ້ນ ໜູນໃຈໃຫ້ພວກເຂົາເປັນພຍານໃນອາທິດໜ້າ

- ແນມເບິ່ງນີ້ວຂອງທ່ານ ນີ້ວທັງຫ້ານີ້ວຂອງທ່ານສາມາດເຕືອນຄວາມຈຳໃຫ້ທ່ານຄິດເຖິງຫ້າຄົນທີ່ຍັງບໍ່ທັນເຊື່ອໃຫ້ທ່ານອະທິຖານເພື່ອພວກເຂົາທຸກວັນ ເມື່ອທ່ານກຳລັງລ້າງຈານ ຂຽນໜັງສື ຫລືພິມງານໃນຄອມພິວເຕີ ຂໍໃຫ້ນີ້ວທັງຫ້ານີ້ວນີ້ເຕືອນທ່ານໃຫ້ອະຖິຖານ

- ຂໍໃຫ້ຜູ້ເຂົ້າອົບຮົມໃຊ້ເວລາອະທິຖານອອກສຽງໃນກຸ່ມສຳລັບຄົນທີ່ຫລົງຫາຍໃນບາຍລາຍຊື່ຂອງພວກເຂົາ

- ຫລັງຈາກອະທິຖານແລ້ວ ຂໍໃຫ້ທ່ານແຈກເຂົ້າໜົມອົມໃຫ້ກັບທຸກຄົນເປັນລາງວັນແລ້ວເວົ້າວ່າ " ເວລານີ້ເຮົາທຸກຄົນເປັນຜູ້ໄຊຊະນະເພາະເຮົາຮູ້ວິທີແບ່ງປັນພຣະກິດຕິຄຸນແລະຮູ້ວ່າໃຜຄົນອື່ນທີ່ເຮົາຈະແບ່ງປັນກັບພວກເຂົາ "

**ບັນທຶກ**

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 9**

**ການເຮັດຕາມແບບຢ່າງ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ
- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນຳຮ້ອງເພງນະມັດສະການ 2 ເພງ

**ການອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ
- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ການອົບຮົມພາກຄວາມຮູ້**

*ທົບທວນ*

**1. ພາບທັງ 8 ພາບທີ່ຊ່ວຍໃຫ້ເຮົາເຮັດຕາມແບບຢ່າງພຣະເຢຊູ**

ທະຫານ, ຜູ້ສະແຫວງຫາ, ຜູ້ລ້ຽງ, ຜູ້ຫວ່ານ, ພຣະບຸດ, ຜູ້ຮັບໃຊ້, ຜູ້ອາລັກຂາ

**2. ການທະວີຄູນ**

- ສາມສິ່ງທີ່ຜູ້ອາລັກຂາຄວນເຮັດມີຫຍັງແນ່?
- ຄຳສັ່ງທຳອິດທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?
- ຄຳສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?

- ທະເລສາບສອງແຫ່ງໃນອິດສະຣາເອນມີຊື່ວ່າແນວໃດ?

- ເປັນຫຍັງທະເລສາບສອງແຫ່ງຈຶ່ງມີຄວາມແຕກຕ່າງກັນຫລາຍ?

- ທ່ານຢາກເປັນເໝືອນທະເລສາບແຫ່ງໃດ?

**3. ຄວາມຮັກ**

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່?

- ຄໍາສັ່ງທີ່ສໍາຄັນທີ່ສຸດເພື່ອສອນຄົນອື່ນຄືຫຍັງ?

- ຄວາມຮັກມາຈາກໃສ?

- ການນະມັດສະການແບບງ່າຍຄືຫຍັງ?

- ເປັນຫຍັງເຮົາຈຶ່ງຕ້ອງມີການນະມັດສະການແບບງ່າຍ?

- ການນະມັດສະການແບບງ່າຍຈໍາເປັນຕ້ອງໃຊ້ຄົນຈໍານວນເທົ່າໃດ?

**4. ການອະທິຖານ**

- ສາມສິ່ງທີ່ຜູ້ຊອບທໍາຄວນເຮັດມີຫຍັງແນ່?

- ເຮົາຄວນອະທິຖານຢ່າງໃດ?

- ພຣະເຈົ້າຕອບຄໍາອະທິຖານຂອງເຮົາຢ່າງໃດແນ່?

- ເບີໂທລະສັບຂອງພຣະເຈົ້າແມ່ນຫຍັງ?

**5. ການເຊື່ອຟັງ**

- ສາມສິ່ງທີ່ຜູ້ຮັບໃຊ້ຄວນເຮັດມີຫຍັງແນ່?

- ໃຜເປັນຜູ້ມີສິດອໍານາດສູງສຸດ?

- ຄຳສັ່ງສີ່ຢ່າງທີ່ພຣະເຢຊູຊົງໃຫ້ແກ່ຜູ້ທີ່ເຊື່ອທຸກຄົນມີຫຍັງແນ່?

- ເຮົາຄວນເຊື່ອຟັງພຣະເຢຊູຢ່າງໃດ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ກັບເຮົາ?

## 6. ການດຳເນີນຊີວິດ

- ສາມສິ່ງທີ່ພຣະບຸດຄວນເຮັດມີຫຍັງແນ່?

- ແມ່ນຫຍັງຄືແຫຼ່ງແຫ່ງລິດອຳນາດໃນການທຳພຣະຣາຊກິດຂອງພຣະເຢຊູ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດກ່ອນຖືກຄຶງທີ່ກາງແຂນ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດຫລັງຈາກເປັນຄືນມາຈາກຄວາມຕາຍ?

- ຄຳສັ່ງສີ່ຢ່າງທີ່ໃຫ້ເຮົາເຊື່ອຟັງກ່ຽວກັບພຣະວິນຍານບໍລິສຸດຄືຫຍັງ?

## 7. ການອອກໄປ

- ສາມສິ່ງທີ່ຜູ້ສະແຫວງຫາຄວນເຮັດມີຫຍັງແນ່?

- ພຣະເຢຊູມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?

- ເຮົາມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?

- ພຣະເຢຊູກຳລັງທຳງານບ່ອນ?

- ອີກທີ່ໜຶ່ງທີ່ພຣະເຢຊູຊົງທຳງານຢູ່ຄືທີ່ໃດ?

## 8. ການແບ່ງປັນ

- ສາມສິ່ງທີ່ທະຫານຄວນເຮັດມີຫຍັງແນ່?

- ເຮົາເອົາຊະນະຊາຕານໄດ້ຢ່າງໃດ?

- ໂຄງຮ່າງຄຳພຍານທີ່ເຕັມໄປດ້ວຍລິດອຳນາດຄືຫຍັງ?

- ແນວທາງທີ່ສຳຄັນຕໍ່ການປະຕິບັດຕາມຄືຫຍັງ?

**ພຣະເຢຊູຊົງມີພຣະລັກສະນະແບບໃດ?**

**ມັດທາຍ 13:26-37**

ແລ້ວພຣະເຢຊູໄດ້ສະເດັດໄປຈາກຄົນເຫລົ່ານັ້ນໄປໃນເຮືອນ ພວກສາວົກມາເຝົ້າພຣະອົງທູນວ່າ " ຂໍທ່ານໂຜດອະທິບາຍໃຫ້ພວກຂ້ານ້ອຍເຂົ້າໃຈຄຳອຸປມາເຣື່ອງເຂົ້ານົກໃນນານັ້ນແດ່ " ພຣະອົງຊົງຕອບເຂົາວ່າ " ຜູ້ຫວ່ານເມັດດີນັ້ນຄືບຸດມະນຸດ "

**ພຣະເຢຊູເປັນຜູ້ຫວ່ານແລະພຣະເຈົ້າຊົງເປັນຜູ້ເກັບກ່ຽວ**

ຜູ້ຫວ່ານ ( ຫວ່ານເມັດພັນດ້ວຍມື )

**ສາມສິ່ງທີ່ຜູ້ຫວ່ານຄວນເຮັດມີຫຍັງແດ່?**

**ມາຣະໂກ 4:26-29**

ພຣະອົງຊົງກ່າວວ່າ " ຣາຊອານາຈັກຂອງພຣະເຈົ້າປຽບເຫມືອນຄົນຫນຶ່ງທີ່ຫວ່ານກ້າລົງໃນດິນ ແລ້ວກາງຄືນກໍນອນຫລັບ ກາງເວັນກໍຕື່ນຂຶ້ນ ຝ່າຍກ້ານັ້ນມັນງອກຈະເຣີນຂຶ້ນຢ່າງໃດລາວກໍບໍ່ຮູ້ຈັກ ເພາະຂີ້ດິນເອງເຮັດໃຫ້ເກີດຜົນຄືເປັນລຳຕົ້ນກ່ອນພາຍຫລັງກໍອອກຮວງ ແລ້ວກໍມີເມັດເຕັມຮວງ ຄັນສຸກແລ້ວລາວກໍໃຊ້ຄົນໄປກ່ຽວທັນທີ ເພາະວ່າເຖີງຣະດູກ່ຽວແລ້ວ "

1. ຜູ້ຫວ່ານປູກເມັດພັນທີ່ດີ

2. ຜູ້ຫວ່ານເອົາໃຈໃສ່ທົ່ງນາຂອງພວກເຂົາ

3. ຜູ້ຫວ່ານຄາດຫວັງການເກັບກ່ຽວ

**ພຣະເຢຊູເປັນຜູ້ຫ່ວານແລະຊົງມີຊີວິດພາຍໃນເຮົາ ພຣະອົງຊົງປູກເມັດພືດທີ່ດີໃນຫົວໃຈຂອງເຮົາ ໃນຂະນະທີ່ຊາຕານຕ້ອງການປູກເມັດພັນທີ່ບໍ່ດີ ເມັດພັນທີ່ພຣະເຢຊູປູກນຳເຮົາໄປສູ່ຊີວິດອັນຕະຫລອດໄປເປັນນິດ ເມື່ອເຮົາທຳຕາມຢ່າງພຣະອົງ**

ເຮົາຈະເປັນຜູ້ຫວ່ານດ້ວຍເຊັ່ນກັນ ເຮົາຈະປູກເມັດພັນທີ່ດີແຫ່ງພຣະກິດຕິຄຸນ ເຮົາຈະເອົາໃຈໃສ່ທົ່ງນາທີ່ພຣະເຈົ້າຊົງສົ່ງເຮົາໄປ ແລະເຮົາຈະຄາດຫວັງການເກັບກ່ຽວຄັ້ງຍິ່ງໃຫຍ່

ສີ່ຮູບແບບທີ່ຜູ້ຄົນຕອບສະໜອງຕໍ່ການຝຶກອົບຮົມຄືຫຍັງ?

ພຣະເຢຊູສອນວ່າຜູ້ຄົນຕອບສະໜອງຕໍ່ການຝຶກອົບຮົມແຕກຕ່າງກັນ ພວກເຂົາຈະຕອບສະໜອງໜຶ່ງໃນສີ່ຮູບແບບນີ້

**ມັດທາຍ 13:3-9**

ແລ້ວພຣະອົງຊົງກ່າວກັບເຂົາຫລາຍປະການເປັນຄຳອຸປມາວ່າ “ ເບິ່ງແມ ມີຄົນໜຶ່ງອອກໄປຫວ່ານພືດ ເມື່ອກຳລັງຫວ່ານຢູ່ນັ້ນລາງເມັດກໍຕົກຕາມທາງ ແລ້ວນົກກໍມາກິນເສັຽ ລາງເມັດກໍຕົກໃສ່ບ່ອນຫີນຫລາຍດິນໜ້ອຍ ຈຶ່ງງອກຂຶ້ນໂລດເພາະດິນບໍ່ເລິກ ແຕ່ເມື່ອຕາເວັນອອກມາກໍ່ແຫ້ມຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ ລາງເມັດກໍຕົກກາງພຸ່ມໜາມ ໜາມກໍປົ່ງຂຶ້ນຫຸ້ມຮັດເສັຽ ລາງເມັດກໍຕົກໃສ່ດິນດີແລ້ວກໍເກີດຜົນເມັດໜຶ່ງຮ້ອຍຕໍ່, ເມັດໜຶ່ງຫົກສິບຕໍ່, ເມັດໜຶ່ງສາມສິບຕໍ່, ຜູ້ໃດມີຫູຈົ່ງຟັງເອົາ ”

*ຕົກຕາມທາງ*

- ບາງຄົນຈະຮຽນຮູ້ວິທີການເຮັດຕາມຢ່າງພຣະເຢຊູໃນບົດຮຽນເຫລົ່ານີ້ ແຕ່ເພາະຄວາມຍາກລຳບາກຂອງຫົວໃຈເຮັດໃຫ້ພວກເຂົາບໍ່ນຳສິ່ງທີ່ເຂົາໄດ້ຮຽນໄປໃຊ້ຫລືໄປສອນຜູ້ອື່ນຕໍ່ ພວກເຂົາອາດມີຄວາມບາບໃນຊີວິດຫລືວິນຍານທີ່ບໍ່ຍອມຮັບການສອນ ຈາກປະສົບການຂອງເຮົາ ມີປະມານ 10% ຂອງຜູ້ເຂົ້າອົບຮົມເປັນແບບນີ້

ຕົກຕາມທາງ ( ເອົາກຳປັ້ນວາງໄວ້ໃນມືອີກຂ້າງໜຶ່ງແລ້ວເດັ້ງກັບ )

*ຕົກໃສ່ບ່ອນຫີນຫລາຍດິນໜ້ອຍ*

- ບາງຄົນຈະຮຽນຮູ້ວິທີການເຮັດຕາມຢ່າງພຣະເຢຊູ ມີຄວາມຕື່ນເຕັ້ນກັບບົດຮຽນ ແຕ່ແລ້ວກໍພະຍາຍາມເຮັດໃນສິ່ງທີ່ຮຽນຮູ້ມາດ້ວຍກຳລັງຂອງຕົນເອງແລະຕ້ອງຜະເຊີນກັບການຕໍ່ຕ້ານ ເຫດເພາະພວກເຂົາເພິ່ງພາກຳລັງຂອງຕົວເອງ ບໍ່ແມ່ນລິດ

ອຳນາດຂອງພຣະວິນຍານບໍລິສຸດ ດັ່ງນັ້ນພວກເຂົາຈະຢຸດສອນຄົນອື່ນຕໍ່ໄປ ຈາກປະສົບການຂອງເຮົາມີປະມານ 30% ຂອງຜູ້ເຂົ້າອົບຮົມໃນກຸ່ມນີ້

ຕົກໃສ່ບ່ອນຫີນຫລາຍດິນໜ້ອຍ ( ເອົາກຳປັ້ນວາງໄວ້ໃນມືອີກຂ້າງໜຶ່ງແລ້ວຈຶ່ງຄາຍກຳປັ້ນອອກຈາກມື )

*ຕົກກາງພຸ່ມໜາມ*

- ບາງຄົນຈະຮຽນຮູ້ວິທີການເຮັດຕາມຢ່າງພຣະເຢຊູ ຝຶກປະຕິບັດຕາມບົດຮຽນ ແລະໄດ້ປະໂຫຍດທຸກຢ່າງຈາກການອົບຮົມ ແຕ່ເພາະຄວາມຮັບຜິດຊອບຫລວງຫລາຍທັງຢູ່ເຮືອນແລະບ່ອນເຮັດວຽກ ພວກເຂົາພົບວ່າຕົນເອງຍຸ້ງເກີນໄປທີ່ຈະອົບຮົມຄົນອື່ນດັ່ງນັ້ນຈຶ່ງຢຸດລົງຫລັງຈາກທີ່ອົບຮົມຄົນອື່ນໄດ້ຈັກສອງຫລືສາມຄົນເທົ່ານັ້ນ ຈາກປະສົບການຂອງເຮົາ ມີປະມານ 40% ຂອງຜູ້ເຂົ້າອົບຮົມທີ່ຢູ່ໃນກຸ່ມນີ້

ຕົກກາງພຸ່ມໜາມ ( ເອົາມືຂ້າງໜຶ່ງຫໍ່ຫຸ້ມອີກຂ້າງໜຶ່ງໄວ້ຄືກັບໜາມທີ່ຫຸ້ມຕົ້ນໄມ້ຢູ່ )

*ຕົກໃສ່ດິນດີ*

- ບາງຄົນຝຶກປະຕິບັດ FJT ( ເອຟ ເຈ ທີ ) ທີ່ບ້ານ ແລະກໍເລີ່ມຕົ້ນຝຶກຄົນອື່ນຕໍ່ໄປທັນທີ ພວກເຂົາຈະປະເມີນຂັ້ນຕອນແລະເຮັດໃຫ້ FJT ( ເອຟ ເຈ ທີ ) ເຂົ້າກັບວັດທະນະທຳຫລາຍຂຶ້ນ ພວກເຂົາຈະເຫັນການປະທຸຂອງລິດອຳນາດຂອງພຣະເຈົ້າ ແລະການເກີດຜົນໃນທົ່ງນາແຫ່ງພັນທະກິດຮັບໃຊ້ຂອງພວກເຂົາ ຈາກປະສົບການຂອງເຮົາມີປະມານ 20% ຂອງຜູ້ເຂົ້າອົບຮົມໃນກຸ່ມນີ້

ຕົກໃສ່ດິນດີ ( ໃສ່ " ເມັດພັນ " ໃນມືແລ້ວທຳທ່າຍົກສູງຂຶ້ນໄປເໝືອນກັບຕົ້ນພືດສູງຕົ້ນໜຶ່ງ )

**ສີ່ສຽງທີ່ເອີ້ນເຮົາໃຫ້ຫວ່ານພຣະກິດຕິຄຸນມີຫຍັງແດ່?**

***ສຽງຈາກເບື້ອງເທິງ***

**ມາຣະໂກ 16:15**

" ທ່ານທັງຫລາຍຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸສໂລກທັງໝົດ "

- ພຣະເຢຊູຊົງເອີ້ນເຮົາຈາກສະຫວັນເພື່ອໃຫ້ແບ່ງປັນພຣະກິດຕິຄຸນ ພຣະອົງຊົງມີສິດອຳນາດສູງສຸດ ແລະເຮົາຄວນເຊື່ອຟັງພຣະອົງທຸກເວລາ ເຊື່ອຟັງຢ່າງທັນທີແລະເຊື່ອຟັງຈາກຫົວໃຈທີ່ຮັກພຣະອົງ

- ນີ້ຄືສຽງຈາກສະຫວັນ

ເບື້ອງເທິງ ( ຊີ້ນີ້ວຂຶ້ນໄປເທິງຟ້າ )

***ສຽງຈາກເບື້ອງລຸ່ມ***

**ລູກາ 16:27-28**

ເສດຖີນັ້ນຈຶ່ງເວົ້າວ່າ " ບິດາເອີຍ, ຖ້າຢ່າງນັ້ນ ຂໍທ່ານໃຊ້ລາຊະໂຣໄປຍັງເຮືອນຂອງພໍ່ຂອງຂ້ານ້ອຍ ເພາະວ່າຂ້ານ້ອຍມີອ້າຍນ້ອງຫ້າຄົນ ເພື່ອໃຫ້ລາຊະໂຣໄປຕັກເຕືອນເຂົາ ເພາະຢ້ານວ່າເຂົາຈະເຂົ້າມາໃນບ່ອນທໍຣະມານເໝືອນກັນ "

- ພຣະເຢຊູຊົງເຫລົ່າເລື່ອງໜຶ່ງກ່ຽວກັບຜູ້ຊາຍຮັ່ງມີທີ່ລົງໄປສູ່ນາຣົກ ໃນເລື່ອງນີ້ບອກວ່າ ຜູ້ຊາຍຮັ່ງມີຕ້ອງການໃຫ້ຊາຍທີ່ຍາກຈົນຊື່ວ່າ ລາຊະໂຣ ອອກຈາກສະຫວັນເພື່ອໄປຫາພີ່ນ້ອງຂອງເຂົາຫ້າຄົນທີ່ຢູ່ໃນໂລກແລະເຫລົ່າເລື່ອງກ່ຽວກັບນາຣົກໃຫ້ພວກເຂົາຟັງ ອັບຣາຮາມເວົ້າວ່າພວກເຂົາໄດ້ຮັບຄຳເຕືອນພຽງພໍແລ້ວ ລາຊະໂຣບໍ່ສາມາດໄປທີ່ໂລກໄດ້ ຄົນທີ່ຕາຍແລ້ວແລະຢູ່ໃນນາຣົກເອີ້ນເຮົາໃຫ້ແບ່ງປັນພຣະກິດຕິຄຸນ

- ນີ້ຄືສຽງຈາກເບື້ອງລຸ່ມ

ເບື້ອງລຸ່ມ ( ຊີ້ນີ້ວລົງໄປທີ່ພື້ນດິນ )

***ສຽງຈາກພາຍໃນ***

**1 ໂກຣິນໂທ 9:16**

ເພາະການທີ່ເຮົາປະກາດຂ່າວປະເສີດນັ້ນ ເຮົາບໍ່ມີເຫດທີ່ຈະອວດອ້າງໄດ້ ເພາະຄວາມຈຳເປັນໄດ້ຕົກໃສ່ເຮົາ ວິບັດຈະເກີດມີແກ່ເຮົາຖ້າເຮົາບໍ່ປະກາດຂ່າວປະເສີດ

- ພຣະວິນຍານບໍລິສຸດທີ່ຢູ່ພາຍໃນໂປໂລຜັກດັນໃຫ້ເຂົາແບ່ງປັນພຣະກິດຕິຄຸນ ພຣະວິນຍານບໍລິສຸດອົງດຽວກັນກໍຊົງເອີ້ນເຮົາໃຫ້ແບກກາງແຂນຂອງເຮົາແລະແບ່ງ ພຣະກິດຕິຄຸນ

- ນີ້ຄືສຽງຈາກພາຍໃນ

ພາຍໃນ ( ໃຊ້ນີ້ວຊີ້ທີ່ຫົວໃຈຂອງທ່ານ )

***ສຽງຈາກພາຍນອກ***

**ກິຈການ 16:9**

ໃນກາງຄືນໂປໂລໄດ້ເຫັນນິມິດ ມີຊາຍຊາວມາເກໂດເນັຽຄົນໜຶ່ງຢືນຢູ່ອ້ອນວອນວ່າ " ຂໍຂ້າມມາເຖິງເມືອງມາເກໂດເນັຽພີ້ ເພື່ອຊ່ອຍພວກຂ້ານ້ອຍແດ່ທ້ອນ "

- ໂປໂລມີແຜນການເດີນທາງໄປຍັງເອເຊັຽ ແຕ່ພຣະວິນຍານບໍລິສຸດບໍ່ຍອມໃຫ້ເຂົາໄປໃນເວລານັ້ນ ເຂົາໄດ້ຮັບນິມິດວ່າມີຊາຍຊາວມາເກໂດເນັຽຄົນໜຶ່ງຮ້ອງອ້ອນວອນໃຫ້ເຂົາໄປແລະເທດສະໜາຂ່າວປະເສີດທີ່ນັ້ນ ກຸ່ມຄົນຮອບໆຕົວເຮົາທີ່ຂ່າວປະເສີດຍັງບໍ່ໄປເຖິງເອີ້ນເຮົາໃຫ້ແບກກາງແຂນແລະແບ່ງປັນພຣະກິດຕິຄຸນ

- ນີ້ຄືສຽງຈາກພາຍນອກ

ພາຍນອກ ( ກວັກມືຕໍ່ກຸ່ມເປັນບອກວ່າ " ມາທີ່ນີ້ " )

- ທົບທວນສີ່ສຽງດ້ວຍການເຮັດສັນຍານມືຫລາຍໆຄັ້ງແລະຖາມຜູ້ເຂົ້າອົບຮົມວ່າແຕ່ລະທ່ານັ້ນສຽງເປັນຂອງໃຜ ມາຈາກໃສ ແລະບອກວ່າຢ່າງໃດ

**ຂໍ້ພຣະຄໍາທ່ອງຈໍາ**

**ລູກາ 8:15**

**ເມັດທີ່ຕົກໃສ່ດິນດີນັ້ນໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມດ້ວຍໃຈເຫລື້ອມໃສສັດທາ ແລ້ວກໍຈົດຈໍາໄວ້ ຈຶ່ງເກີດຜົນໂດຍຄວາມພຽນ**

**ການອົບຮົມມພາກປະຕິບັດ**

- ໃນຊົ່ວໂມງຮຽນຂໍໃຫ້ຜູ້ເຂົ້າອົບຮົມນັ່ງຫັນໜ້າເຂົ້າຫາກັນກັບຄູ່ອະທິຖານ ໂດຍໃຫ້ສລັບກັນສອນບົດຮຽນ

- ໃຫ້ຄົນທີ່ມີເກີບໃຫຍ່ກ່ວາຂອງແຕ່ລະຄູ່ເປັນຜູ້ນໍາ

- ເຮັດຕາມຂັ້ນຕອນອົບຮົມຜູ້ອົບຮົມໃນໜ້າ 9 ເນັ້ນຍໍ້າວ່າທ່ານຕ້ອງການໃຫ້ພວກເຂົາສອນທຸກສິ່ງໃນຊົ່ວໂມງ **ການອົບຮົມພາກຄວາມຮູ້** ດ້ວຍວິທີການທີ່ທ່ານເຮັດ ກວດສອບໃຫ້ແນ່ໃຈວ່າພວກເຂົາໄດ້ຖາມຄໍາຖາມ ອ່ານຂໍ້ພຣະຄໍາພີ ຕອບຄໍາຖາມ ເຮັດສັນຍານມື ຢືນຂຶ້ນແລະທ່ອງຂໍ້ພຣະຄໍາພີ 10 ຮອບພ້ອມກັນເໝືອນຢ່າງທີ່ທ່ານເຮັດນັ້ນ

**- ຫລັງຈາກການສອນໃນແຕ່ລະບົດຮຽນ ຂໍໃຫ້ຜູ້ເຂົ້າອົບຮົມຄິດເຖິງຄົນບາງຄົນທີ່ພວກເຂົາຈະແບ່ງປັນບົດຮຽນນັ້ນຫລັງຈາກການອົບຮົມແລ້ວ ຂໍໃຫ້ພວກເຂົາຂຽນລາຍຊື່ບຸກຄົນເຫລົ່ານັ້ນໃນເຈັ້ຍບົດຮຽນ**

**ຈົບບົດຮຽນ**

## ແຜນທີ່ກິຈການ ບົດທີ 29 - ສ່ວນທີ 3

- ບອກຜູ້ເຂົ້າອົບຮົມໃຫ້ເຮັດເຄື່ອງໝາຍສໍາລັບກຸ່ມໃໝ່ເທິງແຜນທີ່ຂອງພວກເຂົາ ຂໍໃຫ້ຜູ້ເຂົ້າອົບຮົມເຮັດເຄື່ອງໝາຍຢ່າງນ້ອຍສາມພື້ນທີ່ສໍາລັບການສ້າງສາວົກກຸ່ມໃໝ່ເທິງແຜນທີ່ຂອງພວກເຂົາ ພວກເຂົາຄວນຂຽນຊື່ພື້ນທີ່ເຫລົ່ານັ້ນແລະຊື່ຂອງຜູ້ນໍາກຸ່ມ ແລະຊື່ເຈົ້າບ້ານທາງຂ້າງກຸ່ມ ຖ້າຫາກພວກເຂົາໄດ້ເລີ່ມຕົ້ນກຸ່ມແລ້ວ

- ສະແດງຄວາມມຍິນດີແລະໃຫ້ພວກເຂົາຂຽນລົງໄປໃນແຜນທີ່ ຖ້າຫາກພວກເຂົາຍັງບໍ່ໄດ້ເລີ້ມຕົ້ນກຸ່ມ ຂໍໃຫ້ຊ່ວຍພວກເຂົາວິເຄາະເບິ່ງວ່າພຣະເຈົ້າຊົງກໍາລັງທໍາງານທີ່ໃດ

- ນີ້ເປັນຄັ້ງສຸດທ້າຍທີ່ຜູ້ເຂົ້າອົບຮົມຈະໄດ້ຕຽມແຜນທີ່ຂອງພວກເຂົາກ່ອນທີ່ຈະນໍາສະເໜີຖ້າຫາກຈໍາເປັນຂໍໃຫ້ເພີ້ມເວລາໃຫ້ພວກເຂົາສໍາລັບແຜນທີ່ໃນຄັ້ງນີ້

**ບົດຮຽນຂອງຜູ້ສອນ**

**ບົດຮຽນທີ 10**

**ການແບກກາງແຂນ**

**ສັນລະເສີນ**

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມອະທິຖານຂໍພອນ

- ຂໍໃຫ້ຜູ້ໃດຜູ້ໜຶ່ງໃນກຸ່ມນໍາຮ້ອງເພງນະມັດສະການ 2 ເພງ

**ການອະທິຖານ**

- ອະທິຖານເພື່ອຜູ້ທີ່ບໍ່ທັນຮູ້ຈັກກັບພຣະເຈົ້າ

- ອະທິຖານເພື່ອຜູ້ຮຽນທີ່ຈະອາດສອນຕໍ່ໄດ້

**ການນໍາສະເໜີ**

*ທົບທວນ*

**1. ພາບທັງ 8 ພາບທີ່ຊ່ວຍໃຫ້ເຮົາເຮັດຕາມແບບຢ່າງພຣະເຢຊູ**

ທະຫານ, ຜູ້ສແຫວງຫາ, ຜູ້ລ້ຽງ, ຜູ້ຫວ່ານ, ພຣະບຸດ, ຜູ້ຮັບໃຊ້, ຜູ້ອາລັກຂາ

**2. ການທະວີຄູນ**

- ສາມສິ່ງທີ່ຜູ້ອາລັກຂາຄວນເຮັດມີຫຍັງແນ່?

- ຄໍາສັ່ງທໍາອິດທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ຄໍາສັ່ງສຸດທ້າຍທີ່ພຣະເຈົ້າໃຫ້ໄວ້ກັບມະນຸດມີຫຍັງແນ່?

- ເຮົາຈະເກີດຜົນແລະທະວີຄູນໄດ້ຢ່າງໃດ?

- ທະເລສາບສອງແຫ່ງໃນອິດສະລະເອນມີຊື່ວ່າແນວໃດ?

- ເປັນຫຍັງທະເລສາບສອງແຫ່ງຈຶ່ງມີຄວາມແຕກຕ່າງກັນຫລາຍ?

- ທ່ານຢາກເປັນເໝືອນທະເລສາບແຫ່ງໃດ?

**3. ຄວາມຮັກ**

- ສາມສິ່ງທີ່ຜູ້ລ້ຽງຄວນເຮັດມີຫຍັງແນ່?

- ຄຳສັ່ງທີ່ສຳຄັນທີ່ສຸດເພື່ອສອນຄົນອື່ນຄືຫຍັງ?

- ຄວາມຮັກມາຈາກໃສ?

- ການນະມັດສະການແບບງ່າຍຄືຫຍັງ?

- ເປັນຫຍັງເຮົາຈຶ່ງຕ້ອງມີການນະມັດສະການແບບງ່າຍ?

- ການນະມັດສະການແບບງ່າຍຈຳເປັນຕ້ອງໃຊ້ຄົນຈຳນວນເທົ່າໃດ?

**4. ການອະທິຖານ**

- ສາມສິ່ງທີ່ຜູ້ຊອບທຳຄວນເຮັດມີຫຍັງແນ່?

- ເຮົາຄວນອະທິຖານຢ່າງໃດ?

- ພຣະເຈົ້າຕອບຄຳອະທິຖານຂອງເຮົາຢ່າງໃດແນ່?

- ເບີໂທລະສັບຂອງພຣະເຈົ້າແມ່ນຫຍັງ?

**5. ການເຊື່ອຟັງ**

- ສາມສິ່ງທີ່ຜູ້ຮັບໃຊ້ຄວນເຮັດມີຫຍັງແນ່?

- ໃຜເປັນຜູ້ມີສິດອຳນາດສູງສຸດ?

- ຄຳສັ່ງສີ່ຢ່າງທີ່ພຣະເຢຊູຊົງໃຫ້ແກ່ຜູ້ທີ່ເຊື່ອທຸກຄົນມີຫຍັງແນ່?

- ເຮົາຄວນເຊື່ອຟັງພຣະເຢຊູຢ່າງໃດ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ກັບເຮົາ?

## 6. ການດຳເນີນຊີວິດ

- ສາມສິ່ງທີ່ພຣະບຸດຄວນເຮັດມີຫຍັງແນ່?

- ແມ່ນຫຍັງຄືແຫ່ລງແຫ່ງລິດອຳນາດໃນການທຳພຣະຣາຊກິດຂອງພຣະເຢຊູ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດກ່ອນຖືກຄຶງທີ່ກາງແຂນ?

- ພຣະເຢຊູຊົງສັນຍາສິ່ງໃດໄວ້ຕໍ່ຜູ້ທີ່ເຊື່ອກ່ຽວກັບພຣະວິນຍານບໍລິສຸດຫລັງຈາກເປັນຄືນມາຈາກຄວາມຕາຍ?

- ຄຳສັ່ງສີ່ຢ່າງທີ່ໃຫ້ເຮົາເຊື່ອຟັງກ່ຽວກັບພຣະວິນຍານບໍລິສຸດຄືຫຍັງ?

## 7. ການອອກໄປ

- ສາມສິ່ງທີ່ຜູ້ສະແຫວງຫາຄວນເຮັດມີຫຍັງແນ່?

- ພຣະເຢຊູມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?

- ເຮົາມີເກນໃນການຕັດສິນໃຈຢ່າງໃດວ່າຈະຮັບໃຊ້ບ່ອນໃດ?

- ພຣະເຢຊູກຳລັງທຳງານບ່ອນ?

- ອີກທີ່ຫນຶ່ງທີ່ພຣະເຢຊູຊົງທຳງານຢູ່ຄືທີ່ໃດ?

## 8. ການແບ່ງປັນ

- ສາມສິ່ງທີ່ທະຫານຄວນເຮັດມີຫຍັງແນ່?

- ເຮົາເອົາຊະນະຊາຕານໄດ້ຢ່າງໃດ?

- ໂຄງຮ່າງຄຳພຍານທີ່ເຕັມໄປດ້ວຍລິດອຳນາດຄືຫຍັງ?

- ແນວທາງທີ່ສຳຄັນຕໍ່ການປະຕິບັດຕາມຄືຫຍັງ?

**9. ການເຮັດຕາມແບບຢ່າງ**

- ສາມສິ່ງທີ່ຜູ້ຫວ່ານຄວນເຮັດມີຫຍັງແນ່?

- ສີ່ຮູບແບບທີ່ຜູ້ຄົນຕອບສະໜອງຕໍ່ການອົບຮົມມີຫຍັງແນ່?

- ສຽງທີ່ເອີ້ນເຮົາໃຫ້ແບ່ງປັນພຣະກິດຕິຄຸນມີຫຍັງແນ່?

**ຄຳສັ່ງທີ່ພຣະເຢຊູຊົງສັ່ງໃຫ້ຜູ້ເຮັດຕາມຢ່າງພຣະອົງເຮັດທຸກວັນມີຫຍັງແນ່?**

**ລູກາ 9:23**

ແລ້ວພຣະອົງຊົງກ່າວກັບຄົນທັງຫລາຍວ່າ " ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລະຕິດຕາມເຮົາມາ"

- ປະຕິເສດຕົນເອງ ແບກກາງແຂນ ແລະຕາມພຣະເຢຊູ

**ກິຈການບົດທີ 29 ຢູ່ທີ່ໃດ?**

- ກັບໄປເປີດພຣະຄຳພີ ກິຈການ ບົດທີ 29 ຂໍ້ 21 ( ຜູ້ເຂົ້າອົບຮົມຈະເວົ້າວ່າ ພຣະຄຳພີກິຈການມີພຽງແຕ່ 28 ບົດ ເທົ່ານັ້ນ ) ບອກພວກເຂົາວ່າພຣະຄຳພີຂອງພຣະເຈົ້າທ່ານມີ ກິຈະການບົດທີ 29

- ເອີ້ນຜູ້ເຂົ້າອົບຮົມຫລາຍຄົນມາທາງໜ້າ ແລະຊີ້ໄປທີ່ພຣະຄຳພີຂອງພວກເຂົາບ່ອນທ້າຍຂອງ ກິຈການບົດທີ 28 ບອກພວກເຂົາວ່າ ພຣະຄຳພີຂອງພວກເຂົາກໍມີກິຈການບົດທີ 29 ດ້ວຍເຊັ່ນກັນ

- ເວລານີ້ຄື ກິຈການບົດທີ 29 ພຣະເຈົ້າກຳລັງບັນທຶກສິ່ງທີ່ພຣະວິນຍານບໍລິສຸດຊົງກຳລັງທຳຜ່ານເຮົາ ແລະວັນໜຶ່ງເຮົາຈະໄດ້ອ່ານສິ່ງທີ່ບັກທຶກໄວ້ນີ້ ທ່ານຢາກໃຫ້ມັນບອກວ່າຢ່າງໃດ? ນິມິດຂອງທ່ານຄືຫຍັງ? ແຜນທີ່ທີ່ເຮົາໄດ້ເຮັດມານັ້ນຄື " ກິຈການບົດທີ 29 " ແລະເປັນນິມິດສຳລັບສິ່ງທີ່ພຣະເຈົ້າຊົງຕ້ອງການກະທຳໃນຊີວິດຂອງເຮົາ ເຮົາຢາກແບ່ງປັນນິມິດແຫ່ງກິຈການບົດທີ 29 ໃຫ້ກັບທ່ານ

- ແບ່ງປັນ " ນິມິດແຫ່ງກິຈການບົດທີ 29 " ຂອງທ່ານຕໍ່ກຸ່ມ ກວດເບິ່ງໃຫ້ແນ່ໃຈວ່າທ່ານໄດ້ລ້ອມເອົາແນວຄິດຂອງສອງກຸ່ມຄົນ ຄື ຜູ້ທີ່ບໍ່ເຊື່ອແລະຜູ້ທີ່ເຊື່ອ ເຂົ້າໄວ້ແລ້ວ ພຣະເຈົ້າຕ້ອງການໃຫ້ເຮົາແບ່ງປັນພຣະກິດຕິຄຸນໄວ້ກັບຜູ້ທີ່ບໍ່ເຊື່ອແລະອົບຮົມຜູ້ເຊື່ອເຮັດຕາມຢ່າງພຣະຄຣິດສແລະແບ່ງປັນຄວາມເຊື່ອຂອງພວກເຂົາ

- " ແຜນທີ່ກິຈການບົດທີ 29 " ເປັນຕົວແທນຂອງກາງແຂນທີ່ພຣະເຢຊູໄດ້ຊົງເອີ້ນໃຫ້ເຮົາແບກໄວ້ ເວລານີ້ເຮົາຕ້ອງການເຂົ້າສູ່ເວລາອັນບໍລິສຸດໃນການນຳສະເໜີແຜນທີ່ຂອງເຮົາ ອະທິຖານເພື່ອກັນແລະກັນ ແລະອຸທິດຕົວຂອງເຮົາເພື່ອເຮັດຕາມຢ່າງ ພຣະເຢຊູ

## ອະທິຖານເພື່ອແຜນທີ່ ກິຈການບົດທີ 29

- ແບ່ງກຸ່ມຜູ້ເຂົ້າອົບຮົມເປັນກຸ່ມລະ 8 ຄົນ ຂໍໃຫ້ຜູ້ນຳຝ່າຍວິນຍານທີ່ຮູ້ຈັກໃນກຸ່ມຜູ້ເຂົ້າຮ່ວມ FJT ( ເອຟ ເຈ ທີ ) ເປັນຜູ້ນຳຂອງແຕ່ລະກຸ່ມ

*ອະທິບາຍເວລາທີ່ເປັນຂັ້ນຕອນຂອງພັນທະກິດຕໍ່ໄປນີ້ແກ່ຜູ້ເຂົ້າອົບຮົມ*

- ຜູ້ເຂົ້າອົບຮົມວາງແຜນທີ່ກິຈການບົດທີ 29 ຂອງພວກເຂົາໄວ້ກາງຂອງວົງມົນແລະປ່ຽນກັນນຳສະເໜີແຜນທີ່ຕໍ່ກຸ່ມ ຫລັງຈາກນັ້ນໃຫ້ກຸ່ມວາງມືໃສ່ແຜນທີ່ກິຈການບົດທີ 29 ຫລືຜູ້ເຂົ້າອົບຮົມ ແລະອະທິຖານຂໍລິດອຳນາດຈາກພຣະເຈົ້າແລະອວຍພອນພວກເຂົາ

- ທຸກຄົນຄວຍອະທິຖານອອກສຽງພ້ອມກັນ ແລະໃຫ້ຜູ້ນຳກຸ່ມອະທິຖານປິດຕາມທີ່ພຣະວິນຍານຊົງນຳ

- ໃນກໍລະນີນີ້ ຜູ້ເຂົ້າອົບຮົມມ້ວນແຜນທີ່ແລະແບກມັນໄວ້ເທິງບ່າ ແລະໃຫ້ກຸ່ມເວົ້າວ່າ "  ແບກກາງແຂນແລະຕິດຕາມພຣະເຢຊູ " ສາມຄັ້ງພ້ອມກັນ ຫລັງຈາກນັ້ນໃຫ້ຜູ້ເຂົ້າອົບຮົມຄົນຕໍ່ໄປນຳສະເໜີແຜນທີ່ຂອງພວກເຂົາແລະເລີ້ມຕົ້ນຂັ້ນຕອນໃໝ່ອີກຄັ້ງ

- ກ່ອນທີ່ທ່ານຈະເລີ້ມຕົ້ນ ຂໍໃຫ້ຜູ້ເຂົ້າອົບຮົມທົບທວນວ່າ " ແບກກາງແຂນຂອງທ່ານແລະຕິດຕາມພຣະເຢຊູ " ສາມຄັ້ງເໝືອນທີ່ພວກເຂົາທຳຫລັງຈາກທີ່ແຕ່ລະຄົນນຳສະເໜີ ( ສິ່ງນີ້ຈະຊ່ວຍທຸກຄົນຮູ້ປະໂຫຍກທີ່ຈະເວົ້າພ້ອມກັນໄດ້

- ເມື່ອທຸກຄົນໃນກຸ່ມໄດ້ນໍາສະເໜີແຜນທີ່ຂອງພວກເຂົາແລ້ວ ຂໍໃຫ້ຜູ້ເຂົ້າອົບຮົມໄປເຂົ້າຮ່ວມກັບກຸ່ມອື່ນທີ່ຍັງບໍ່ທັນແລ້ວຈົນກວ່າຜູ້ເຂົ້າອົບຮົມທຸກຄົນຈະຮ່ວມກັນເປັນກຸ່ມໃຫຍ່ທີ່ຮ່ວມຜູ້ເຂົ້າອົບຮົມທຸກຄົນດ້ວຍກັນ ເມື່ອຈົບການອົບຮົມຂໍໃຫ້ຮ້ອງເພງນະມັດສະການ ກ່ຽວກັບການອຸທິດຕົວທີ່ມີຄວາມໝາຍເລິກເຊິ່ງຕໍ່ຜູ້ເຂົ້າອົບຮົມໃນກຸ່ມ